ອຸດົມ ຂັດທິຍະ

# ຄວາມຮູ້ກ່ຽວກັບ
# ວຽກງານ
# ແນວໂຮມໃນໄລຍະໃໝ່

1997

ອຸດົມ ຂັດທິຍະ

# ຄວາມຮູ້ກ່ຽວກັບ
# ວຽກງານ
# ແນວໂຮມໃນໄລຍະໃໝ່

# ຄຳນຳ

ມະຫາສາມັກຄີແຫ່ງຊາດ ແມ່ນແນວທາງພື້ນຖານຂອງພັກ ແລະ ລັດເຮົາ: ມະຫາສາມັກຄີທົ່ວປວງຊົນນັ້ນມັນໄດ້ສະແດງອອກໃນທຸກແນວທາງ, ນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ໃນທຸກຂົງເຂດວຽກງານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບສຸກ ແລະ ຕໍ່ກັບພາຍນອກ ເພື່ອປະຕິບັດໜ້າທີ່ດັ່ງກ່າວ, ບັນຫາທີ່ສຳຄັນກວ່າໝູ່ ແມ່ນເຕົ້າໂຮມຄວາມສາມັກຄີປອງດອງວົງຄະນາຍາດແຫ່ງຊາດລາວ ເອກະພາບເຊິ່ງບັນຫານີ້ ພົວພັນເຖິງທັດສະນະຈິນຕະນາການແຫ່ງຄວາມຮັບຮູ້ ທີ່ຕັ້ງ, ບົດບາດ, ເນື້ອໃນ ໜ້າທີ່ ແລະ ວິທີການເຄື່ອນໄຫວວຽກງານ ແນວໂຮມ ໃນໄລຍະໃໝ່, ໃນການປ່ຽນແປງໃໝ່ ຂອງພະນັກງານ ແນວໂຮມທຸກຂັ້ນ, ກະທັ້ງທັງພະນັກງານຈາກທຸກພາກສ່ວນ, ທຸກຂະແໜງການອື່ນໆ, ດ້ວຍເຫດນັ້ນ ເພື່ອຕອບສະໜອງກັບຄວາມຕ້ອງການ ບຳລຸງຍົກລະດັບໃຫ້ພະນັກງານ ໃນວຽກງານແນວໂຮມ ທົ່ວປະເທດ, ແນໃສ່ຫັນປ່ຽນໃໝ່ວຽກງານແນວໂຮມຢ່າງເລິກເຊິ່ງ ຮອບດ້ານ ແລະ ທັນການ, ຂ້າພະເຈົ້າຈຶ່ງໄດ້ຮຽບຮຽງ ປຶ້ມຫົວນີ້ຂຶ້ນ.

ປຶ້ມຫົວນີ້ ໄດ້ແບ່ງອອກເປັນ 2 ພາກໃຫຍ່ ຄື ພາກທີ່ 1 ແມ່ນ "ກ່ຽວກັບຄວາມຮູ້ພື້ນຖານ ແນວໂຮມ ໃນໄລຍະໃໝ່" ແລະ ພາກທີ່ 2 ແມ່ນ "ເຕົ້າໂຮມຄວາມສາມັກຄີ ທົ່ວປວງຊົນ ເປັນເອກະພາບ ແລະ ເພີ່ມທະວີ ແນວໂຮມແຫ່ງຊາດລາວ ເອກະພາບ" ຫຼື ເວົ້າຢ່າງໜຶ່ງ ແມ່ນ "ວຽກງານແນວໂຮມ ໃນພາລະກິດ ປ່ຽນແປງໃໝ່" ປຶ້ມຫົວນີ້ ແມ່ນເປັນພື້ນຖານ ທິດສະດີ ກ່ຽວກັບວຽກງານແນວໂຮມໃນໄລຍະໃໝ່, ເປັນຕົ້ນແມ່ນແນວທາງ ມະຫາສາມັກຄີ ປອງດອງຊາດ. ເນື້ອໃນຂອງປຶ້ມຫົວນີ້ ຄວນຈັດຕັ້ງໃຫ້ພະນັກງານ ແນວໂຮມທຸກຂັ້ນ ໄດ້ຄົ້ນຄວ້າ, ຮ່ຳຮຽນ ເຊື່ອມຊຶມຢ່າງເລິກເຊິ່ງ, ພ້ອມກັນນັ້ນນຳໄປເຜີຍແຜ່ ໃຫ້ທຸກພາກສ່ວນ ເຊື່ອມຊຶມ ເພື່ອພ້ອມກັນ ປະຕິບັດ ໄດ້ຮັບຜົນດີ, ດັ່ງນັ້ນ ປຶ້ມຫົວນີ້ ຈຶ່ງມີຄວາມສຳຄັນ ທັງເປັນ **ຄູ່ມືວຽກງານແນວໂຮມ** ສຳລັບພະນັກງານແນວໂຮມທຸກຂັ້ນ.

ຕົ້ນແມ່ນແນວທາງ ນະໂຍບາຍສາມັກຄີ ປອງດອງຊາດ. ເນື້ອໃນຂອງປຶ້ມຫົວນີ້ ຄວນຈັດຕັ້ງໃຫ້ພະນັກງານ ແນວໂຮມທຸກຂັ້ນ ໄດ້ຄົ້ນຄວ້າ, ຮ່ຳຮຽນ ເຊື່ອມຊຶມຢ່າງເລິກເຊິ່ງ, ພ້ອມກັນນັ້ນນຳໄປເຜີຍແຜ່ ໃຫ້ທຸກພາກສ່ວນ ເຊື່ອມຊຶມ ເພື່ອພ້ອມກັນ ປະຕິບັດ ໄດ້ຮັບໝົນດີ, ດັ່ງນັ້ນ ປຶ້ມຫົວນີ້ ຈຶ່ງມີຄວາມສຳຄັນ ທັງເປັນ <u>ຄູ່ມືວຽກງານແນວໂຮມ</u> ສຳລັບພະນັກງານແນວໂຮມທຸກຂັ້ນ.

ການພິມ ແລະ ເນື້ອໃນກໍ່ງານີ້ສິ່ງໃດຂາດຕົກບົກພ່ອງ ແລະ ບໍ່ທັນສອດຄ່ອງ, ແມ່ນຍິນດີຮັບການຕຳນິສິ່ງຂ່າວ ຈາກທຸກໆທ່ານ, ທັງນີ້ ເພື່ອຂ້າພະເຈົ້າ ຈະໄດ້ປັບປຸງຄືນໃໝ່ໃຫ້ດີກວ່າເກົ່າ.

ວຽງຈັນ, ວັນທີ 24/6/97

ອຸດົມຂັດທິຍະ

ປະທານສູນກາງແນວລາວສ້າງຊາດ

# ຄຳນຳ

## ຂອງຄະນະປັບປຸງເອກະສານ

ເພື່ອຕອບສະໜອງ ກັບຄວາມຕ້ອງການອັນຮີບດ່ວນ ຂອງວຽກງານແນວໂຮມ ໃນໄລຍະໃໝ່, ກ່ອນອື່ນເພື່ອຍົກລະດັບ ແນວຄິດການເມືອງ ໃຫ້ແກ່ພະນັກງານແນວໂຮມທຸກຂັ້ນ ພວກເຮົາຈຶ່ງໄດ້ຈັດພິມ ປຶ້ມ "ກ່ຽວກັບຄວາມຮູ້ພື້ນຖານວຽກງານແນວໂຮມ ໃນໄລຍະໃໝ່" ແລະ "ເຕົ້າໂຮມຄວາມສາມັກຄີ ທົ່ວປວງຊົນ ເປັນເອກະພາບ ແລະ ເພີ່ມທະວີ ແນວໂຮມແຫ່ງຊາດລາວເອກະພາບ" ຂອງ ທ່ານ ອຸດົມ ຂັດທິຍະ, ກົມການເມືອງສູນກາງພັກ, ປະທານແນວລາວສ້າງຊາດ.

ນັບແຕ່ມື້ສ້າງຕັ້ງແນວໂຮມແຫ່ງຊາດ ຂຶ້ນມາ, ພັກເຮົາໄດ້ເອົາໃຈໃສ່ ຕໍ່ວຽກງານນີ້ຕະຫຼອດ, ບັນດາທ່ານຜູ້ນຳຂອງພັກ ແລະ ລັດ ເຊັ່ນ ປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ຈົນຕະຫຼອດເຖິງປະທານ ຄຳໄຕ ສີພັນດອນ ທີ່ເຄົາລົບຮັກ ຍາມໃດກໍໄດ້ໃຫ້ສິດຕິດແທດ ເພື່ອຊີ້ນຳ, ນຳພາ ແນວໂຮມແຫ່ງຊາດ ຢ່າງບໍ່ລົດລະ, ບັນດາບົດຮຽນ ຕົວຈິງກ່ຽວກັບວຽກງານແນວໂຮມ ຂອງພັກເຮົາ ແມ່ນອຸດົມສົມບູນ ທີ່ສຸດ. ບັນດາບົດຮຽນຕົວຈິງເຫຼົ່ານັ້ນ ທ່ານ ອຸດົມ ຂັດທິຍະ, ກົມການເມືອງ ສູນກາງພັກ, ປະທານແນວລາວສ້າງຊາດ ໄດ້ສັງລວມສະຫຼຸບ ຢູ່ໃນປຶ້ມຫົວນີ້ລະອຽດ ແລະ ເລິກເຊິ່ງພໍສົມຄວນ ແລະ ໄດ້ເນັ້ນເຖິງທີ່ຕັ້ງ, ພາລະບົດບາດ, ໜ້າທີ່ສິດຂອບເຂດ, ເນື້ອໃນ ແລະ ຮູບການ, ບັນດາຫຼັກການ, ວິທີການຈັດຕັ້ງ ເຄື່ອນໄຫວ, ບັນດາທັດສະນະໃນການປ່ຽນແປງໃໝ່ວຽກງານແນວໂຮມແຫ່ງຊາດ ໃນພາລະກິດປ່ຽນແປງໃໝ່ ຢ່າງຮອບດ້ານ ຂອງປະເທດພວກເຮົາ.

ໃນປຶ້ມຫົວນີ້ ຍັງໄດ້ສະຫຼຸບ ສັງລວມ ບັນດາບົດຮຽນ ແນວໂຮມອັນປະເສີດຈາກປະເທດ ເພື່ອນບ້ານ ເຊັ່ນ ຫວຽດນາມ ແລະ ຈີນ, ໂດຍສະເພາະ ແມ່ນຈາກແນວຄິດມະຫາສາມັກຄີ ຂອງ ທ່ານປະທານ ໂຮ່ຈີມິນ ເພື່ອຈະໝູນໃຊ້ໃນເງື່ອນໄຂຕົວຈິງ ຂອງປະເທດເຮົາ ໃນໄລຍະໃໝ່, ເພາະສະນັ້ນ, ຄຸນຄ່າ ຂອງປຶ້ມຫົວນີ້ ບໍ່ແມ່ນເປັນພຽງແຕ່ ເອກະສານ ເພື່ອບຳລຸງ ສະເພາະວຽກງານ ແນວໂຮມ ໃຫ້ສຳລັບ ພະນັກງານແນວຂັ້ນຕ່າງໆ ເທົ່ານັ້ນ, ປຶ້ມຫົວນີ້ ຍັງມີຄຸນຄ່າ ດ້ານທິດສະດີ, ດ້ານພຶດຕິກຳ ແລະ ຄຸນຄ່າປະຈັນບານຂອງ ວຽກງານແນວໂຮມ ເຊິ່ງສະແດງອອກໃນທັດສະນະ ຂອງຜູ້ຂຽນ ທີ່ກ້າປະເຊີນໜ້າກັບຄວາມເປັນຈິງ ໃນວຽກງານແນວໂຮມ, ກ້າຮັບ

ເອົາຈຸດດ່ອນ, ຈຸດຂາດຕົກບົກພ່ອງ ດ້ວຍການວິເຄາະລະອຽດຕໍ່ດ້ານດີ ດ້ານອ່ອນ ຂອງວຽກງານແນວໂຮມ ໃນໄລຍະຜ່ານມາ ແລະ ໄດ້ຍົກບັນດາມາດຕາການ ເພື່ອຈະແກ້ໄຂ ຢ່າງເດັດຂາດ. ດັ່ງນັ້ນ, ປຶ້ມຫົວນີ້ ຍັງເປັນ <u>ຄູ່ມືວຽກງານແນວໂຮມ</u>, ທຸກຂັ້ນ.

ໃນວິວັດທະນາການ ຄົ້ນຄວ້າຮ່ຳຮຽນ ເພື່ອເຊື່ອມຊຶມເນື້ອໃນປຶ້ມຫົວນີ້, ສິ່ງສຳຄັນທີ່ສຸດກໍ່ຄືແຕ່ລະຄົນ ຈະໄດ້ສົມທຽບກັບຕົນເອງ ດ້ານດີ ດ້ານອ່ອນ ໃນຄວາມຮັບຮູ້ຕໍ່ວຽກງານແນວໂຮມ ແລະ ວາງມາດຕະການແກ້ໄຂບັນດາຈຸດຄົງຄ້າງ ດ້ວຍຕົນເອງ ຢ່າງຕັ້ງໃຈ.

ໃນໃນໂອກາດຈັດພິມປຶ້ມຫົວນີ້, ຄະນະປັບປຸງເອກະສານ ວຽກງານ ແນວຄິດ ຂອງສູນກາງແນວລາວສ້າງຊາດ ຂໍສະແດງຄວາມຊົມເຊີຍ ຢ່າງສຸດອົກສຸດໃຈ ແລະ ຄວາມຮູ້ບຸນຄຸນ ຢ່າງສູງ ຕໍ່ ທ່ານ ອຸດົມ ຂັດທິຍະ, ກົມການເມືອງສູນກາງພັກ, ປະທານແນວລາວສ້າງຊາດ ທີ່ໄດ້ອຸທິດ ສະຕິປັນຍາ, ມັນສະໝອງ ພ້ອມທັງເຫື່ອແຮງ ກຳລັງກາຍ ກຳລັງໃຈ ໂດຍບໍ່ຮູ້ອິດຮູ້ເມື່ອຍເພື່ອຮຽບຮຽງປຶ້ມຫົວນີ້ຂຶ້ນມາ ແລະ ໄດ້ທັນການ; ພວກເຮົາເຊື່ອໝັ້ນວ່າ ປຶ້ມຈະນຳຄຸນປະໂຫຍດຫຼາຍຢ່າງມາສູ່ທ່ານຜູ້ອ່ານນອກ ແລະ ໃນອົງການແນວໂຮມ.

ໃນການຮຽບຮຽງກວດແກ້ ແລະ ຈັດພິມບໍ່ອາດຈະຫຼີກລ້ຽງສິ່ງຂາດຕົກບົກພ່ອງ, ເພາະສະນັ້ນ ຄະນະພວກເຮົາ ມີຄວາມຍິນດີ ເປັນຢ່າງຍິ່ງ ທີ່ທ່ານຜູ້ອ່ານ ໃຫ້ການຕຳນິສິ່ງຂ່າວໄປໃຫ້ພວກເຮົາ ເພື່ອຈະໄດ້ປັບປຸງໃຫ້ດີກວ່າເກົ່າ.

ວຽງຈັນ, ວັນທີ 19/6/1997

ຕ. ຄະນະປັບປຸງເອກະສານ



ດຣ. ສົມສີ ໄຊຫວ່າງຈ້າງ

# ເອກະສານ

# ມູນເຊື້ອແຫ່ງການເຕົ້າໂຮມ ຄວາມສາມັກຄີ ແລະ ສ້າງຕັ້ງແນວໂຮມແຫ່ງຊາດ

---

ພາກນີ້, ຈະເວົ້າເຖິງບັນດາທັດສະນະພື້ນຖານ ຂອງພັກເຮົາທີ່ກອບມາໄດ້ຈາກມູນເຊື້ອແຫ່ງປະຫວັດສາດໃນການກຳເນີດ ການຄົງຕົວ ແລະ ຂະຫຍາຍຕົວຂອງຊາດລາວເຮົາ, ແມ່ນຕົ້ນໄປດ້ວຍມູນເຊື້ອແຫ່ງການອອກແຮງງານຕໍ່ສູ້ກັບ ທຳມະຊາດ, ຕໍ່ສູ້ກັບສັດຕູພາຍ ນອກ ທີ່ແຊກແຊງຮຸກຮານຫວັງຢາກເອົາເປັນເມືອງຂຶ້ນ ແລະ ຢາກກືນກິນ. ການເຕົ້າໂຮມຄວາມສາມັກຄີ ໃນວົງຄະນະຍາດແຫ່ງຊາດແມ່ນເປັນກຳລັງແຮງ ໃນການຕໍ່ສູ້ເພື່ອປົກປັກຮັກສາ ປະເທດຊາດ ແລະ ພັດທະນາສ້າງສາປະເທດຊາດໃຫ້ຮຸ່ງເຮືອງ. ດັ່ງນັ້ນ ບັນດາທັດສະນະພື້ນຖານຂອງພັກເຮົາຄືດັ່ງຕໍ່ໄປນີ້ :

## <u>ພາກທີ ໜຶ່ງ</u>

## <u>ບັນດາທັດສະນະພື້ນຖານ</u>

## <u>ຂອງພັກປະຊາຊົນປະຕິວັດລາວ</u>

## <u>ກ່ຽວກັບ "ມະຫາສາມັກຄີ"</u>

I. <u>ການເຕົ້າໂຮມຄວາມສາມັກຄີແມ່ນມູນເຊື້ອອັນປະເສີດທີ່ສຸດຂອງຊາດລາວເຮົາແມ່ນບົດຮຽນໃຫຍ່ທີ່ສຸດຂອງການປະຕິວັດປະເທດເຮົາ.</u>

ຜ່ານຂະບວນວິວັດແຫ່ງປະຫວັດສາດພັນກວ່າປີມານີ້, ມັນໄດ້ຊີ້ໃຫ້ວົງຄະນາຍາດ ແຫ່ງຊາດລາວ ເອກະພາບນີ້ເຫັນວ່າ ຊາດລາວ

ເຮົາ ກຳເນີດຂຶ້ນ, ຄົງຕົວ ແລະ ຂະຫຍາຍຕົວແມ່ນເຕັມໄປດ້ວຍການອອກແຮງງານ ດ້ວຍຄວາມດຸໝັ່ນ, ພາກພຽນ ໃນການຕໍ່ສູ້ກັບທຳມະຊາດ, ການຕໍ່ສູ້ ທີ່ເຕັມໄປດ້ວຍ ຄວາມເສຍສະຫຼະ ອັນດຸເດືອດ ອາດຫານ ເພື່ອຕ້ານການແຊກແຊງ ຮຸກຮານຂອງ ພາຍນອກ, ບົນພື້ນຖານອັນນັ້ນ ມັນໄດ້ ກຳເນີດເກີດມີຈິດໃຈໂຮມແຮງກັນ, ເຕົ້າໂຮມຄວາມສາມັກຄີຊ່ວຍເຫຼືອກັນ, ຮູ້ອີງໃສ່ກັນ ແລະ ຄວາມເມດຕາກາລຸນນາ ຊຶ່ງກັນແລະ ກັນ, ມາຮອດດຽວນີ້, ແຕ່ລະຄົນ ໃນແຕ່ລະເຜົ່າຊົນ ໃນວົງຄະນາຍາດ ແຫ່ງຊາດລາວ ກໍ່ລ້ວນແຕ່ມີຄວາມຮູ້ສຶກວ່າ "ສາມັກຄີແມ່ນມີຊີວິດຢູ່, ແບ່ງແຍກແຕກສາມັກຄີ ແມ່ນຕາຍ" ຈິດໃຈສາມັກຄີນີ້ ມັນໄດ້ກຳເນີດເກີດຂຶ້ນ ແລະ ຂະຫຍາຍຕົວ ແຕ່ຄົນລຸ້ນນີ້ໄປຫາລຸ້ນຄົນໃໝ່, ແຕ່ຍຸກໃໝ່ນີ້ ຫາຍຸກສະໄໝອື່ນ ແລະ ໄດ້ກາຍເປັນ ມູນເຊື້ອອັນປະເສີດທີ່ສຸດຂອງຊາດເຮົາ, ມັນໄດ້ກາຍເປັນພື້ນຖານ ອັນໜັກແໜ້ນໃຫ້ວົງຄະນາຍາດ ແຫ່ງຊາດລາວ ຢືນຍົງຄົງຕົວ ແລະ ຂະຫຍາຍຕົວ ຕໍ່ໆມາ.

ນັບແຕ່ພັກປະຊາຊົນ ປະຕິວັດລາວ ກຳເນີດເກີດຂຶ້ນ, ພັກເຮົາສືບທອດເອົາ ແລະ ເສີມຂະຫຍາຍມູນເຊື້ອ ສາມັກຄີ, ມູນເຊື້ອຮັກຊາດອັນດູດດື່ມ ດັ່ງກ່າວ ຂອງຊາດ, ເຊີດຊູຄັນທຸງແຫ່ງຄວາມສາມັກຄີ ເພື່ອຄວາມເປັນເອກະລາດແຫ່ງຊາດ ແລະ ຮັກສາສັງຄົມນິຍົມ, ຈາກນີ້ ພັກໄດ້ວາງແນວທາງ ແລະ ວິທີການ ປະຕິວັດ ອັນຖືກຕ້ອງອອກ, ເພື່ອປຸກລະດົມ, ເຕົ້າໂຮມປະຊາຊົນ ບັນດາເຜົ່າຊົນ, ຊົນຊັ້ນ ໃນຊັ້ນຄົນ ແລະສາດສະໜາຕ່າງໆ ເປັນກຸ່ມກ້ອນ ກຳລັງແຮງສັງລວມ ຕີເອົາຊະນະສັດຕູຜູ້ຮຸກຮານ, ນຳເອົາພາລະກິດ ປະຕິວັດຂອງປະຊາຊົນເຮົາກ້າວຈາກໄຊຊະນະນີ້ໄປເຖິງ ໄຊຊະນະໃໝ່ໃຫຍ່ຫຼວງກວ່າເກົ່າ, ດັ່ງນັ້ນ ການເຕົ້າໂຮມຄວາມສາມັກຄີ ມັນໄດ້ກາຍເປັນທັດສະນະພື້ນຖານ ຂອງພັກເຮົາ,

ຊື່ງພັກເຮົາ ຕະຫຼອດທຸກໄລຍະຊີ້ນຳ ແລະ ນຳພາການປະຕິວັດ ກໍໄດ້ເອົາໃຈໃສ່ ຢ່າງຈິດຈໍ່ ໃນການກໍ່ສ້າງ ແລະ ປັບປຸງກຸ່ມກ້ອນ ມະຫາສາມັກຄີ : ສາມັກຄີ ໃນທົ່ວພັກ, ສາມັກຄີທົ່ວປວງຊົນ, ສາມັກຄີທຸກຊົນເຜົ່າ, ທຸກສາດສະໜາ, ສາມັກຄີ ໃນທຸກປະເພດ ກຳລັງປະກອບອາວຸດ ແລະ ສາມັກຄີສາກົນ, ນັບແຕ່ ວຽກທີ່ໄດ້ຮັບຜົນສຳເລັດ ແລະ ບໍ່ທັນມີຜົນສຳເລັດ ໃນຂະບວນວິວັດ ແຫ່ງການນຳພາ ການປະຕິວັດ, ພັກເຮົາໄດ້ສະຫລຸບວ່າ : "ເວລາໃດພວກເຮົາກໍຕ້ອງກຳແໜ້ນ ແລະ ຮູ້ເຊີດຊູຄັນທຸງ ເອກະພາບ, ປະຕິບັດມະຫາສາມັກຄີ ວົງຄະນາຍາດ ແຫ່ງຊາດ, ເສີມຂະຫຍາຍໄດ້ກຳລັງແຮງຂອງຊາດ, ກັບກຳລັງແຮງຂອງຍຸກສະໄໝ, ກຳລັງແຮງຂອງມູນເຊື້ອ ກັບກຳລັງແຮງ ຂອງຍຸກສະໄໝນັ້ນ, ເຖິງວ່າການປະຕິວັດຈະພົບພໍ້ຄວາມຫຍຸ້ງຍາກ ທຸລະກັນດານ ເຖິງຂັ້ນໃດ ພວກເຮົາກໍຜ່ານຜ່າໄດ້ ແລະ ຍາດໄດ້ໄຊຊະນະ".

ກົງກັນຂ້າມ, ເວລາໃດ ປັດໃຈ ຄັນທຸງເອກະລາດ ແຫ່ງຊາດ ກືເບົາ, ຕົກເຂົ້າຄວາມຜິດພາດ ໃນຄັນທຸງມະຫາສາມັກຄີ ແຫ່ງຊາດ ແລະ ຜິດເຂວ ກ່ຽວກັບສາມັກຄີສາກົນນັ້ນ ການປະຕິວັດໄດ້ພົບຄວາມຫຍຸ້ງຍາກກຸ້ກອຍ ແລະ ປະລາໄຊບົດຮຽນໃຫຍ່ນີ້ພວກເຮົາໄດ້ສະຫລຸບ, ກອດກອບມາໄດ້ຈາກພຶດຕິກຳຕົວຈິງ ຂອງຂະບວນວິວັດຊີ້ນຳ ແລະ ນຳພາການປະຕິວັດ 50 ກວ່າປີມານີ້.

ດັ່ງນັ້ນ, ປະທານໂຮ່ຈີມິນ ຜູ້ນຳທີ່ຍິ່ງໃຫຍ່ ແລະ ເຄົາລົບຮັກ ຂອງປະຊາຊົນ ຫວຽດນາມ ອ້າຍນ້ອງ ຈິ່ງສະຫລຸບ ວ່າ : "ສາມັກຄີ, ສາມັກຄີມະຫາສາມັກຄີ ສຳເລັດຜົນ, ສຳເລັດຜົນ ມະຫາສຳເລັດຜົນ".

## II. ແນວໂຮມແຫ່ງຊາດ ເປັນເອກະພາບ ແມ່ນປັດໃຈ ໃນບັນດາປັດໃຈ ຕັດສິນໄຊຊະນະ ຂອງການປະຕິວັດ ປະເທດເຮົາ.

ເລີ່ມຈາກທັດສະນະ "ການປະຕິວັດ ແມ່ນພາລະກິດ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊົນ". ຂະບວນການປະຕິວັດ ໃນປະເທດໜຶ່ງ ທີ່ເປັນເມືອງຂຶ້ນ ນັ້ນແມ່ນຂະບວນການປະຕິວັດຊາດປະຊາທິປະໄຕ, ເພື່ອຈະນຳເອົາຂະບວນການປົດປ່ອຍນັ້ນໄປເຖິງໄຊຊະນະ, ອາດຈະຕ້ອງມີການສ້າງຕັ້ງແນວໂຮມແຫ່ງຊາດ ທີ່ກວ້າງຂວາງ, ສາມັກຄີທຸກຊົນເຜົ່າ, ທຸກຊົນຊັ້ນ ແລະ ບັນດາຊັ້ນຄົນ ໃນສັງຄົມ, ສາດສະໜາຕ່າງໆ "ຫວັງຢາກປົດປ່ອຍປະເທດຊາດ ໃຫ້ພົ້ນແອກເປັນເມືອງຂຶ້ນ ແລະ ເປັນຂ້ອຍຂ້າ".

ເຊື່ອມຊຶມກຳແໜ້ນ ທັດສະນະ ດັ່ງກ່າວ, ແຕ່ຫົວທີໂລດ ພາຍຫຼັງທີ່ພັກເຮົາ ໄດ້ສ້າງຕັ້ງຂຶ້ນ, ພວກເຮົາໄດ້ມີແຜນນະໂຍບາຍ ສ້າງຕັ້ງແນວໂຮມເອກະພາບ ແຫ່ງຊາດຂຶ້ນ, ໃນ (ວັນທີ 13/8/1950) ແນວລາວອິດສະລະ ໄດ້ຮັບການສ້າງຕັ້ງຂຶ້ນ. ການສ້າງຕັ້ງແນວລາວ ອິດສະລະ ແມ່ນເພື່ອຜົນປະໂຫຍດ ຂອງການປະຕິວັດ, ເພື່ອຜົນປະໂຫຍດຂອງປະເທດຊາດ ແລະ ເພື່ອຜົນປະໂຫຍດ ອັນພື້ນຖານ ຂອງມະຫາຊົນ ກໍຄືຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ ການເມືອງຂອງຊາດ, ໃນຕະຫຼອດຂະບວນວິວັດແຫ່ງການນຳພາຊີ້ນຳ, ພັກໄດ້ເອົາໃຈໃສ່ສ້າງຢ່າງຈົດຈໍ່ກໍ່ສ້າງ, ປັບປຸງແນວໂຮມເອກະພາບແຫ່ງຊາດ ໄດ້ວາງແຜນນະໂຍບາຍ, ແນວນະໂຍບາຍ ແລະ ຮູບການ ຈັດຕັ້ງ ແນວໂຮມ ທີ່ສອດຄ່ອງກັບໜ້າທີ່ການເມືອງ ຂອງການປະຕິວັດ ຢູ່ແຕ່ລະໄລຍະ, ບາງເທື່ອໃນເວລາອັນດຽວກັນກໍມີສອງ, ສາມຮູບການຈັດຕັ້ງແນວໂຮມ ເພື່ອເພີ່ມຕື່ມ ຊຶ່ງກັນແລະ ກັນ, ປະສານສົມທົບນຳກັນ ເພື່ອເປີດກວ້າງ ການເຕົ້າໂຮມ

ກຳລັງຂອງການປະຕິວັດ, ເປີດກວ້າງກຸ່ມກ້ອນ ມະຫາສາມັກຄີ ວົງຄະນາຍາດແຫ່ງຊາດ.

ໄຊຊະນະ ອັນສະງ່າງາມ ໃນການເຕົ້າໂຮມ ກຳລັງແຮງ ຄວາມສາມັກຄີຂອງຊາດ ສົມທົບກັບຄວາມສາມັກຄີສາກົນ, ເຂົ້າຮ່ວມ ແນວໂຮມສຳພັນສາມຊາດລາວ-ຫວຽດນາມ-ຂະແມ ຊຶ່ງແນໃສ່ສ້າງກຳລັງແຮງສັງລວມ ເພື່ອຕີເອົາຊະນະ ພວກລ່າເມືອງຂຶ້ນຝຣັ່ງ ປົດປ່ອຍ ແລະ ສ້າງແຂວງ ຫົວພັນ (ຊຳເໜືອ) ເປັນທີ່ໝັ້ນຂອງກຳລັງປະຕິວັດ, ໄຊຊະນະ ດັ່ງກ່າວ, ມັນແມ່ນໄຊຊະນະ ແຫ່ງການຮ່ວມສຳພັນສູ້ຮົບ ແລະ ກໍ່ແມ່ນໄຊຊະນະ ແຫ່ງຄວາມສາມັກຄີ ແບບພິເສດ ລະຫວ່າງ ລາວ-ຫວຽດນາມ; ພ້ອມນັ້ນມັນກໍ່ເປັນໄຊຊະນະ ແຫ່ງການກະກຽມພື້ນຖານ ການເມືອງ ໃຫ້ແກ່ກຳລັງ ປະກອບອາວຸດປະຕິວັດ ທີ່ປະທານໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກ ຂອງປະຊາຊົນລາວ ເປັນຜູ້ສ້າງຕັ້ງຂຶ້ນ, ໄດ້ນຳພາ ກະກຽມເງື່ອນໄຂ ເອົາໄວ້.

ພາຍຫຼັງ ແຂວງ ຊຳເໜືອ ໄດ້ຮັບການປົດປ່ອຍແລ້ວ, ບັນດາກຳລັງປະກອບອາວຸດ ປະຕິວັດ ກໍ່ເປີດສາກບຸກໂຈມຕີສັດຕູຢູ່ຫຼາຍແຫ່ງ ໃນທົ່ວປະເທດ ຄື : ແຂວງ ຊຽງຂວາງ; ແຂວງ ຜົ້ງສາລີ, ເຂົ້າປົດປ່ອຍເອົາຕົວເມືອງ ທ່າແຂກ; ແຂວງ ຄຳມ່ວນ ແລະ ບຸກຕີສັດຕູຢູ່ເມືອງພິນ, ເຊໂປ ແຂວງສະຫວັນນະເຂດ ຢູ່ເຂດລາວໃຕ້ອັດຕະປື, ສາລະວັນ ແລະ ຈຳປາສັກ ກໍ່ລ້ວນແຕ່ກຶກປົດປ່ອຍດິນແດນ ພາກສ່ວນໜຶ່ງ ເປັນອັນວ່າປີ 1953 ແນວລາວອິດສະລະ ໄດ້ປົດປ່ອຍ ດິນແດນທົ່ວປະເທດ ໄດ້ເກືອບເຄິ່ງໜຶ່ງ, ປົດປ່ອຍ ໄດ້ 1/3 ຂອງພົນລະເມືອງທົ່ວປະເທດ ຊື່ສຽງອິດທິພົນ ຂອງແນວລາວອິດສະລະ ໄດ້ດັງກ້ອງ ກັງວານ, ໄດ້ກາຍເປັນຕົວແທນ ໃຫ້ແກ່ປະເທດຊາດ ແລະ ປະຊາຊົນ ໃນເວທີການເມືອງຕ່າງໆ, ໃນສາກົນນັບມື້ສູງເດັ່ນ ຂຶ້ນ ບັນດາໄຊຊະນະ ດັ່ງກ່າວ, ກໍ່ລ້ວນແຕ່ຕິດພັນການເຕີບໃຫຍ່ຂະຫຍາຍຕົວ ຂອງແນວລາວອິດສະລະ.

ນັບແຕ່ໄດ້ຮັບການສ້າງຕັ້ງຂຶ້ນມາ, ຈົນຂະຫຍາຍຕົວມາເຖິງເວລານີ້, ແນວໂຮມເອກະພາບ ແຫ່ງຊາດລາວໄດ້ເຕີບໃຫຍ່ຂະຫຍາຍ ຕົວຢູ່ພາຍໃຕ້ຫຼາຍຮູບການ, ມີຊື່ເອີ້ນຕ່າງກັນ ໃນແຕ່ລະໄລຍະ ຂອງປະຫວັດສາດ (ແນວລາວອິດສະລະ, ແນວລາວຮັກຊາດ, ແນວລາວສ້າງຊາດ ...), ແຕ່ກໍມີການເຕີບໃຫຍ່ຂະຫຍາຍຕົວ ທັງທາງດ້ານຈຳນວນ ແລະ ທັງທາງດ້ານຄຸນນະພາບ, ໄດ້ເຮັດສຳເລັດໜ້າທີ່ອັນສະງ່າງາມ ທີ່ສຸດຢູ່ໃນແຕ່ລະໄລຍະ, ໄດ້ປະກອບສ່ວນຢ່າງສົມກຽນ ເຂົ້າໃນພາລະກິດແຫ່ງການປົດປ່ອຍຊາດ, ຕີເອົາຊະນະຈັກກະພັດຜູ້ຮຸກຮານ ທັງເກົ່າ ແລະ ໃໝ່, ພ້ອມທັງຕີເອົາຊະນະບັນດາອິດທິ ກຳລັງຮຸກຮານທຸກໂຕ, ປົກປັກຮັກສາ, ພັດທະນາສ້າງສາປະເທດຊາດ, ສ້າງບັນດາປະກົນປັດໃຈ ພາປະເທດລາວ ກ້າວຂຶ້ນຕາມທິດສັງຄົມນິຍົມ ເປັນແຕ່ລະບາດກ້າວ ແລະ ເປັນອັນຈະແຈ້ງແລ້ວວ່າ : ແນວໂຮມໄດ້ກາຍເປັນ ປັດໃຈອັນໜຶ່ງ ຕັດສິນໄຊຊະນະ ຂອງການປະຕິວັດ ປະເທດເຮົາ.

III. <u>ບັນດາແຜນນະໂຍບາຍໃຫຍ່ຂອງພັກກ່ຽວກັບ ມະຫາສາມັກຄີ ໃນວົງຄະນາຍາດແຫ່ງຊາດ ແລະ ເພີ້ມທະວີ ແນວໂຮມເອກະພາບແຫ່ງຊາດ ໃນຍຸກສະໄໝ ພັດທະນາປະເທດຊາດກ້າວຂຶ້ນສູ່ຄວາມຮັ່ງມີ ແລະ ເຂັ້ມແຂງ.</u>

ສະພາບການຂອງໂລກ ແລະ ພາກພື້ນ ໃນຊຸມປີທີ່ຜ່ານມາ ກໍຄື ໃນຊຸມປີຕໍ່ໄປ, ມັນໄດ້ຜັນແປ ແລະ ພວມຜັນແປ ໄປຢ່າງວ່ອງໄວ, ສັບສົນ ແລະ ຫຍຸ້ງຍາກທີ່ສຸດ, ຍາກທີ່ຈະພະຍາກອນ ລ່ວງໜ້າ ຢ່າງຖືກຕ້ອງໄດ້, ແຕ່ບັນດາ ຈຸດພິເສດ ແລະ ທ່າອ່ຽງລວມໃໝ່, ປັດໃຈຊາດ ໄດ້ກາຍເປັນບັນຫາໜຶ່ງ ທີ່ສຳຄັນທີ່ສຸດ, ບັນຫາຜົນສຳເລັດ ໃນພາລະກິດ ແຫ່ງການປ່ຽນແປງ ໃໝ່ໃນຊຸມປີຜ່ານມາ ຂອງພາລະກິດ ປົກປັກຮັກສາ ແລະ ພັດ

ທະນາ ປະເທດຊາດ ມັນໄດ້ສ້າງກາລະໂອກາດ ອັນໃໝ່ ໃຫຍ່ຫຼວງ ເພື່ອພາປະເທດຊາດເຮົາຫັນໄປຫາຍຸກສະໄໝໃໝ່, ເປັນຍຸກສະໄໝ ທີ່ສ້າງໃຫ້ປະເທດຊາດ ຫັນຈາກເສດຖະກິດ ທຳມະຊາດ ແລະ ເຄິ່ງທຳມະຊາດ ໄປສູ່ເສດຖະກິດ ສິນຄ້າ, ຕາມກົນໄກຕະຫຼາດ, ມັນແມ່ນກາລະໂອກາດ ທີ່ຈະເຮັດໃຫ້ ປະເທດຊາດເຮົາຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ, ເຮັດໃຫ້ປະຊາຊົນ ຮັ່ງມີ, ປະເທດຊາດຮັ່ງມີ, ເຂັ້ມແຂງ ສ້າງທຸກເງື່ອນໄຂ ເພື່ອຫັນປະເທດເປັນ ປະເທດອຸດສາຫະກຳ ແລະ ທັນສະໄໝ ເປັນແຕ່ລະບາດກ້າວ, ເຮັດໃຫ້ສັງຄົມມີຄວາມສີວິໄລ ແລະ ຍຸດຕິທຳ.

ເພື່ອຈະປະຕິບັດບັນດາ ໜ້າທີ່ປະຫວັດສາດ ອັນສຳຄັນ ດັ່ງກ່າວຢູ່ຂ້າງເທິງນັ້ນ, ກ່ອນອື່ນໝົດ ຕ້ອງເປີດກວ້າງກຸ່ມກ້ອນ ມະຫາສາມ ສາມັກຄີ ທົ່ວປວງຊົນ, ເພີ່ມທະວີ ປັບປຸງຮາກຖານ ແນວໂຮມ ແຫ່ງຊາດເປັນເອກະພາບ, ປະຕິບັດ ມະຫາສາມັກຄີ ທົ່ວປວງຊົນ ໃນລະດັບສູງ ແລະ ເຂົ້າສູ່ລວງເລິກແນໃສ່ ປຸກລະດົມ ສະຕິປັນຍາ, ກຳລັງວັງຊາຂອງໝົດທັງປະເທດ, ເປັນຈິດໜຶ່ງໃຈດຽວ, ກຳແໜ້ນກາລະໂອກາດ, ຜ່ານຜ່າ ແລະ ຊຸກຍູ້ ໃຫ້ປະເທດຊາດ ຂະຫຍາຍຕົວ ກ້າວທີ່ດທາງ ດ້ວຍລະດັບໄວກວ່າ ແລະ ໝັກແໜ້ນກວ່າ.

ກ. <u>ບາງບົດຮຽນ ຂອງປະເທດເຮົາ :</u> ກອງປະຊຸມໃຫຍ່ທີ່ VI ຂອງພັກເຮົາ ໄດ້ສະຫລຸບບົດຮຽນສຳຄັນ 5 ປະການທີ່ກອດກອບມາໄດ້ຈາກພາລະກິດ ປົກປັກຮັກສາ ແລະ ພັດທະນາ ໃນໄລຍະ ປ່ຽນແປງໃໝ່ຊຸມປີຜ່ານມາດັ່ງນີ້:

<u>ໜຶ່ງ</u> : ການເພີ່ມທະວີຄວາມສາມັກຄີ ເປັນເອກະພາບ ໃນທົ່ວພັກ, ທົ່ວປວງຊົນ ຕິດແໜ້ນກັບການເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງ

ຄວາມເຂັ້ມແຂງດ້ວຍຕົນເອງ ແມ່ນປັດໃຈ ຕັດສິນໝົນສຳເລັດຂອງພາລະກິດ ປ່ຽນແປງໃໝ່ນີ້ແມ່ນບົດຮຽນ ອັນປະເສີດ ແລະ ກໍແມ່ນມູນເຊື້ອອັນດີງາມຂອງຊາດ ແລະ ຂອງປະຊາຊົນ ທີ່ພັກເຮົາໄດ້ ສະຫລຸບຈາກພຶດຕິກຳ ຕະຫລອດໄລຍະ ຂອງການປະຕິວັດ ປົດປ່ອຍຊາດກໍຄືໄລຍະ ປົກປັກຮັກສາ ແລະ ພັດທະນາ ສ້າງສາປະເທດຊາດ ໃນປະຈຸບັນ.

ບົດຮຽນດັ່ງກ່າວນີ້ ຊີ້ໃຫ້ເຫັນວ່າ : ພັກເຮົາ ຍາມໃດກໍໄດ້ເອົາໃຈໃສ່ຢ່າງຈິດຈໍ່ ຕໍ່ການເພີ້ມທະວີ ຄວາມສາມັກຄີ ເປັນເອກະພາບພາຍໃນພັກ ໃຫ້ເປັນ ຫຼັກແຫຼ່ງແກ່ນສານ ແຫ່ງຄວາມສາມັກຄີທົ່ວປວງຊົນ ໃນວົງຄະນາຍາດ ແຫ່ງຊາດ, ເປັນໃຈກາງ ເຕົ້າໂຮມຄວາມສາມັກຄີ ທຸກຊົນເຜົ່າ, ທຸກເພດໄວ ແລະ ທຸກຊັ້ນຄົນ ທີ່ຮັກຊາດ ແລະ ຮັກລະບອບໃໝ່, ເພື່ອສ້າງກຳລັງແຮງສັງລວມ.

<u>ທີສອງ</u> : ອີງໃສ່ປະຊາຊົນ, ເສີມຂະຫຍາຍກຳລັງແຮງອັນມະຫາສານ ຂອງປະຊາຊົນ ແລະ ເຮັດທຸກສິ່ງທຸກຢ່າງ ເພື່ອໝົນປະໂຫຍດ ຂອງປະຊາຊົນ ອັນນີ້ ທັງແມ່ນບົດຮຽນ, ທັງແມ່ນສັດຈະທຳ ພາລະກິດປະຕິວັດ ແມ່ນຂອງປະຊາຊົນ, ພັກເຮົານຳໃຊ້ ແລະ ປະຕິບັດຢ່າງສະເໝີຕົ້ນສະເໝີປາຍ ຕະຫລອດມາ ໃນທຸກໄລຍະ ຂອງການປະຕິວັດ.

ໂດຍຍຶດໝັ້ນທັດສະນະດັ່ງກ່າວ, ພັກເຮົາຍາມໃດກໍໄດ້ເອົາໃຈໃສ່ໂຄສະນາຊົນຂວາຍ ປຸກລະດົມມະຫາຊົນ, ເຊີດຊູສະຕິແຫ່ງຄວາມເປັນເຈົ້າໃຫ້ແກ່ປະຊາຊົນ. ພ້ອມນັ້ນພັກເຮົາຖືວ່າ ພັກແມ່ນເກີດຈາກຂະບວນການຮັກຊາດ ຂອງມະຫາຊົນ, ທຸກການເຄື່ອນໄຫວ ຂອງພະນັກງານ, ສະມາຊິກພັກລ້ວນແຕ່ແນໃສ່ນຳເອົາໝົນປະໂຫຍດມາສູ່ມະຫາຊົນ.

<u>ທີສາມ</u>: ຮັບປະກັນຄວາມນິສະກຽນລະພາບ ທາງດ້ານການ

ເມືອງ, ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນສັງຄົມ, ແມ່ນເງື່ອນໄຂອັນຈຳເປັນ ສຳລັບການປ່ຽນແປງໃໝ່, ແຕ່ຢາກໃຫ້ພາລະກິດ ແຫ່ງການປ່ຽນແປງໃໝ່ ມີພົນສຳເລັດ ຕ້ອງດຳເນີນໄປຢ່າງຄົບຊຸດ, ຮອບຄອບ ດ້ວຍບາດກ້າວ ອັນເໝາະສົມ.

ພຶດຕິກຳ ຂອງປະເທດເຮົາ ກໍຄືບົດຮຽນ ພຶດຕິກຳ ຂອງປະເທດຕ່າງໆ ໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ພາລະກິດ ປ່ຽນແປງໃໝ່ ຈະບໍ່ສາມາດດຳເນີນໄປໄດ້ ກໍ່ຫາກວ່າ ສະຖຽນລະພາບ ທາງດ້ານການເມືອງ, ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍ ທາງສັງຄົມ ບໍ່ມີຄວາມຮັບປະກັນ.

<u>ທີສີ່</u> : ແມ່ນເພີ້ມທະວີ ການນຳພາຂອງພັກໃນທຸກຂົງເຂດວຽກງານ ແລະ ເຊີດຊູ ຄວາມສັກສິດ ແຫ່ງການຄຸ້ມຄອງລັດ, ແມ່ນເງື່ອນໄຂ ຮັບປະກັນ ໃຫ້ແກ່ການປ່ຽນແປງໃໝ່ ໄດ້ດຳເນີນໄປຢ່າງຖືກຕ້ອງ ຕາມແນວທາງ ແລະ ຈຸດໝາຍຂອງພັກ.

ພັກເຮົາ ເປັນຜູ້ລິເລີ່ມນຳພາ ປ່ຽນແປງໃໝ່ໂດຍມີອຸດົມຄະຕິ ແລະ ຈຸດໝາຍຈະແຈ້ງ, ມີຫຼັກການ ແລະ ທິດນຳ ໃນພາລະກິດ ປ່ຽນແປງໃໝ່ ຢ່າງຖືກຕ້ອງ, ພັກໄດ້ກຳນົດບາດກ້າວເດີນອັນຈະແຈ້ງ ແລະ ຍາມໃດກໍ່ເຊີດຊູຄວາມຮັບຜິດຊອບພັກນຳພາ ທົ່ວທັງສັງຄົມຢ່າງສູງ.

<u>ທີຫ້າ</u> : ແມ່ນເສີມຂະຫຍາຍກຳລັງແຮງ ຂອງຊາດ ສົມທົບກຳລັງແຮງ ຂອງຍຸກສະໄໝ, ຍາດແຍ້ງເອົາການສະໜັບສະໜູນ, ແລະ ການຊ່ວຍເຫຼືອ ຈາກສາກົນ ຢ່າງມີຫຼັກການ ແມ່ນສິ່ງທີ່ຂາດບໍ່ໄດ້ ສຳລັບການສ້າງສາ ແລະ ພັດທະນາປະເທດຊາດ.

ການສົມທົບກຳລັງແຮງຂອງຊາດ ບວກກັບກຳລັງແຮງຂອງຍຸກສະໄໝນັ້ນ ແມ່ນກົດເກນອັນໜຶ່ງແຫ່ງໄຊຊະນະ ຂອງການປະຕິວັດ ປະ

ເທດເຮົາ; ພ້ອມນັ້ນ ທັງແມ່ນມູນເຊື້ອຂອງການ ຕໍ່ສູ້ກູ້ຊາດ ແລະ ທັງແມ່ນ ທັດສະນະຂອງພັກເຮົາ.

ພັກເຮົາ ຍັງໄດ້ເນັ້ນໜັກຈາກບົດຮຽນ 5 ປະການ ນັ້ນນັ້ນແມ່ນໄດ້ມາຈາກການເສຍສະລະ ອັນຍາວນານ ຫຼາຍສິບປີ, ແຕ່ສິ່ງທີ່ຂາດບໍ່ໄດ້ ກໍແມ່ນຍ້ອນການເຕົ້າ<u>ໂຮມຄວາມສາມັກຄີ, ສາມັກຄີ ແລະ ນະຫາສາມັກຄີ</u>; ພ້ອມກັບນັ້ນ ກໍແມ່ນຍ້ອນກຳລັງແຮງ ອັນມະຫາສານ ໃນການເປີດກວ້າງ ກຳລັງແນວໂຮມ ແຫ່ງຊາດ ກາຍເປັນ 3 ບາດຄ້ອນ ຍຸດທະສາດ ຟາດໃສ່ຫົວ ຂອງສັດຕູ ຍາດເອົາອຳນາດ ການປົກຄອງມາມີ ປະຊາຊົນ ສຳເລັດຜົນ.

ຂ. <u>ບົດຮຽນຂອງປະເທດເພື່ອນມິດກ່ຽວກັບ ນະຫາສາມັກຄີ ໄດ້ສະແດງໃນ 4 ບັນຫາ ໃຫຍ່ດັ່ງນີ້</u>:

1. ນະຫາສາມັກຄີທົ່ວປວງຊົນ ແມ່ນສາມັກຄີທຸກຄົນ ໃນຄອບຄົວໃຫຍ່ແຫ່ງຊາດ ຫວຽດນາມ, ຊຶ່ງລວມມີ ຊົນຊັ້ນຕ່າງໆ, ບັນດາຊັ້ນຄົນ, ບັນດາເຜົ່າຊົນ. ທຸກສາດສະໜາ, ທັງໝົດທຸກຄົນ ຢູ່ພາຍໃນປະເທດ ແລະ ຄົນ ຫວຽດນາມທີ່ພັດພາກບ້ານເກີດເມືອງນອນ ຢູ່ຕ່າງປະເທດ ເພື່ອຈຸດມຸ່ງໝາຍ ຮັກສາເອກະລາດ ເອກະພາບ, ອະທິປະໄຕແຫ່ງຊາດ ແລະ ຜືນແຜ່ນດິນອັນຄົບກ້ວນ, ສູ້ຊົນເຮັດໃຫ້ຫລຸດພົ້ນຈາກປະເທດດ້ອຍພັດທະນາ ຫຼ້າຫຼັງ ໂດຍໄວ, ກ້າວຂຶ້ນປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມ ມີຄວາມສະເໝີພາບ ແລະ ສີວິໄລ- ນີ້, ແມ່ນຈຸດໝາຍລວມ ຂອງເພື່ອນ.

2. ນະຫາສາມັກຄີ ແຫ່ງຊາດ ແມ່ນແນວທາງພື້ນການ ຂອງພັກ ແລະ ລັດຫວຽດນາມ, ແນວຄິດນະຫາສາມັກຄີ ຕ້ອງໄດ້ສະແດງອອກ ໃນ

ທຸກແຜນນະໂຍບາຍ, ນະໂຍບາຍ, ໃນລັດຖະທຳມະນູນ ແລະ ກົດໝາຍຂອງລັດ ໃນທຸກຂົງເຂດ ການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການພົວພັນກັບຕ່າງປະເທດ ... ແນໃສ່ສະໜອງສິດຜົນປະໂຫຍດ, ຄວາມມຸ່ງມາດປາດຖະໜາ ອັນຊອບທຳ ຂອງທຸກຊົນຊັ້ນ, ຊັ້ນຄົນຕ່າງໆ, ຕິດພັນກັບຄວາມຮັບຜິດຊອບ, ສິດຜົນປະໂຫຍດ ສະເພາະຂອງແຕ່ລະຄົນ ກັບພັນທະ ຂອງລັດຖະກອນ, ຖືເອົາຜົນປະໂຫຍດ ລວມຂອງຊາດ ເປັນໃຫຍ່ກວ່າສິ່ງໃດໆ.

3. ກໍ່ສ້າງອຳນາດການປົກຄອງ ປະຊາຊົນ ປອດໃສ ເຂັ້ມແຂງ, ມີປະສິດທິພາບສູງ; ເປັນລັດຂອງປະຊາຊົນ ຢ່າງແທ້ຈິງ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ. ອຳນາດການປົກຄອງ ຂອງປະຊາຊົນ ຕ້ອງປົກປ້ອງສິດຜົນປະໂຫຍດ ອັນຊອບທຳຂອງ ປະຊາຊົນຄົ້ນຄວ້າໃຫ້ໝັກແໜ້ນ ບັນດາຂໍ້ກຳນົດ, ກົດລະບຽບ ຂອງບ້ານເມືອງ, ເຮັດໃຫ້ບໍລິບູນ ແລະ ຂະຫຍາຍນະໂຍບາຍ ຂະຫຍາຍເສດຖະກິດ ສິນຄ້າ ຫຼາຍພາກສ່ວນ ມີການຄຸ້ມຄອງ ຂອງລັດ, ກໍ່ສ້າງ ແລະ ປະຕິບັດ ບັນດານະໂຍບາຍສັງຄົມ...

4. ເປີດກວ້າງ ກຸ່ມກ້ອນສາມັກຄີ ແຫ່ງຊາດໂດຍບັນດາ ຮູບການເຕົ້າໂຮມຫຼາຍຮູບຫຼາຍສີສັນ, ຈັດຕັ້ງ ແລະ ຂະຫຍາຍບັນດາ ຂະບວນການມະຫາຊົນ ແຕ່ຕໍ່າຫາສູງ, ປະດິດຄິດສ້າງຕື່ມຫຼາຍຮູບການເຄື່ອນໄຫວ ທີ່ສອດຄ່ອງ ກັບແຕ່ລະພາກສ່ວນຂອງສັງຄົມ, ເສີມຂະຫຍາຍບົດບາດ ອັນຕັ້ງໜ້າຂອງບັນດາບຸກຄົນ ທີ່ເປັນຕົວແທນ ໃນທຸກຊົນຊັ້ນ, ທຸກຊັ້ນຄົນ, ຂອງທຸກສາດສະໜາ. ທິດໃນການເຄື່ອນໄຫວ ແມ່ນຄຸ້ມ, ບ້ານ ແລະ ຄອບຄົວ;

ການປະຕິບັດຍຸດທະສາດ ມະຫາສາມັກຄີ ທົ່ວປວງຊົນ ແລະ ເພີ້ມທະວີ ແນວໂຮມແຫ່ງຊາດ ເອກະພາບ ແມ່ນຕະຫຼອດທຸກໄລຍະ ແຫ່ງຂະ

ບວນວິວັດ, ແມ່ນຄວາມຮັບຜິດຊອບ ຂອງທຸກຂະແໜງການ, ຂອງລະບົບການເມືອງ, ໃນນັ້ນແນວໂຮມ ປະເທດຊາດ ຫວຽດນາມກໍ່ມີບົດບາດສຳຄັນ.

## ພາກທີ່ສອງ

## ບາງບັນຫາລວມກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວໂຮມ

ເນື້ອໃນຂອງພາກນີ້ ຈະເວົ້າເຖິງບັນດາບັນຫາພື້ນຖານຂອງແນວລາວສ້າງຊາດ ຄື : ລັກສະນະ ທາດແທ້ຂອງ ແນວໂຮມ, ທີ່ຕັ້ງ, ບົດບາດ, ໜ້າທີ່ຂອງ ແນວໂຮມ ໃນລະບົບການເມືອງ ແລະ ຊີວິດພົວພັນສັງຄົມ; ບັນດາ ຫຼັກການເຮັດວຽກຂອງ ແນວໂຮມ; ບັນດາການພົວພັນ ລະຫວ່າງແນວລາວສ້າງຊາດ ກັບບັນດາອົງການ ທີ່ເປັນພາຄີ ໃນລະບົບການເມືອງ; ທິດທາງໜ້າທີ່ຂອງ ແນວໂຮມແຫ່ງຊາດລາວ ໃນໄລຍະພັດທະນາປະເທດຊາດ ຕາມເງື່ອນໄຂໃໝ່.

I. <u>ແນວລາວສ້າງຊາດ ກໍຄື ແນວໂຮມແຫ່ງຊາດລາວ ແມ່ນການຈັດຕັ້ງ ສຳພັນທະພາບທາງການເມືອງ, ແມ່ນການຈັດຕັ້ງຮ່ວມສຳພັນທີ່ສະໝັກໃຈ ຂອງອົງຄະນະຫາຊົນ ບັນດາການຈັດຕັ້ງສັງຄົມ ແລະ ບັນດາ ບຸກຄົນທີ່ເປັນຕົວແທນ ຂອງບັນດາຊົນຊັ້ນ ແລະ ຊັ້ນຄົນ ໃນສັງຄົມ, ບັນດາເຜົ່າຊົນ, ບັນດາສາດສະໜາ ແມ່ນພື້ນຖານການເມືອງ ຂອງອຳນາດລັດ ປະຊາຊົນ, ຂອງພັກ ປະຊາຊົນປະຕິວັດລາວ ພັກທັງແມ່ນພາຄີທັງແມ່ນ ຜູ້ນຳພາແນວໂຮມ ແຫ່ງຊາດລາວ.</u>

1. ການສຳພັນທະພາບທາງການເມືອງ ແມ່ນຫຍັງ ?

ການສຳພັນທະພາບ ທາງການເມືອງແມ່ນການສຳພັນກັບເຂົ້າຂອງບັນດາ ກຳລັງການເມືອງນຳກັນໃຫ້ ກາຍເປັນ ກຸ່ມກ້ອນ ເອກະພາບ ແນໃສ່ປະສານສົນທົບເປັນເອກະພາບ ໃນການເຄື່ອນໄຫວ ເພື່ອຈຸດໝາຍລວມ, ຈຸດໝາຍ ລວມນັ້ນ ຢູ່ໃນແຕ່ລະໄລຍະກໍຕ່າງກັນ, ສອດຄ່ອງກັບໜ້າທີ່ການປະຕິວັດ, ກັບສິດຜົນປະໂຫຍດ ອັນພື້ນຖານ ຂອງບັນດາກຳລັງ ທີ່ເຂົ້າຮ່ວມສຳພັນ.

2. ການປະຕິບັດນະໂຍບາຍ ຮ່ວມສຳພັນ ແມ່ນຄວາມຮຽກຮ້ອງຕ້ອງການ ທີ່ຈຳເປັນ. ບໍ່ວ່າພັກ ຂອງຊົນຊັ້ນໃດກໍຕາມ ຢາກກຳໄດ້ອຳນາດປົກຄອງ, ຮັກສາອຳນາດປົກຄອງ ແລະ ສ້າງສັງຄົມໃໝ່ກໍລ້ວນແຕ່ຕ້ອງຮ່ວມສຳພັນ ກັບບັນດາຊົນຊັ້ນ ແລະ ຊັ້ນຄົນ ຕ່າງໆ ໃນສັງຄົມ ທີ່ຕ່າງກັນ, ສາມັກຄີ ເຕົ້າໂຮມທຸກກຳລັງ ທີ່ອາດຈະເຕົ້າໂຮມ ໄດ້ເພື່ອພັນແຍກ ແລະ ໂດດດ່ຽວ ລົບລ້າງ ຫຼື ເຮັດໃຫ້ມັນແຕກສະຫຼາຍ ສັດຕູຂອງຕົນ ແລະ ເຕົ້າໂຮມ ກຳລັງແຮງ ຂອງໝົດຊາດ ແນໃສ່ສ້າງສັງຄົມໃໝ່.

3. ພື້ນຖານ ຂອງແນວໂຮມ ແມ່ນກຸ່ມກ້ອນຮ່ວມສຳພັນ ລະຫວ່າງຊົນຊັ້ນກຳມະກອນກັບຊາວກະສິກອນ ໃນໄລຍະການປະຕິວັດຊາດປະຊາທິປະໄຕ ແລະ ໃນການປະຕິວັດສັງຄົມນິຍົມ ກຸ່ມກ້ອນຮ່ວມສຳພັນ ລະຫວ່າງ ຊົນຊັ້ນກຳມະກອນ, ກັບຊາວກະສິກອນ ແລະ ນັກຮຽນຮູ້ປັນຍາ. ແກນສານນຳພາກຸ່ມກ້ອນ ຮ່ວມສຳພັນ ແມ່ນພັກກອມມູນິດ, ແນວໂຮມແມ່ນເປັນພື້ນຖານ ອຳນາດລັດປະຊາຊົນ.

4. ແນວລາວສ້າງຊາດ ບໍ່ແມ່ນພາກສ່ວນໜຶ່ງ ຂອງຄະນະນະຫາຊົນແມ່ນການຈັດຕັ້ງ ການເມືອງ ສັງຄົມ ທີ່ກວ້າງໃຫຍ່ທີ່ສຸດ ຊຶ່ງ ລວມມີບັນດາ ອົງຄະນາມະຫາຊົນ, ບັນດາສະມາຄົມ ແລະ ບັນດາບຸກຄົນ ທີ່ເປັນຕົວແທນ ແນວໂຮມປະກອບມີພາຄີ ຊຶ່ງລວມມີ : ພາຄີ ການຈັດຕັ້ງ,

ພາຄີ ບຸກຄົນ ທີ່ເປັນຕົວແທນ. ແນວໂຮມ ຈັດຕັ້ງການຫຼັກການຮ່ວມສຳພັນ, ເຮັດວຽກຕາມຫຼັກການ ປຶກສາຫາລື ຢ່າງມີປະຊາທິປະໄຕ, ຮ່ວມມືສະເໝີພາບ ແລະ ສາມັກຄີດ້ວຍຄວາມຈິງໃຈ, ເຄື່ອນໄຫວ ຕາມວິທີ ປະສານສົມທົບ ແລະ ເປັນເອກະພາບ ໃນການເຄື່ອນໄຫວ ເພື່ອຈຸດໝາຍລວມ.

ແນວລາວສ້າງຊາດ ແມ່ນຮູບການຈັດຕັ້ງ ຂອງແນວໂຮມ ເອກະພາບ ແຫ່ງຊາດລາວ, ຕ້ອງຮັບຮູ້ຄືນບັນດາຄວາມຮັບຮູ້ ທີ່ບໍ່ຖືກຕ້ອງຕໍ່ກັບການຈັດຕັ້ງແນວໂຮມ ຄື : ຖືແນວໂຮມຄືອົງຄະນະນະຫາຊົນ ອັນໜຶ່ງຂອງຜູ້ເຖົ້າແກ່, ເຂົ້າໃຈວ່າ ການຈັດຕັ້ງ ເປັນຮູບການພຽງແຕ່ເປັນການ ຈັດຕັ້ງອັນໜຶ່ງ ເພື່ອຂົນຂວາຍເຕົ້າໂຮມ ກຳລັງ ໃນຈຳນວນເປົ້າໝາຍໃດໜຶ່ງ ຫຼື ຖືວ່າ ແນວໂຮມ ຄື ຄະນະພະແນກຂອງ ພັກ, ຄືຂະແໜງໜຶ່ງຂອງອຳນາດ ການປົກຄອງ ແລະ ອື່ນໆ.

II. ທີ່ຕັ້ງບົດບາດຂອງ ແນວໂຮມແຫ່ງຊາດລາວ ຫຼື ແນວລາວສ້າງຊາດ ໃນລະບົບການເມືອງ ແລະ ຊີວິດສັງຄົມ

1. ແນວລາວສ້າງຊາດ ແມ່ນໜຶ່ງ ໃນພາຄີ ຂອງລະບົບການເມືອງແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

- ໃນລະບົບການເມືອງຂອງປະເທດເຮົາ ໃນປະຈຸບັນ ມີຄື (ພັກປະຊາຊົນປະຕິວັດລາວ, ສະພາແຫ່ງຊາດ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ແນວລາວສ້າງຊາດ) ຍ້ອນແນວນັ້ນຈຶ່ງ ໄດ້ກຳນົດ ແນວໂຮມ ຢູ່ໃນພາຄີ ຂອງ ລະບົບການເມືອງດັ່ງກ່າວ, ການກຳນົດຄື ແນວນີ້ ແມ່ນໂດຍຄວາມຮຽກຮ້ອງ ພາວະວິໄສ ຂອງ ພາລະກິດ ການປະຕິວັດ, ນັບແມ່ນເລີ່ມຈາກ ອຳນາດ ການເມືອງ: ປະເທດເຮົາແມ່ນ ເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ, ທຸກ

ສິດອຳນາດ ແມ່ນຂຶ້ນກັບປະຊາຊົນ, ອັນນີ້ມັນແມ່ນບັນດາປະຫວັດສາດ, ບັນດາມູນເຊື້ອ ຂອງຊາດ.

- ເລີ່ມແຕ່ມີພັກ ກໍໄດ້ມີແນວໂຮມ, ເວລາພັກ ຍັງເຄື່ອນໄຫວ ປິດລັບ ແມ່ນໃຊ້ຊື່ ແນວໂຮມ ເປັນຜູ້ເປີດເຜີຍ ຕໍ່ໜ້າປະຊາຊົນ ຢູ່ພາຍໃນປະເທດ ກໍຄືຕໍ່ໂລກ, ຫຼັງຈາກຍາດໄດ້ອຳນາດ ລັດແລ້ວ, ແນວໂຮມກໍໄດ້ກາຍເປັນ ພາຄີ ຂອງລະບົບການເມືອງ, ມັນເປັນທຳມະດາຢູ່ວ່າ : ບົດບາດ, ທີ່ຕັ້ງ ຫຼື ພາລະບົດບາດ ແລະ ວິທີເຄື່ອນໄຫວ ຂອງແຕ່ລະພາຄີ ໃນລະບົບການເມືອງ ມັນແຕກຕ່າງກັນ ແຕ່ວ່າທຸກພາຄີ ກໍລ້ວນແຕ່ ແມ່ນເຄື່ອງມືປະຕິບັດ ແລະ ເສີມຂະຫຍາຍສິດ ເປັນເຈົ້າຂອງ ປະຊາຊົນ ແລະ ກໍແມ່ນເລັ່ງໃສ່ ໃຫ້ບັນລຸຈຸດໝາຍລວມ ໃນການສູ້ຊົນ ກໍ່ສ້າງປະເທດລາວ ສັນຕິພາບ, ເອກະລາດ, ປະຊາທິປະໄຕ ເອກະພາບ ແລະ ຮັ່ງມີເຂັ້ມແຂງ.

ຍ້ອນແນວນັ້ນ ແນວລາວສ້າງຊາດ ແມ່ນຮູບການ ຈັດຕັ້ງອັນໜຶ່ງຂອງແນວໂຮມແຫ່ງຊາດລາວ ເອກະພາບ, ມີທີ່ຕັ້ງອັນເໝາະສົມ ໃນເວທີການເມືອງ ພາຍໃນ ແລະ ໃນໂລກ, ໃນຍຸກສະໄໝສ້າງບັນດາປະກົນປັດໃຈ ເພື່ອກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວນີ້ ທີ່ຕັ້ງ ຂອງແນວໂຮມຍິ່ງຖືກກຳນົດ ໃຫ້ຈະແຈ້ງກວ່າເກົ່າ ແລະ ປະຊາຊົນຮັບຮູ້, ລັດຖະທຳມະນູນ ສະບັບທຳອິດ ປີ 1991, ໄດ້ຊາບຮັບຮອງເອົາ ດັ່ງນີ້ :

"ແນວລາວສ້າງຊາດ, ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ບັນດາອົງການຈັດຕັ້ງ ສັງຄົມ ເປັນບ່ອນເຕົ້າໂຮມ ຄວາມສາມັກຄີ ແລະ ປຸກລະດົມ ບັນດາຊັ້ນຄົນ ຂອງທຸກຊົນເຜົ່າ ເຂົ້າຮ່ວມໃນພາລະກິດ ປົກປັກຮັກສາ ແລະ ສ້າງສາ ປະເທດຊາດ, ເສີມຂະຫຍາຍສິດເປັນເຈົ້າຂອງ ປະ

ຊາຊົນ, ປົກປັກຮັກສາສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງສະມາຊິກ ໃນອົງກອນຈັດຕັ້ງຂອງຕົນ". (ລັດຖະທຳມະນູນ ສະບັບ ປີ 1991 ໃນໝວດ I ມາດຕາ 7) ສຳພັນທະພາບທາງການເມືອງ ແນໃສ່ປັບປຸງ ແລະ ເພີ້ມທະວີກຸ່ມກ້ອນ ມະຫາສາມັກຄີ ທົ່ວປວງຊົນ, ສ້າງໃຫ້ມີຄວາມເປັນເອກະສັນ ທາງການເມືອງ ແລະ ດ້ານຈິດໃຈ ໃນໝູ່ປະຊາຊົນ, ເພື່ອຮັດແໜ້ນ ການພົວພັນອັນສະໜິດແໜ້ນລະຫວ່າງປະຊາຊົນ ກັບພັກ ແລະ ລັດ ເພື່ອປະຕິບັດພາລະກິດ ປ່ຽນແປງໃໝ່ ຢ່າງມີໄຊ.

ບົດບາດຂອງ ແນວລາວສ້າງຊາດ ຫາກບໍ່ແມ່ນຕາມ ຄວາມມັກຂອງແນວລາວສ້າງຊາດ ເປັນຜູ້ວາງອອກ, ມັນຫາກແມ່ນໂດຍປະຊາຊົນ ແລະ ປະຫວັດສາດໄດ້ຮັບຮອງເອົາ.

ໄລຍະສ້າງປະກົນປັດໃຈ ເພື່ອຈະກ້າວຂື້ນສັງຄົມນິຍົມ ເທື່ອລະບາດກ້າວຂອງປະເທດເຮົາ ນີ້ມັນແມ່ນ ຂະບວນວິວັດ ອັນຍາວນານ, ຈະຜ່ານຫຼາຍໄລຍະທາງ ແຕ່ງການຂະຫຍາຍຕົວ ຫຼາຍພາກສ່ວນເສດຖະກິດ, ມີຫຼາຍສາຍພົວພັນຕ່າງກັນ ທາງຊົນຊັ້ນ, ລະຫວ່າງບັນດາຊັ້ນຄົນ, ບັນດາເຜົ່າ ແລະ ບັນດາສາສະໜາ ... ແຕ່ບັນຫາ ການປ່ຽນແປງ ກ່ຽວກັບ ໂຄງປະກອບຊົນຊັ້ນ ແລະ ພາກສ່ວນ ທາງສັງຄົມ ມັນພວມຕັ້ງບັນຫາ ຮຽກຮ້ອງ ໃຫ້ວຽກງານຂົນຂວາຍປຸກລະດົມ ມະຫາຊົນ ເວົ້າລວມ ແລະ ວຽກງານແນວໂຮມ ເວົ້າສະເພາະ ຕົນໄປດ້ວຍ ບັນຫາໃໝ່. ຄວາມຮຽກຮ້ອງໃຫ້ເປີດກວ້າງ ການເຕົ້າໂຮມ ກຳລັງ ໄດ້ກາຍເປັນ ບັນຫາທີ່ຄັ່ງຮ້ອນ, ດ້ານອື່ນໆອີກ ບັນດາອິດທິກຳລັງ ທີ່ເປັນປໍລະປັກກໍາ ພວມປະຕິບັດຍຸດທະສາດ ຫັນປ່ຽນໂດຍສັນຕິ ຢ່າງຊຸ້ນຊ້ຽວ ເພື່ອຫາທາງແບ່ງແຍກກຸ່ມກ້ອນມະຫາສາມັກຄີ ເພື່ອຫວັງຈະທຳລາຍໝາກຜົນການປະຕິວັດຂອງ ປະຊາຊົນເຮົາ.

ຍ້ອນແນວນັ້ນ, ເພື່ອຮັບປະກັນພາລະກິດ ແຫ່ງການປ່ຽນແປງໃໝ່ໄດ້ ຮັບໝົນສຳເລັດ, ມັນຍິ່ງຮຽກຮ້ອງ ໃຫ້ເພີ້ມທະວີກຸນກ້ອນນະຫາສາມັກຄີ ທົ່ວປວງຊົນ, ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນເປັນໜ້າທີ່ອັນເຄັ່ງຮ້ອນ, ດັ່ງນັ້ນ, ບົດບາດ ຂອງແນວລາວສ້າງຊາດ, ຂອງບັນດາ ອົງການມະຫາຊົນ ຍິ່ງມີຄວາມໝາຍສຳຄັນທີ່ສຸດ ທັງເຊື້ອຊູບົດບາດ ແລະ ຄຸນນະພາບ ຂອງແນວໂຮມ ໃນ ລະບົບການເມືອງ ແລະ ຊີວິດສັງຄົມ ມັນແມ່ນຄວາມຮຽກຮ້ອງ ຂອງພາລະກິດປ່ຽນໃໝ່.

III. ຫຼັກການເຮັດວຽກ ຂອງແນວໂຮມ

ແນວລາວສ້າງຊາດ ໄດ້ຈັດຕັ້ງຂື້ນບົນພື້ນການ ແຫ່ງຄວາມຕື່ນຕົວສະໝັກໃຈ. ການະສະເໝີພາບ ແລະ ລັກສະນະເອກະລາດ ກ່ຽວກັບການັຈດຕັ້ງ ຂອງແຕ່ລະພາຄີ ໄດ້ຮັບການເຄົາລົບ. ການພົວພັນລະຫວ່າງ ບັນດາພາຄີນຳກັນ ໃນແນວລາວສ້າງຊາດ ໄດ້ຮັບການປະຕິບັດຕາມ ຫຼັກການຕ່າງໆ ດັ່ງນີ້:

1. ປຶກສາຫາລື ຢ່າງມີປະຊາທິປະໄຕ;

2. ຮ່ວມມືຢ່າງມີຄວາມສະເໝີພາບ;

3. ສາມັກຄີດ້ວຍຄວາມຈິງໃຈ, ເຄົາລົບນັບຖື ຊຶ່ງກັນ ແລະ ກັນ;

4. ສົມທົບ ແລະ ເອກະພາບ ໃນທຸກການເຄື່ອນໄຫວ ໃນການດຳເນີນຊີວິດ ຂອງແນວລາວສ້າງຊາດ, ລັກສະນະສະເໝີພາບ ຂອງບັນດາອົງການ ພາຄີ ມັນສະແດງອອກ ຄື: ເສລີພາບ ໃນການສະເໜີຄຳຄິດຄຳເຫັນ ຂອງຕົນ, ພ້ອມກັບປຶກສາຫາລື, ແລກປ່ຽນຄຳເຫັນ ຢ່າງມີປະຊາທິປະໄຕ ເພື່ອບັນລຸເຖິງ ຄວາມເອກະສັນ. ບໍ່ມີຄຳສັ່ງ, ບັງຄັບ ນາບຂູ່. ກໍ່ານີບັດາຄຳເຫັນ ທີ່ແຕກຕ່າງກັນກ່ຽວກັບ ບັນຫາລະອຽດ ກໍ່ພ້ອມ

ກັນ ຄົ້ນຄວ້າ ແລກປ່ຽນຄຳເຫັນນຳກັນ, ກະຕຸກຊຸກຍູ້ ຊຶ່ງກັນ ແລະ ຊ່ວຍກັນ ແກ້ໄຂ ດ້ວຍດີ.

ບົນພື້ນຖານນັ້ນ, ບັນດາພາຄີປຶກສາຫາລືນຳກັນ ກ່ຽວກັບໂຄງການ ເຄື່ອນໄຫວ ລວມ ແລະ ມີພັນທະຊ່ວຍເຫຼືອ ຊຶ່ງກັນ, ປະສານສົມທົບເພື່ອຄວາມເປັນເອກະພາບ ໃນການເຄື່ອນໄຫວ ປະຕິບັດ ແຕ່ລະໂຄງການທີ່ໄດ້ປຶກສາຫາລືນຳກັນ. ສີ່ຫຼັກການນັ້ນ ມີການພົວພັນ ກັນຢ່າງສະໜິດແໜ້ນທີ່ສຸດ, ແຕ່ຫຼັກການທີໜຶ່ງ ແລະ ທີສີ່ ນັ້ນເປັນຫຼັກການ ທີ່ສຳຄັນທີ່ສຸດ.

IV. <u>ແຕ່ລະການພົວພັນ ລະຫວ່າງແນວໂຮມ ກັບບັນດາພາຄີ ໃນລະບົບການເມືອງ :</u>

1. ການພົວພັນ ລະຫວ່າງພັກກັບ ແນວໂຮມ ມີຈຸດພິເສດ ອັນໜຶ່ງຄວນເອົາໃຈໃສ່, ພັກທັງແມ່ນພາຄີ, ທັງເປັນຜູ້ນຳພາແນວໂຮມ.

ແມ່ນພາຄີຂອງແນວ, ພັກມີສິດຢ່າງເຕັມຕົວ ແລະ ໜ້າທີ່ປະຕິບັດສິດສະເໝີພາບ ຄືກັນກັບພາຄີອື່ນ. ຕົວແທນຂອງຄະນະພັກເຂົ້າຮ່ວມຄະນະກຳມະການແນວໂຮມ ມີຄວາມຮັບຜິດຊອບ ດຳລົງຊີວິດ ທີ່ມີເງື່ອນໄຂ ຢ່າງພຽງພໍ, ປະຕິບັດຫຼັກການ ໃນການປຶກສາຫາລື ຢ່າງມີປະຊາທິປະໄຕ ແລະ ປະສານສົມທົບ ເປັນເອກະພາບນຳກັນ ກ່ຽວກັບການເຄື່ອນໄຫວ. ຄະນະພັກຕ້ອງສຶກສາອົບຮົມ ສະມາຊິກພັກໃຫ້ເປັນ ແບບຢ່າງ ປະຕິບັດ ບັນດາໂຄງການວຽກງານ ທີ່ໄດ້ຕົກລົງນຳກັນ, ເຂົ້າຮ່ວມວຽກງານທັນລົງຮາກຖານ ນຳເອົາວຽກງານແນວໂຮມ ລົງເຄື່ອນໄຫວຢູ່ໝູ່ບ້ານຢ່າງຕັ້ງໜ້າ.

ພັກນຳພາແນວໂຮມ, ແມ່ນເປັນບັນຫາ ຫຼັກການ ແນໃສ່ ຮັບປະກັນ ໃຫ້ແນວໄດ້ຮັບການປັບປຸງ ແລະ ເປີດກວ້າງ ຢ່າງບໍ່ຢຸດຢັ້ງ. ພັກປະ

ຕິບັດສິດນຳພາ ຂອງຕົນ ໂດຍວິທີວາງແນວທາງ, ແຜນນະໂຍບາຍ, ນະໂຍບາຍອັນຖືກຕ້ອງອອກ, ສະໜອງຕອບ ຄວາມຮຽກຮ້ອງ, ຄວາມມຸ່ງມາດປາຖະໜາ, ສິດຜົນປະໂຫຍດອັນຊອບທຳ ຂອງບັນດາ ຊັ້ນຄົນ ປະຊາຊົນ: ພັກດຳເນີນວຽກງານໂຄສະນາ, ປຸກລະດົມ, ຊຸກຍູ້, ຈັດຕັ້ງກວດກາ ແລະ ໂດຍວິທີໃຫ້ສະມາຊິກພັກເປັນແບບຢ່າງ, ພຶດຕິກຳ ໃນປະຫວັດສາດ ແຕ່ມື້ສ້າງຕັ້ງແນວໂຮມ ມາປີ້ ໄດ້ຢັ້ງຢືນບັນດາພາຄີ ເຂົ້າຮ່ວມວຽກແນວໂຮມ ລ້ວນແຕ່ ຕື່ນຕົວ ຮັບຮູ້ບົດບາດນຳພາຂອງ ພັກ ຕະຫຼອດມາ.

ພັກນຳພາແນວໂຮມ ຜ່ານຄະນະພັກ ໃນອົງການແນວ ແລະ ຄະນະພັກນຳ ຢູ່ໃນບັນດາ ອົງຄະນະ ມະຫາຊົນ ທີ່ເປັນພາຄີ ຂອງແນວໂຮມ, ຜ່ານຕົວແທນ ຂອງຄະນະພັກ ທີ່ເຂົ້າຮ່ວມ ຢູ່ໃນຄະນະກຳມະການ ແນວຊັ້ນຕ່າງໆ ນັ້ນ, ສະເໜີແນວທາງນະໂຍບາຍ ແລະ ແຜນນະໂຍບາຍ ທີ່ພົວພັນເຖິງການເພີ້ມທະວີ ປັບປຸງກຸ່ມກ້ອນ ມະຫາສາມັກຄີ ທົ່ວປວງຊົນ ເພື່ອໃຫ້ບັນດາພາຄີ ໃນຄະນະກຳມະການແນວໂຮມປົກສາຫາລືຢ່າງມີປະຊາທິປະໄຕ, ໄປເຖິງຕົກລົງ ເຖິງການເປັນເອກະພາບກັນ ການເຄື່ອນໄຫວ ປຸກລະດົມບັນດາຊັ້ນຄົນ ຈັດຕັ້ງປະຕິບັດ. ພັກເປັນຫ່ວງໃຍບຳລຸງສ້າງພະນັກງານ ແລະ ນຳສະເໜີບັນດາສະມາຊິກພັກ ທີ່ມີຄຸນທາດ, ມີຄວາມອາດສາມາດ, ໄດ້ຮັບການສະໜັບສະໜູນ ແລະ ຄວາມເຊື່ອໝັ້ນ ຈາກບັນດາຊັ້ນຄົນ ໃນສັງຄົມ ແລະ ໄດ້ຮັບຄວາມເຊື່ອໝັ້ນ ຈາກ ມະຫາຊົນ ເຂົ້າເຮັດວຽກງານ ໃນແນວໂຮມ, ເພື່ອໃຫ້ແນວເລືອກເຟັ້ນ ແຕ່ງຕັ້ງ ໃຫ້ຖືກຕາມກົດລະບຽບ, ພັກນຳພາ ການປະສານສົມທົບ ແລະ ເປັນເອກະພາບ ໃນການເຄື່ອນໄຫວ ລະຫວ່າງບັດນາພາຄີ, ການປະສານສົມທົບ ລະຫວ່າງແນວໂຮມ ກັບອຳນາດການປົກຄອງ. ພັກເຄົາ

ລັບລັກສະນະເອກະລາດ ທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ອັນມີປະຕິດສ້າງ ຂອງ ແນວໂຮມ, ທ່າງງູງຟັງຄຳຄິດຄຳເຫັນ ທີ່ແນວໂຮມ ປະກອບກ່ຽວກັບການນຳພາຂອງພັກ ແລະ ການ ປະຕິບັດ ລະບຽບວິໄນ ຕໍ່ພະນັກງານ ແລະ ສະມາຊິກພັກ.

## 2. ການພົວພັນລະຫວ່າງແນວໂຮມກັບອຳນາດການປົກຄອງ

- ການພົວພັນ ລະຫວ່າງແນວໂຮມ ກັບອຳນາດການປົກຄອງ ແມ່ນການພົວພັນ ປະສານສົມທົບ ຢ່າງສະເໝີພາບ, ເຄົາລົບນັບຖື ຊຶ່ງກັນ ແລະ ກັນ ພ້ອມກັນປະຕິບັດບັນດາ ໜ້າທີ່ລວມ, ກືກັບຄວາມຮັບຜິດຊອບ ແລະ ສິດຂອບເຂດ ຕາມທີ່ໄດ້ກຳນົດ ຂອງ ລັດຖະທຳມະນູນ, ກົດໝາຍ ແລະ ບັນດາຂໍ້ກຳນົດ ເຮັດວຽກ ທີ່ໄດ້ປຶກສາຫາລື ລະອຽດແລ້ວ ລະຫວ່າງ ຄະນະກຳມະການ ແນວ ແລະ ອຳນາດການປົກຄອງ ແຕ່ລະຂັ້ນ.

- ເນື້ອໃນທີ່ແນວໂຮມເຂົ້າຮ່ວມ ກໍ່ສ້າງ, ຄວບຄຸມ ແລະ ປ້ອງກັນ ອຳນາດ ລັດລວມມີ :

+ ປຸກລະດົມ ປະຊາຊົນປະຕິບັດສິດ ເປັນເຈົ້າຂອງ ປະຊາຊົນຊັ້ນຄົນຕ່າງໆ, ປ່ອນບັດເລືອກຕັ້ງ ບັນດາອົງການຄວບຄຸມ ການເຄື່ອນໄຫວ ຂອງອົງການລັດ, ຜູ້ແທນທີ່ປະຊາຊົນ ເລືອກຕັ້ງ, ພະນັກງານ ແລະ ລັດຖະກອນ ຂອງລັດທຸກຄົນ.

+ ຕໍ່ສູ້ຕ້ານພະຍາດອາດຍາສິດຂຸນເສິກ, ສໍ້ລາດບັງຫຼວງ, ສ້າງຄວາມຫຍຸ້ງຍາກ ໃຫ້ປະຊາຊົນ, ລ່ວງລ້ຳສິດທິ ແລະ ຜົນປະໂຫຍດ ອັນກືກກົດໝາຍ ຂອງປະຊາຊົນ.

+ ເຂົ້າຮ່ວມກໍ່ສ້າງລັດຖະທຳມະນູນ, ກົດໝາຍ ແລະ ນະໂຍບາຍ.

+ ປະກອບຄຳຄິດຄຳເຫັນ ໃຫ້ບັນດາ ສຳນັກງານ ອົງການ ຂອງລັດຕ່າງໆ.

+ ຂົນຂວາຍ ປຸກລະດົມ ປະຊາຊົນຕື່ນຕົວປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ, ລະບຽບການຕ່າງໆ ຢ່າງເຂັ້ມງວດ, ພ້ອມທັງ ປະຕິບັດບັນດາຂໍ້ກຳນົດ, ກົດລະບຽບ ທີ່ໄດ້ສ້າງຂື້ນຢູ່ບັນດາໝູ່ບ້ານ.

- ອຳນາດການປົກຄອງນຳເອົາບັນຫາຕ່າງໆນຳສະເໜີໃຫ້ແນວໂຮມ, ບັນດາອົງຄະນະມະຫາຊົນ ເພື່ອເສີມຂະຫຍາຍ ກຳລັງແຮງທີ່ມີການຈັດຕັ້ງຂອງມະຫາຊົນ, ເຂົ້າຮ່ວມກໍ່ສ້າງ, ຄຸ້ມຄອງ ແລະ ປົກປັກຮັກສາ ອຳນາດການປົກຄອງຂັ້ນຕ່າງໆ.

- ໃນຂະບວນວິວັດ ກະກຽມ ບັນດາຂໍ້ກຳນົດ ກ່ຽວກັບ ການຄຸ້ມຄອງ ແລະ ດັດສົມ, ທີ່ມີການພົວພັນ ເຖິງສິດ ແລະ ພັນທະ ຂອງປະຊາຊົນ, ອຳນາດການປົກຄອງທຸກຂັ້ນ ຕ້ອງຫ່າງຽງຫູຟັງຄຳຄິດຄຳເຫັນ ຂອງແນວໂຮມ ແລະ ບັນດາອົງການມະຫາຊົນ. ຄະນະກຳມະການແນວ ຕ້ອງຕິດຕາມ ພຶດຕິກຳຊີວິດສັງຄົມ, ກຳແໜ້ນຄວາມມຸ່ງມາດປາດຖະໜາ ຂອງບັນດາ ຊັ້ນຄົນ ສະເໜີຄຳເຫັນກັບອຳນາດ ການປົກຄອງ ໃຫ້ຖືກຕົວຈິງ.

- ແນວໂຮມ ພ້ອມກັບອຳນາດລັດ ເອົາໃຈໃສ່ ແລະ ປົກປ້ອງສິດຜົນປະໂຫຍດ ອັນຊອບທຳ ຂອງປະຊາຊົນ, ປຸກລະດົມ ປະຊາຊົນ ຢູ້ຂະບວນການຮັກຊາດຕິດພັນກັບການຈັດຕັ້ງປະຕິບັດ ບັນດາໂຄງການ ພັດທະນາ ເສດຖະກິດ-ສັງຄົມຢ່າງມີໄຊ.

- ໜຶ່ງໃນບັນດາ ເນື້ອໃນ ສຳຄັນ ໃນການດັດແປງ ກົງຈັກອຳນາດລັດ ໃນເວລານີ້ ແມ່ນການເພີ້ມທະວີ ການພົວພັນ ຢ່າງສະໜິດແໜ້ນ ລະຫວ່າງ ອຳນາດລັດ ກັບແນວໂຮມ ແຫ່ງຊາດ ແລະ ບັນດາອົງ

ຄະນະມະຫາຊົນ, ແມ່ນພື້ນຖານ ການເມືອງຂອງອຳນາດ ການປົກຄອງ, ແນວໂຮມຕ້ອງຕັ້ງໜ້າ ເຂົ້າຮ່ວມກໍ່ສ້າງ, ປັບປຸງອຳນາດການປົກຄອງ ປະກອບສ່ວນ ປົກປ້ອງອຳນາດ ການປົກຄອງ ໃຫ້ບໍລິສຸດພຸດຜ່ອງ, ໜັກແໜ້ນ, ເຂັ້ມແຂງ ແລະ ເວລາໃດກໍ່ເປັນຕົວແທນ ອຳນາດການປົກຄອງ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນແທ້ຈິງ.

3. <u>ການພົວພັນ ລະຫວ່າງຄະນະປະຈຳແນວລາວ ສ້າງຊາດ ບັນດາການຈັດຕັ້ງທີ່ເປັນພາຄີ</u>

- ບັນດາອົງການຈັດຕັ້ງພາຄີ ທີ່ເຂົ້າຮ່ວມແນວໂຮມ ລ້ວນແຕ່ມີຄວາມເປັນເອກະລາດ ທາງດ້ານການຈັດຕັ້ງ, ລ້ວນແຕ່ມີຄວາມສະເໝີພາບ ທາງດ້ານສິດ ແລະ ຜົນປະໂຫຍດ, ມີຄວາມເປັນເອກະລາດ ທາງດ້ານຄວາມຮັບຜິດຊອບ ຕໍ່ໜ້າທີ່.

- ຄະນະປະຈຳ ຕ້ອງເອົາໃຈໃສ່ ປຶກສາຫາລື ປະສານງານ ກັບບັນດາການຈັດຕັ້ງ ທີ່ເປັນພາຄີ ເພື່ອຄວາມເປັນເອກະພາບ ໃນໂຄງການ, ໃນການເຄື່ອນໄຫວລວມແນ່ໃສ່ສ້າງກຳລັງແຮງ ປະຕິບັດບັນດາໜ້າທີ່ອັນສຳຄັນ ຂອງປະເທດຊາດ, ຂອງແຕ່ລະທ້ອງຖິ່ນ ແລະ ເອົາໃຈໃສ່ຫ່ວງໃຍນຳຊີວິດການເປັນຢູ່ຂອງປະຊາຊົນ.

- ການພົວພັນ ລະຫວ່າງຄະນະກຳມະການ ແນວໂຮມ ຂັ້ນເທິງກັບຂັ້ນລຸ່ມ ແມ່ນຕາມຫຼັກການ ຂັ້ນເທິງ ແນະນຳຂັ້ນລຸ່ມ, ກວດກາຊຸກຍູ້ວຽກງານ; ພິຈາລະນາ ອະນຸມັດ ການແຕ່ງຕັ້ງເພີ່ມຕື່ມ ຫຼື ປ່ຽນແປງຕຳແໜ່ງປະທານ, ຮອງປະທານ ແລະ ຄະນະກຳມະການແນວຂັ້ນລຸ່ມ ທີ່ຂຶ້ນກັບສິດຄຸ້ມຄອງ ຂອງຕົນໂດຍກົງ.

ຄະນະກຳມະການ ແນວຂັ້ນລຸ່ມ ປະຕິບັດ ທຸກໂຄງການ ແລະ ນະໂຍບາຍ ກໍຄືການເຄື່ອນໄຫວຕ່າງໆ ທີ່ຂັ້ນເທິງວາງອອກ ແລະ ມອບ

ໝາຍໃຫ້, ລາຍງານສະພາບການ, ຜົນສຳເລັດ, ຄົງຄ້າງ ໃນການປະຕິບັດໜ້າທີ່ ແລະ ປະກອບຄຳຄິດຄຳເຫັນ ໃຫ້ຂັ້ນເທິງ ໄດ້ຢ່າງພຽງພໍ.

ຄະນະກຳມະການ ແນວໃນຂັ້ນດຽວກັນປະຕິບັດລະບອບແລກປ່ຽນບົດຮຽນນຳກັນຕ້ອງປະສານສົມທົບກັບການເຄື່ອນໄຫວ ຕົວຈິງ ໃນການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ໃນການປະຕິບັດໜ້າທີ່ວຽກງານ.

V. ໜ້າທີ່ຂອງແນວລາວສ້າງຊາດ ໃນໄລຍະໃໝ່

ກອງປະຊຸມ ຜູ້ແທນປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ, ສາດສະໜາ ກໍຄືພາກສ່ວນຕ່າງໆ ຄັ້ງທີ III ໄດ້ກຳນົດໜ້າທີ່ລວມຂອງແນວໂຮມແມ່ນ : ເສີມຂະຫຍາຍມູນເຊື້ອຮັກຊາດ ຄວາມເອກອ້າງທະນົງໃຈຕໍ່ຄວາມເປັນຊາດລາວ, ເຈດຈຳນົງ ເປັນເຈົ້າຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ເພີ່ມທະວີຄວາມສາມັກຄີນະຫາສາມັກຄີ ສ້າງກຸ່ມກ້ອນ ນະຫາສາມະຄີ ທົ່ວປວງຊົນ ເປັນກຳລັງແຮງດຳເນີນພາລະກິດ ປ່ຽນແປງໃໝ່; ເຕົ້າໂຮມບັນດາເຜົ່າ ປະຕິບັດນະໂຍບາຍ ສະເໝີພາບ ລະຫວ່າງເຜົ່າຊົນຕ່າງໆ ແກ້ໄຂການໂຕນກັນລະຫວ່າງ ເຜົ່າຕ່າງໆໃນການດຳລົງຊີວິດ ໃນສັງຄົມ; ສູ້ຊົນເຮັດໃຫ້ ປະເທດຊາດ ຫລຸດພົ້ນອອກຈາກ ປະເທດດ້ອຍພັດທະນາ, ຫຼັງຫຼັງ ກ້າວຂຶ້ນໃຫ້ຮັ່ງມີ, ສັງຄົມ ມີຄວາມສະເໝີພາບ, ສີວິໄລ ແລະ ຍຸດຕິທຳ; ສ້າງປະເທດລາວສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ; ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນພາລະກິດສັນຕິພາບ, ເອກະລາດ, ປະຊາທິປະໄຕ ຢູ່ໃນໂລກ.

ເພື່ອປະຕິບັດ ໜ້າທີ່ລວມດັ່ງກ່າວນັ້ນ, ກອງປະຊຸມໃຫຍ່ກໍໄດ້ວາງບັນດາໜ້າທີ່ຕົ້ນຕໍ ຈຳນວນໜຶ່ງໃຫ້ຄະນະກຳມະການແນວລາວສ້າງຊາດຂັ້ນຕ່າງໆ ຈັດຕັ້ງປະຕິບັດ ດັ່ງນີ້:

1. **ສູ້ຊົນ ປະຕິບັດໂຄງການ ການເມືອງ 10 ຂໍ້ ທີ່ກອງປະຊຸມໃຫຍ່
ຜູ້ແທນ ທົ່ວປະເທດ ຄັ້ງທີ່ III ໄດ້ຮັບຮອງເອົາໃຫ້ກາຍເປັນບັນດາໂຄງ
ການລະອຽດ, ໄດ້ຮັບການຈັດຕັ້ງ ປະຕິບັດ ບັນລຸໝາກຜົນ :**

- ຕັ້ງໜ້າປະຕິບັດໂຄງການ ສຶກສາອົບຮົມ ການເມືອງ- ແນວ
ຄິດ ໃຫ້ທົ່ວປວງຊົນ ເພື່ອຍົກລະດັບຕື່ນຕົວ ຮັກຊາດ ຕິດພັນກັບຮັກລະ
ບອບໃໝ່, ເຊີດຊູນ້ຳໃຈ ເປັນເອກະລາດ ເປັນເຈົ້າຕົນເອງ ສ້າງ
ຄວາມເຂັ້ມແຂງ ໂດຍຕົນເອງ, ມີຄວາມຕັດສິນໃຈສູງ.

2. **ເພີ້ມທະວີເສີມຂະຫຍາຍມູນເຊື້ອ ແຫ່ງການເຕົ້າໂຮມຄວາມ
ສາມັກຄີ, ສ້າງກຸ່ມກ້ອນ ແຫ່ງມະຫາສາມັກຄີ ທົ່ວວົງຄະນາຍາດ ແຫ່ງ
ຊາດລາວ ເອກະພາບທຸກຊົນເຜົ່າ, ຊັ້ນຄົນ ແລະ ສາດສະໜາຕ່າງໆ:**

- ປະຕິບັດໂຄງການສາມັກຄີຊ່ວຍເຫຼືອ ກັນຂະຫຍາຍເສດຖະກິດ
ສິນຄ້າ ຊື່ງປຸກລະດົມ ຈັດຕັ້ງ ໃຫ້ໄດ້ຫຼາຍແຫຼ່ງທຶນ, ປ່ຽນໂຄງປະກອບ
ເສດຖະກິດ.

- ສາມັກຄີເສີມຂະຫຍາຍ ມູນເຊື້ອຮັກແພງ ເບິ່ງແຍງດູແລກັນ
ໃນການດຳລົງຊີວິດ, ການເຄື່ອນໄຫວມະນຸດສະທຳ ຕໍ່ທຸກປະເພດຄົນ.

- ສາມັກຄີ ເສີມຂະຫຍາຍປະຊາທິປະໄຕ, ປະຕິບັດສິດເປັນເຈົ້າ
ຂອງພົນລະເມືອງ ເພື່ອເຂົ້າຮ່ວມໃນການຄຸ້ມຄອງສັງຄົມ ແລະ ຄຸ້ມຄອງ
ເສດຖະກິດ.

- ສາມັກຄີຊ່ວຍເຫຼືອກັນ ແລະ ກັນ ແລະ ພ້ອມກັນສ້າງຊີວິດໃໝ່
ທີ່ຮັ່ງມີ, ຢູ່ດີກິນດີ.

- ສາມັກຄີກັບເບິ່ງແຍງພາລະກິດ ໃນການສຶກສາ, ວັດທະນະທໍາ ແລະ ສັງຄົມ ເພື່ອສ້າງບໍາລຸງຄົນລຸ້ນໃໝ່ ເຮັດໃຫ້ປັດໃຈ ຊັບພະຍາກອນມະນຸດ ໄດ້ຮັບຄວາມເອົາໃຈໃສ່.

ບັນດາໂຄງການຕ່າງໆ ດັ່ງທີ່ກ່າວມາຂ້າງເທິງ ແມ່ນຄໍາເນີນຢູ່ທຸກຂົງເຂດ, ແມ່ໃສ່ແກ້ໄຂທຸກເພດ, ທຸກຊົນຄົນ ແລະ ສາດສະໜາຕ່າງໆ.

3. <u>ປະຕິບັດ ແລະ ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ ໃນການເຂົ້າຮ່ວມກໍ່ສ້າງ, ກວດກາຄວບຄຸມ ແລະ ປົກປ້ອງອໍານາດລັດຂອງປະຊາຊົນ.</u>

- ເຂົ້າຮ່ວມກໍ່ສ້າງ ແລະ ປັບປຸງກົງຈັກລັດ, ປ່ອນບັດເລືອກຕັ້ງຜູ້ແທນ ປະຊາຊົນ ໃນສະພາ, ຕາງໜ້າປະຊາຊົນ ປຶກສາບັນຫາຕ່າງໆ, ແນວໂຮມ ເຂົ້າຮ່ວມການເລືອກເອົາຜູ້ຕາງໜ້າປະຊາຊົນ ໃນການ ຈັດຕັ້ງ ແລະ ສະພາ ໄກ່ເກ່ຍ (ສານ) ແນວເປັນບ່ອນທີ່ປະຊາຊົນເຂົ້າປຶກສາຫາລືຂໍ້ຫິດຄື້ນໍາ.

- ເຂົ້າຮ່ວມ ໃນການກໍ່ສ້າງ ແຜນນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ລະບຽບການຕ່າງໆ; ພ້ອມກັບປັ້ນກໍາບໍາເອົາໂຄສະນາ ເຜີຍແຜ່ ແລະ ປຸກລະດົມປະຊາຊົນ ປະຕິບັດກົດໝາຍ.

- ແນວໂຮມຕາງໜ້າ ໃຫ້ປະຊາຊົນ ກວດກາການເຄື່ອນໄຫວ ປະຕິບັດສິດເປັນເຈົ້າຂອງປະຊາຊົນ ຂອງບັນດາອົງການຂອງລັດ, ຂອງພະນັກງານລັດຖະກອນ ແລະ ເຈົ້າໜ້າທີ່ ຂອງລັດ.

- ແນວເປັນອົງການແນະນໍາ ແລະ ສ້າງເງື່ອນໄຂ ເພື່ອໃຫ້ບັນດາຊົນຄົນຕ່າງໆ ຂອງປະຊາຊົນ ຢູ່ພື້ນການ ໄດ້ເຂົ້າຮ່ວມຢ່າງກວ້າງ

ຂວາງ, ສະໝໍ່າສະເໝີ ໃນການຄຸ້ມຄອງເສດຖະກິດ ແລະ ຊີວິດຂອງສັງຄົມ.

4. ແນວລາວສ້າງຊາດ ພະຍາຍາມເຂົ້າຮ່ວມແກ້ໄຂ ຄວາມຫຍຸ້ງຍາກ ໃນວຽກງານບັນດາເຜົ່າ, ເຕົ້າໂຮມຄວາມອາດສາມາດ ຂອງບັນດາຊັ້ນຄົນ ເຂົ້າໃນພາລະກິດປ່ຽນແປງໃໝ່.

- ເຂົ້າຮ່ວມປຸກລະດົມ ບັນດາຊົນເຜົ່າ ໃຫ້ເຊື່ອມຊຶມນະໂຍບາຍ ສາມັກຄີ ໃນວົງຄະນາຍາດ ແຫ່ງຊາດລາວ ເອກະພາບ ແມ່ນກ່ອນອື່ນໝົດ, ແຕ່ລະເຜົ່າ ເປັນເຈົ້າການ ປະລະຄວາມອະຄະຕິ, ຄວາມອາຄາດບາດໝາງ ຊຶ່ງກັນ ແລະ ກັນ, ເຜົ່າສ່ວນຫຼາຍດູຖູກໝິ່ນປະໝາດ ເຜົ່າຊົນສ່ວນນ້ອຍ...

- ເຂົ້າຮ່ວມໃນການພັດທະນາຊົນນະບົດ, ການຈັດສັນອາຊີບ, ການສ້າງອາຊີບໃໝ່ໃຫ້ຊາວຊົນນະບົດ, ການລົບລ້າງ ຄວາມທຸກຍາກ ຄວາມຫຼ້າຫຼັງ, ແກ້ໄຂການໂຕນກັນທາງດ້ານລາຍຮັບ ແລະ ການດໍາລົງຊີວິດ.

- ການເຕົ້າໂຮມ ຄວາມມີທ່າແຮງ ຂອງບັນດາເຜົ່າ, ມູນເຊື້ອດ້ານຕ່າງໆ, ເອກະລັກດ້ານວັດທະນະທໍາ, ຮີດຄອງປະເພນີ, ແນວຄິດຈິນຕະນາການຂອງ ແຕ່ລະເຜົ່າ.

* ກ່ຽວກັບບັນຫາຊັ້ນຄົນ ຄວນເອົາໃຈໃສ່ :

- ສ້າງສະຕິເປັນເຈົ້າ ຢູ່ໃນວົງຄະນາຍາດ ແຫ່ງຊາດ ເຮັດໃຫ້ມີຄວາມເອກອັ້ງທະນົງໃຈ, ດໍາລົງຊີວິດ ຢ່າງມີລັກສະນະເອກະລາດ, ແຕ່ທຸກຊັ້ນຄົນລ້ວນແຕ່ເປັນເອກະພາບ ນໍາຈຸດໝາຍລວມຂອງຊາດ.

- ປຸກລະດົມ ຂົນຂວາຍ ເຕົ້າໂຮມ ໃຫ້ໄດ້ຄວາມອາດສາມາດ ທາງດ້ານວັດຖຸ, ທາງດ້ານສະຕິປັນຍາຄວາມຮູ້ ຄວາມສາມາດ, ຄວາມສະຫຼາດແຫຼມຄົມ ເຂົ້າໃນພາລະກິດ ຂອງຊາດ.

5. <u>ແນວລາວສ້າງຊາດກັບສາດສະໜາ</u>

- ສຳພັນທະພາບ ກັບອົງການພຸດທະສາດສະໜາ ສຳພັນແຫ່ງປະເທດລາວ, ພ້ອມກັບປຶກສາຫາລື ນະໂຍບາຍ ໃນການປົກປັກຮັກສາ ແລະ ເສີມຂະຫຍາຍ ຄຸນປະໂຫຍດ ດ້ານຕັ້ງໜ້າ ຂອງສາດສະໜາດ ເຂົ້າໃນ ການເຕົ້າໂຮມຄວາມສາມັກຄີ ປະຊາຊົນ ໃນຊາດ; ພ້ອມກັນນັ້ນກໍແນະນຳ ເຄົາລົບສິດເຊື່ອຖື ແລະ ບໍ່ເຊື່ອຖື ຂອງພົນລະເມືອງ.

- ແນະນຳພົນລະເມືອງ ໃນການອຸປະຖຳ, ການເຮັດບຸນສິນກິນທານ, ບັນດາປະຕິບັດຫຼັກສິນທຳ ຄຳສັ່ງສອນ ຂອງພະພຸດທະເຈົ້າທີ່ຢູ່ໃນສິນກິນໃນທຳ, ນຳໃຊ້ຫຼັກສິນທຳ ຄຳສັ່ງສອນ ດັ່ງກ່າວ ປະກອບສ່ວນສ້າງ ແລະ ບຳລຸງພະນັກງານ, ລັດຖະກອນ ແລະ ພົນລະເມືອງ.

- ແນະນຳ ໃນການປົກປັກຮັກສາ ໂບຮານວັດຖຸ, ປູ່ຊະນີຍະສະຖານ ແລະ ເຄື່ອງວັດຖຸບູຮານ ທີ່ມີ ຄ່າທີ່ຢູ່ໃນພະທາດ, ກຸຕິວິຫານ, ສິມ ຕ່າງໆ ຢ່າງເຂັ້ມງວດກວດຂັນ.

6. <u>ແນວລາວສ້າງຊາດຕັ້ງໜ້າປຸກລະດົມຈັດຕັ້ງມະຫາຊົນ ປະຕິບັດບັນດາຂະບວນການອຽກງານຕ່າງໆຂອງພັກ, ຂອງລັດເປັນຢ່າງດີ</u> :

ກ. <u>ຂະບວນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສຸກ ທາງການເມືອງ, ຄວາມເປັນລະບຽບຮຽບຮ້ອຍ ທາງສັງຄົມ.</u>

- ກ່ອນອື່ນໝົດ, ແມ່ນປຸກລະດົມປະຊາຊົນ ຍົກສູງສະຕິລະວັງຕົວ, ເພີ່ມທະວີຄວາມສາມັກຄີກັນທຸບມ້າງກົນອຸບາຍມ້າງເພທຳລາຍ

ຂອງສັດຕູ ໃຫ້ປະລາໄຊ ຢ່າງຮາບຄາບ, ເຮັດສຳເລັດພາລະກິດ ປະຕິວັດ ຂອງປະຊາຊົນເຮົາ.

- ປຸກລະດົມ ປະຊາຊົນເຂົ້າຮ່ວມກໍ່ສ້າງກອງທັບປະຊາຊົນ, ກໍ່ສ້າງກຳລັງປ້ອງກັນຄວາມສະຫງົບສຸກ, ປະຕິບັດນະໂຍບາຍແນວຫຼັງ ຕໍ່ກຳລັງປະກອບອາວຸດ ຂອງປະຊາຊົນ ແລະ ເພີ້ມທະວີຄວາມສາມັກຄີລະຫວ່າງກອງທັບກັບປະຊາຊົນ.

- ປຸກລະດົມປະຊາຊົນ ໃນທົ່ວປວງຊົນ ເຂົ້າຮ່ວມວຽກງານປ້ອງກັນຄວາມສະຫງົບສຸກ, ຄວາມເປັນລະບຽບຮຽບຮ້ອຍ ທາງສັງຄົມ ເປັນຢ່າງດີ, ສັ່ງສອນອົບຮົມລູກຫຼານ ຂອງຕົນ ໃຫ້ເຄົາລົບນັບຖື ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ.

ຂ. ປຸກລະດົມປະຊາຊົນ ບັນດາຊົນເຜົ່າ ແລະ ຊັ້ນຄົນຕ່າງໆ ຊຸກຍູ້ການຜະລິດ, ປະຢັດສັດທ່ຽງ, ເລີ່ມຈາກຕົນເອງ ແຕ່ລະຄົນບົ່ນຕົວຂື້ນຊ່ວຍເຫຼືອກັນ ດັດແປງຊີວິດການເປັນຢູ່, ສ້າງໃຫ້ຮັ່ງມີ ກົກຕ້ອງ ຕາມກົດໝາຍ.

- ພ້ອມກັບອຳນາດການປົກຄອງ ຊຸກຍູ້ການກໍ່ສ້າງ ໂຄງກະກອບເສດຖະກິດ ຕາມທິດກະສິກຳ-ປ່າໄມ້ ຕິດພັນກັບອຸດສາຫະກຳ ປຸງແຕ່ງບໍລິການ ແຕ່ຫົວທີໂລດ, ຊຸກຍູ້ການຜະລິດສິນຄ້າ ຫຼາຍພາກສ່ວນ, ຕາມກົນໄກ ຕະຫຼາດ ທີ່ມີການນຳພາ ຂອງພັກ ແລະ ການຄຸ້ມຄອງຂອງລັດ.

- ປຸກລະດົມປະຊາຊົນ ປະຕິບັດ ຢ່າງດີ 8 ໂຄງການທີ່ພັກ ແລະ ລັດວາງອອກ ເປັນຕົ້ນ : ໂຄງການຜະລິດສະບຽງອາຫານ, ໂຄງການຜະລິດສິນຄ້າ, ໂຄງການຈຳກັດ ກ້າວເກືອຢຸດຕິການຖາງປ່າເຮັດໄຮ່, ໂຄງການພັດທະນາຊັບພະຍາກອນມະນຸດ ...

- ປຸກລະດົມທຸກພາກສ່ວນ ເສດຖະກິດ ກໍ່ສ້າງພື້ນຖານ ວິຊາຊີບ, ສອນວິຊາຊີບ, ສ້າງໃຫ້ປະຊາຊົນ ມີວຽກເຮັດງານທຳ, ເຮັດຫຼາຍຮູບ, ຫຼາຍລະດັບ ແລະ ຂະໜາດເໝາະສົມ.

- ປຸກລະດົມທ້ອງຖິ່ນ ເຂົ້າຮ່ວມຂະບວນການລົບລ້າງ ຄວາມອຶດຫິວ, ເຮັດໃຫ້ຮັ່ງມີກົງກັບຕາມກົດໝາຍ, ຂະບວນການດຸໝັ່ນຂະຫຍັນ ກໍ່ສ້າງປະເທດຊາດ, ຂະບວນການປະຢັດກໍ່ສ້າງບ້ານເມືອງ.

ຄ. <u>ປຸກລະດົມຂະບວນປະຊາຊົນ ພ້ອມກັບລັດປະຕິບັດ ບັນດາໂຄງການນະໂຍບາຍສຶກສາ, ວັດທະນະທຳ, ສັງຄົມ ທຸກຢ່າງຕາມທີ່ລັດກັບປະຊາຊົນ ພ້ອມກັນເຮັດ</u>:

- ປະຕິບັດໂຄງການປະຕິຮູບ ການສຶກສາທີ່ລັດ ແລະ ປະຊາຊົນພ້ອມກັນເຮັດ, ກ່ອນອື່ນໝົດ, ຊຸກຍູ້ ຂະບວນປະຊາສຶກສາ ລົບລ້າງໄພກືກໜັງສື, ຂະບວນປະກົນ ແລະ ປະກົນສົມບູນ, ມັດທະຍົມ, ເຮັດໃຫ້ເດັກນ້ອຍໄດ້ຮຳຮຽນຕາມລະບຽບ ຂອງອາຍຸກະສຽນ.

- ເຂົ້າຮ່ວມ ຂະບວນການກໍ່ສ້າງ ຄອບຄົວວັດທະນະທຳໃໝ່, ມີລະບຽບດຳລົງຊີວິດໂດຍຄວາມສີວິໄລ, ປາດສະຈາກທຸກໄພສັງຄົມ ທີ່ຫຼາງຫຼາຍຕ່າງໆ ຮັກສາ ແລະ ເສີມຂະຫຍາຍວັດທະນະທຳ ທີ່ມີເອກະລັກຂອງຊາດ ແລະ ຂອງແຕ່ລະເຜົ່າຊົນ ເປັນຢ່າງດີ.

- ປະສານສົມທົບ ຂະແໜງສະຫວັດດີການ ແຮງງານ ສັງຄົມເອົາໃຈໃສ່ ເສີມຂະຫຍາຍ ຄວາມອາດສາມາດ, ທາງດ້ານມູນເຊື້ອຂອງບັນດາຄອບຄົວ, ສົ່ງເສີມຊຸກຍູ້ການຮ່ຳຮຽນວິຊາຊີບໃຫ້ຫຼາຍຂື້ນ.

ເອົາໃຈໃສ່ ປະຕິບັດບັນດານະໂຍບາຍ ບູລິມະສິດ ຕໍ່ບັນດາເຜົ່າ ຊົນ ສ່ວນນ້ອຍ ຄື : ການປະຕິບັດສິດເສລີພາບ, ຕໍ່ຜູ້ທຸກຍາກ ຕ້ອງມີການຊ່ວຍເຫຼືອ, ຕໍ່ຜູ້ຊັດເຊພະເນຈອນ ຕ້ອງມີການເກື້ອກູນ ແລະ ອື່ນໆ.

ຕໍ່ຄອບຄົວ ແລະ ບຸກຄົນ ທີ່ມີພົນງານ ຕໍ່ປະເທດຊາດ ຕ້ອງໄດ້ຍ້ອງຍໍ, ໃຫ້ນາມມະຍົດ ທີ່ເໝາະສົມ.

- ເອົາໃຈໃສ່ ລະບົບສຸກສາລາ : ບຸກລະດົມຂະບວນອານາໄມ 3 ສະອາດ, ກໍ່ສ້າງບ່ອນກວດພະຍາດ, ປິ່ນປົວພະຍາດໃຫ້ປະຊາຊົນ.

໗. <u>ເປີດກວ້າງ ແລະ ຂະຫຍາຍການພົວພັນມິດຕະພາບກັບນາໆຊາດ ເປັນຕົ້ນແມ່ນ ກັບບັນດາປະເທດເພື່ອນມິດ.</u> ທາງນີ້ກໍ່ເພື່ອຍາດແຍ້ງເອົາການສະໜັບສະໜູນ ແລະ ຊ່ວຍເຫຼືອ ທາງດ້ານວັດຖຸ ແລະ ຈິດໃຈ.

ຂົນຂວາຍຍາດແຍ້ງດູດດຶງ ຮັດໃຫ້ ພີ່ນ້ອງທີ່ມີເຊື້ອສາຍລາວ ທີ່ພັກພາອາໃສທຳມາຫາກິນ ຢູ່ຕ່າງປະເທດ, ໃຫ້ຮັບຮູ້ແຈ້ງຄວາມເປັນຈິງຂອງ ປະເທດຊາດ, ມີຈິດໃຈອ່ວາຍໜ້າຫາປະເທດຊາດຄືນ.

# ພາກທີ່ສາມ

# ປັບປຸງການຈັດຕັ້ງ, ປ່ຽນໃໝ່ເນື້ອໃນ ແລະ ວິທີການເຄື່ອນໄຫວ ຂອງແນວຂັ້ນເມືອງ ແລະ ຮາກຖານບ້ານ

## I. ທີ່ຕັ້ງ, ບົດບາດຄວາມສຳຄັນຂັ້ນເມືອງ ແລະ ຮາກຖານບ້ານ

- ຢູ່ປະເທດເຮົາຂັ້ນຕາແສງກໍ່ກັບລ້າງແລ້ວ, ການປົກຄອງບໍລິຫານກໍ່ວ່າຂັ້ນເມືອງ ເປັນຫົວໜ່ວຍແຜນການຕິດພັນກັບຂັ້ນບ້ານ, ພື້ນທີ່ຢູ່ຂັ້ນບ້ານ ເປັນບ່ອນທີ່ປະຊາຊົນ ບັນດາເຜົ່າຊົນ, ຊົນຄົນຕ່າງໆ ເຕົ້າໂຮມກັນດຳລົງຊີວິດຢູ່, ດັ່ງນັ້ນພວກເຮົາຈຶ່ງກໍ່ວ່າ ບ້ານແມ່ນເປັນຮາກຖານ. ຢູ່ບັນດາຕົວເມືອງທີ່ກໍ່ວ່າເປັນເມືອງໃຫຍ່. ນັ້ນທັດຈາກເມືອງລົງມາ ອາດເອີ້ນເປັນຄຸ້ມ ຊຶ່ງປະກອບມີຫຼາຍບ້ານ ລວມເປັນຄຸ້ມ.

- ຂັ້ນບ້ານ ມັນໄດ້ເປັນບ່ອນເຕົ້າໂຮມກັນດຳລົງຊີວິດຢູ່, ມັນບໍ່ໄດ້ພັນແຍກຊົນຊັ້ນ, ຊົນຊາດ ຫຼື ຊົນເຜົ່າ ແຕ່ຢ່າງໃດເລີຍ, ມັນເປັນບ່ອນທີ່ປະຊາຊົນ ພົວພັນນຳການດຳລົງຊີວິດ ເປັນປະຈຳວັນ, ມັນເປັນພື້ນທີ່ປະຊາຊົນ ປະຕິບັດສິດເປັນເຈົ້າຂອງ ຕົນແຕ່ລະຄົນ, ເປັນບ່ອນທີ່ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຕ່າງໆ; ພ້ອມກັນນັ້ນກໍ່ເປັນບ່ອນພົນລະເມືອງ ທຸກຄົນ ປະຕິບັດກົດໝາຍ ຂອງລັດ ແລະ ປະຕິບັດແຜນນະໂຍບາຍ ຂອງແນວໂຮມ. ພື້ນທີ່ຄຸ້ມ ຫຼື ບ້ານເປັນບ່ອນປະຊາຊົນຊົນຄົນຕ່າງໆ ດຳລົງຊີວິດ ຕິດພັນກັບພົນປະໂຫຍດຕົວຈິງທາງດ້ານເສດຖະກິດ, ວັດທະນະທຳ ແລະ ສັງຄົມ, ດັ່ງນັ້ນ ມັນເປັນໄມ້ຫຼາວັດແທກປະສິດທິພົນ ຂອງວຽກງານແນວໂຮມ.

- ຊຸມປີຜ່ານມານີ້, ການຈັດຕັ້ງ, ການເຄື່ອນໄຫວ ຂອງວຽກງານແນວໂຮມ ເຖິງວ່າມີຄວາມກ້າວໜ້າບາງປະການ ຢູ່ຮາກຖານ ໃນລະດັບຕ່າງກັນ ຢູ່ໃນແຕ່ລະທ້ອງຖິ່ນ, ແຕ່ເມື່ອທຽບໃສ່ຄຳຮຽກຮ້ອງຂອງວຽກງານ ປ່ຽນແປງໃໝ່ແລ້ວ ວຽກງານແນວໂຮມ ຢູ່ຂັ້ນບ້ານບໍ່ທັນກັບທີ່ຕັ້ງບົດບາດອັນສຳຄັນ ຂອງມັນໄດ້, ບໍ່ທັນສະແດງໃນຄວາມຮຽກຮ້ອງໃຫ້ເປີດກວ້າງແນວໂຮມ ດ້ານການຈັດຕັ້ງ, ການເຄື່ອນໄຫວກໍບໍ່ຄ່ອຍສອດຄ່ອງ ກັບສະພາບການ ຕົວຈິງ ຂອງແຕ່ລະບ່ອນ.

- ຢູ່ພື້ນທີ່ປະຊາຊົນເຕົ້າໂຮມກັນຢູ່ຄື : ຄຸ້ມ, ບ້ານ ແລະ ກຸ່ມເສດຖະກິດ-ເຕັກນິກ, ວັດທະນະທຳ ໄດ້ສະແດງອອກຜ່ານຂະບວນວິວັດ ແຫ່ງການປ່ຽນແປງໃໝ່ ດ້ານເສດຖະກິດ-ສັງຄົມ ນັບມື້ ຂັ້ນບ້ານມີບົດບາດອັນສຳຄັນ ໃນຂະບວນປະຕິບັດ ແນວທາງປ່ຽນແປງໃໝ່. ແຕ່ການກະທົບພື້ນຖານ ເສດຖະກິດ ສິນຄ້າ ຫຼາຍພາກສ່ວນ, ຍັງຄົງເຄື່ອນໜ່ຽງຕາມກົນໄກຕະຫຼາດ; ການພັນແຍກຜູ້ທຸກ-ຜູ້ຮັ່ງ, ຜ່ານຂະບວນວິວັດຫັນເປັນປະຊາທິປະໄຕ ໃນຊີວິດສັງຄົມ ແລະ ໜ້າທີ່ລະອຽດຂອງການປະຕິວັດ ໃນໄລຍະໃໝ່ ພວມຕັ້ງບັນຫາ ອອກມາໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ແນວໂຮມ ຢູ່ຂັ້ນຮາກຖານ ບ້ານຕ້ອງປ່ຽນຕົນເອງປະຕິບັດໃຫ້ມີບົດບາດ, ໜ້າທີ່ ທີ່ຖືກມອບໝາຍ ປະກອບສ່ວນ ພ້ອມກັບພັກ ແລະ ອຳນາດການປົກຄອງ ຮາກຖານ ໃຫ້ພາລະກິດປ່ຽນໃໝ່ ໄດ້ຮັບໄຊຊະນະ, ເພາະສະນັ້ນ ປັບປຸງ ການຈັດຕັ້ງ, ປ່ຽນໃໝ່ໃນ ວິທີການເຄື່ອນໄຫວຂອງແນວໂຮມ ຮາກຖານ ເປັນຄວາມຮຽກຮ້ອງຕ້ອງການຢ່າງຄັ່ງຮ້ອນ, ນັ້ນແມ່ນປັດໃຈອັນໜຶ່ງໃນບັນດາປັດໃຈຕັດສິນໄຊຊະນະຂອງໂຄງການ ແນວໂຮມແຫ່ງຊາດລາວ ໂດຍກອງປະຊຸມ ໃຫຍ່ທີ III ຂອງແນວໂຮມວາງອອກ.

## II. ປັບປຸງ ແລະ ເປີດກວ້າງແນວໂຮມຢູ່ຂັ້ນເມືອງແລະຮາກຖານ

### ກ. ແນວລາວສ້າງຊາດຂັ້ນເມືອງ

1. ແນວລາວສ້າງຊາດເມືອງ ຕ້ອງໄດ້ປັບປຸງ ແລະ ເປີດກວ້າງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ໃນຕົວຈິງ ເມືອງ ແມ່ນຂັ້ນ ຫົວໜ່ວຍແຜນການ, ມີຫຼາຍຄຸ້ມ, ຫຼາຍບ້ານຂຶ້ນກັບເມືອງໂດຍກົງ, ເມືອງເປັນຂັ້ນທີ່ຕິດພັນກັບຮາກຖານບ້ານໂດຍກົງ, ການຈັດຕັ້ງແນວຢູ່ຂັ້ນເມືອງ ແມ່ນ ການເຕົ້າກຸ່ມກ້ອນມະຫາສາມັກຄີ ທົ່ວປວງຊົນ, ແນໃສ່ຕິດພັນກັບຮາກຖານຄຸ້ມ, ກຸ່ມບ້ານ ແລະ ບ້ານຊີ້ນຳ ຂະບວນການເຄື່ອນໄຫວໃຫ້ດີ.

2. <u>ຄະນະກຳມະການແນວລາວສ້າງຊາດ ເມືອງລວມມີພາກສ່ວນດັ່ງນີ້:</u>

- ຜູ້ແທນບັນດາການຈັດຕັ້ງ ພາຄີ ລວມມີ : ຄະນະພັກເມືອງ, ສະຫະພັນກຳມະບານເມືອງ, ສະຫະພັນແມ່ຍິງລາວ, ຄະນະຊາວໜຸ່ມເມືອງ, ສະມາຄົມຕ່າງໆ (ຖ້າມີ) ນອກນີ້ຍັງມີ :

- ບັນດາບຸກຄົນທີ່ເປັນຕົວແທນ ເຜົ່າຊົນແຕ່ລະເຜົ່າ, ຕົວແທນຂອງບັນດາຊັ້ນຄົນຄື : ຊົນຊັ້ນຊາວກະສິກອນ, ນັກຮຽນຮູ້ປັນຍາຊົນ, ຕົວແທນນັກປະຕິວັດອາວຸໂສ (ບຳນານ), ຜູ້ຊົງຄຸນວຸດທິຮັກຊາດ, ນັກທຸລະກິດ ທີ່ດີເດັ່ນ, ນອກນີ້ຍັງມີຕົວແທນ ບັນດາໝູ່ບ້ານ, ຕົວແທນຂອງສາດສະໜາ.

- ບໍ່ຈຳເປັນຕ້ອງມີຕົວແທນ ຂອງຂະແໜງການຕ່າງໆ ຂອງອຳນາດການປົກຄອງ ເຂົ້າໃນຄະນະກຳມະການແນວຂັ້ນເມືອງ ຄື : ທະຫານ, ຕຳຫຼວດ, ຄະນະປົກຄອງ, ໄອຍະການ, ສານ, ກົດໝາຍ ແລະ ອື່ນໆ.

- ຄະນະກຳມະການ ແນວລາວສ້າງຊາດເມືອງ, ມີສິດແຕ່ງຕັ້ງຕາໜ່າງແນວໂຮມຢູ່ ຄຸ້ມ, ກຸ່ມບ້ານ ເພື່ອເປັນຕາໜ່າງລົງສູ່ຮາກຖານປະຊາຊົນ, ພັນລະຫາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍຕ່າງໆ ຂອງແນວຢູ່ຮາກຖານ.

- ຈຳນວນ ຄະນະກຳມະການ ແນວເມືອງ, ໂດຍແມ່ນກອງປະຊຸມໃຫຍ່ ຂັ້ນເມືອງປຶກສາຕົກລົງ; ພ້ອມກັບນັ້ນກໍປະສົມປະສານກັບຄະນະພັກ ໄດ້ຮັບຄວາມເຫັນດີຈາກຄະນະພັກ.

- ຕ້ອງຮັບປະກັນອັດຕາສ່ວນ ອັນເໝາະສົມ ດຶງດູດເອົາຜູ້ທີ່ຢູ່ນອກສະໝັກເຂົ້າຮ່ວມ ໃນຄະນະກຳມະການ ແນວ, ຕົວຈິງອັນນີ້ແມ່ນປະຕິບັດນະຫາສາມັກຄີ ທົ່ວປວງຊົນ.

3. <u>ໜ້າທີ່ຄະນະປະຈຳແນວເມືອງ</u>

ກ. ຄະນະກຳມະການແນວລາວສ້າງຊາດເມືອງ, ຜ່ານການປຶກສາຫາລືຢ່າງມີປະຊາທິປະໄຕ ໃນກອງປະຊຸມ ແຕ່ງຕັ້ງປະກອບມີ : ປະທານ, ຮອງປະທານ, ກຳມະການ ປະຈຳ 1 ຄົນ. ຄະນະປະຈຳເຮັດວຽກຕາມຫຼັກການ ຄື : ປຶກສາຫາລື ແລະ ຕົກລົງເປັນຄະນະ, ມອບໝາຍໃຫ້ບຸກຄົນຮັບຜິດຊອບວຽກງານ.

ຂ. <u>ໜ້າທີ່ຂອງຄະນະປະຈຳ</u>

- ຈັດຕັ້ງປະຕິບັດໂຄງການເຄື່ອນໄຫວ ທີ່ຄະນະກຳມະການ ແນວຂັ້ນຂອງຕົນວາງອອກ ແລະ ບັນດາແຜນນະໂຍບາຍ ທີ່ຄະນະກຳມະການແນວໂຮມທີ່ຂັ້ນເທິງວາງອອກ ຢ່າງເຂັ້ມງວດ.

- ກະກຽມບັນດາວຽກງານ ທີ່ຈະເຂົ້າຮ່ວມ ປະກອບຄຳເຫັນ ໃຫ້ຄະນພັກ, ກັບອຳນາດການປົກຄອງ ແນວໃດ, ຫຼັງຈາກນັ້ນ ສະເໜີຜ່ານກອງປະຊຸມຄະນະກຳມະການແນວຂັ້ນຂອງຕົນຕົກລົງ.

- ແກ້ໄຂ ບັນດາວຽກງານຄະນະກຳມະການ ແນວຂັ້ນເມືອງ ຈັດຕັ້ງ ແລະ ແນະນຳ ນຳພາ ແນວຮາກຖານບ້ານເຄື່ອນໄຫວ ວຽກງານຕ່າງໆ ຂອງແນວໂຮມ;

ຄ. ການົດເວລາຄະນະກຳມະການແນວລາວຄົບຄະນະປະຊຸມ

- ກອງປະຊຸມຄະນະກຳມະການແນວລາວສ້າງຊາດເມືອງ ປະຊຸມຄົບຄະນະ 6 ເດືອນ ເທື່ອເພື່ອສະຫລຸບຕີລາຄາວຽກງານໃນປີຜ່ານມາ, ວາງໂຄງການວຽກງານປີຕໍ່ໄປອອກ.

- ກ່ອນຈະຮຽກປະຊຸມ ຄະນະປະຈຳແນວເມືອງ ຕ້ອງກະກຽມເນື້ອໃນ ຢ່າງຮອບຄອບ, ຍາດແຍ້ງຄຳຄິດຄຳເຫັນ ຈາກຄະນະພັກ ແລະ ຄຳເຫັນ ຂອງຂັ້ນເທິງ.

- ໃນກອງປະຊຸມ ຕ້ອງປຶກສາຫາລືລະອຽດ ແລະ ມອບໝາຍໜ້າທີ່ໃຫ້ແຕ່ລະພາຄີ ທີ່ເຂົ້າຮ່ວມ ໃນຄະນະກຳມະການ ແນວໂຮມຢ່າງລະອຽດ, ເພື່ອໃຫ້ທຸກຄົນລ້ວນແຕ່ມີວຽກເຮັດ ແລະ ມີຄວາມຮັບຜິດຊອບເສີມຂະຫຍາຍກຳລັງແຮງ ແຫ່ງຄວາມສາມາດ ຂອງທຸກພາຄີ.

ງ. ທິດທາງເຄື່ອນໄຫວ ຂອງຄະນະກຳມະການແນວເມືອງ

ທິດທາງເຄື່ອນໄຫວ ຂອງຄະນະກຳມະການ ແນວລາວ ສ້າງຊາດ ອຸດົມຮັ່ງມີ ທີ່ສຸດ, ມີຫລາຍຮູບຫລາຍສີ ແລະ ປ່ຽນແປງຢ່າງບໍ່ຢຸດຢັ້ງ, ແນວໂຮມຂັ້ນຕ່າງໆ ຕ້ອງໝູນໃຊ້ ຢ່າງມີໄຫວພິບ, ເໝາະສົມ ກັບລະດັບ ແລະ ສະພາບການຕົວຈິ ແຕ່ລະທ້ອງຖິ່ນ ກໍຄື ແຕ່ລະວຽກ:

1. ປະສານສົມທົບ ແລະ ເປັນເອກະພາບ ໃນການເຄື່ອນໄຫວ ລະຫວ່າງບັນດາພາຄີ:

- ອັນນີ້ບໍ່ພຽງແຕ່ແມ່ນທິດທາງເຄື່ອນໄຫວເທົ່ານັ້ນ ມັນທັງແມ່ນພາລະບົດບາດ, ທັງແມ່ນຫຼັກການເຮັດວຽກ ຂອງແນວໂຮມ, ການປະ

ສານສົມທົບ ເປັນເອກະພາບ ໃນການເຄື່ອນໄຫວ ນັບໄດ້ດຳເນີນແຕ່ສູນກາງ ລົງເຖິງທ້ອງຖິ່ນ ແລະ ຮາກຖານໝົດທຸກຂົງເຂດ ຄື : ເຂົ້າຮ່ວມຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ຄຸ້ມຄອງສັງຄົມ, ກໍ່ສ້າງແຜນນະໂຍບາຍ, ນະໂຍບາຍ, ກົດໝາຍ; ຕິດຕາມ ການເຄື່ອນໄຫວ ຂອງບັນດາອົງການລັດ; ການປຸກລະດົມບັນດາຂະບວນການປະຕິບັດ ນະໂຍບາຍເສດຖະກິດ-ສັງຄົມ, ບັນດາໜ້າທີ່ປ້ອງກັນຊາດ, ປ້ອງກັນຄວາມສະຫງົບສຸກ, ດັດແປງແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ແລະ ອື່ນໆ.

- ການປະສານສົມທົບ ແລະ ເປັນເອກະພາບໃນການເຄື່ອນໄຫວທີ່ບັນດາອົງການພາຄີ ຫຼື ສ່ວນຫຼາຍແມ່ນບັນດາອົງການພາຄີລ້ວນແຕ່ມີຄວາມຮັບຜິດຊອບ ແລະ ມີພົນປະໂຫຍດ, ມີແຕ່ເຮັດແນວນັ້ນ ຈຶ່ງຈະເຕົ້າໂຮມ ແລະ ເສີມຂະຫຍາຍກຳລັງແຮງສ້າງລວມຂອງທຸກຊັ້ນຄົນ ໃນສັງຄົມໄດ້.

ຄະນະປະຈຳແນວເມືອງ ເປັນຜູ້ທີ່ເອົາໃຈໃສ່ຊີ້ນຳ ເຮັດວຽກສົມທົບ ແລະ ເປັນເອກະພາບໃນການເຄື່ອນໄຫວ ລະຫວ່າງ ບັນດາພາຄີຕ່າງໆ, ອີງໃສ່ໂຄງການດຳເນີນງານໃນແຕ່ລະໄລ ເພື່ອພິຈາລະນາ, ເລືອກເຟັ້ນເບິ່ງວ່າ ວຽກອັນໃດແດ່ ຕ້ອງມີການປະສານສົມທົບການເຄື່ອນໄຫວ ລະຫວ່າງອົງການພາຄີ ທັງໝົດ ຫຼື ວ່າພາຄີ ຈຳນວນໜຶ່ງເພື່ອນຳເອົາ ມາປຶກສາຫາລືກັນ, ເປັນເອກະພາບດ້ານຈຸດປະສົງ ຄາດໝາຍ, ເນື້ອໃນ, ວິທີການ, ເວລາເປີດຂະບວນການປຸກລະດົມ ບັນດາຊັ້ນຄົນ ຈັດຕັ້ງປະຕິບັດ ແລະ ແບ່ງປັນຄວາມຮັບຜິດຊອບ ລະອຽດ ໃຫ້ແຕ່ລະພາຄີ ຂອງແນວໂຮມ, ຫຼັງຈາກນັ້ນແຕ່ລະອົງການພາຄີ ລ້ວນແຕ່ມີສິດເປັນເຈົ້າການປະກອບຄຳຄິດຄຳເຫັນ ແລະ ຍົກເອົາຫົວຄິດປະດິດສ້າງ ຂອງຕົນອອກມາ ເປັນເອກະພາບນຳກັນ, ກ່ຽວກັບຄະນະປະຈຳ

ບັນດາວຽກທີ່ເຫັນວ່າຕ້ອງມີການປະສານນຳບັນດາພາຄີນຳກັນ ແມ່ນຫຍັງແດ່.

2. ການປະສົມປະສານກັບອຳນາດການປົກຄອງ

- ຫຼັກການປະສານລະຫວ່າງ ອົງການແນວລາວສ້າງຊາດ ກັບອຳນາດການປົກຄອງ ໄດ້ກຳນົດຢູ່ໃນຫຼັກການເບື້ອງເທິງແລ້ວ, ພ້ອມນັ້ນ ກໍມີບັນດາມະຕິຂອງພັກ. ໃນລັດຖະທຳມະນູນ ປີ 1991 ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນບັນດາກົດໝາຍ ແລະ ຄຳສັ່ງຕ່າງໆ ຂອງລັດ, ໃນກົດລະບຽບ ຂອງແນວລາວສ້າງຊາດ ກໍໄດ້ມີຂໍ້ກຳນົດດັ່ງກ່າວແລ້ວ.

- ການປະສານງານລະຫວ່າງແນວລາວສ້າງຊາດ ກັບລັດຖະບານນັ້ນ, ມັນແມ່ນ ຄວາມຮຽກຮ້ອງຕ້ອງການຕົວຈິງ, ພາວິໄສ ລະຫວ່າງແນວໂຮມກັບອຳນາດລັດ ແລະ ລະຫວ່າງລັດຖະບານກັບແນວໂຮມ.

ກ່ຽວກັບແນວລາວສ້າງຊາດ ອັນນີ້ແມ່ນວິທີທາງເຄື່ອນໄຫວ ທີ່ສຳຄັນທີ່ສຸດ, ເພາະວ່າ ສ່ວນຫຼວງຫຼາຍ ໂຄງການການເມືອງ 10 ຂໍ້ ຂອງແນວໂຮມ ຈະມີ ການປະຕິບັດໄດ້ໃນຕົວ ຫຼືບໍ່ແມ່ນມັນຂຶ້ນກັບການປະສານງານລະຫວ່າງ ແນວກັບອຳນາດການປົກຄອງ.

ກ່ຽວກັບອຳນາດການປົກຄອງ, ປະສານງານກັບແນວລາວສ້າງຊາດ ມັນແມ່ນມາດຕະການ ສຳຄັນ ປະສານສົມທົບລະຫວ່າງ ພາລະບົດບາດ ຄຸ້ມຄອງບ້ານເມືອງ ກັບຂະບວນການເຄື່ອນໄຫວຮັກຊາດຂອງປະຊາຊົນ, ເສີມຂະຫຍາຍກຳລັງແຮງທີ່ມີການຈັດຕັ້ງຂອງທົ່ວປວງຊົນ, ເຮັດໃຫ້ບັນດາຂໍ້ກຳນົດ, ລະບຽບການ ແລະ ກົດໝາຍບ້ານເມືອງ ແລະ ແນວຄິດຈິດໃຈ ປະຊາຊົນ ເປັນອັນໜຶ່ງອັນດຽວກັນ, ຈຶ່ງສ້າງໄດ້ກຳລັງ

ແຮງຂອງ ກະໂຕອຳນາດລັດ ໃນການຍົກສູງປະສິດທິພົນ ຂອງການຄຸ້ມຄອງສັງຄົມ ຂອງລັດ.

- ດ້ານອື່ນອີກ, ລັດຄຸ້ມຄອງສັງຄົມໂດຍກົດໝາຍ, ແຕ່ການກຳນົດຂອງກົດໝາຍ ພຽງແຕ່ຕັດສິນບັນດາ ການພົວພັນອັນຕົ້ນຕໍທີ່ສຸດ, ພື້ນຖານທີ່ສຸດ, ນອກຈາກກົດໝາຍແລ້ວ ກໍຍັງມີບັນດາປັດໃຈອື່ນ ຕັດສິນການເໜັງຕີງ ຂອງສັງຄົມ ຄື : ຄຸນສົມບັດ ຮີດຄອງປະເພນີ, ການກຳນົດລວມໝູ່, ຂອງວົງຄະນາຍາດ ແຕ່ງຊາດ ໃນຂົງເຂດໃດໜຶ່ງ. ແນວໂຮມ ກໍມີທ່າແຮງກວ່າ ໃນການຈັດຕັ້ງ, ການປຸກລະດົມ ແນະນຳໃຫ້ປະຊາຊົນເສີມຂະຫຍາຍອັນດີງາມ, ປະລະອັນບໍ່ດີ, ອັນຫຼ້າຫຼັງ, ເພື່ອຊ່ວຍຊູ້ຍູ້ໜູນກົດໝາຍ ແລະ ຕັດສິນຊ່ວຍກົດໝາຍ.

- ແນວໂຮມສົມທົບກັບປົກຄອງ ແມ່ນສົມທົບໃນບັນດາ ບັນຫາລວມ, ບັນຫາທີ່ພົວພັນເຖິງສິດປະໂຫຍດ ແລະ ພັນທະຂອງ ບັນດາຊັ້ນຄົນ, ຂອງພົນລະເມືອງທີ່ແນວໂຮມໃນການະເປັນຕົວແທນລວມ, ບັນດາການຈັດຕັ້ງອົງຄະນະມະຫາຊົນ ກໍລ້ວນແຕ່ມີວຽກທີ່ຕ້ອງປະສານສົມທົບສະເພາະແຕ່ລະອົງຄະນະມະຫາຊົນຕ່າງໆຫາກ ເພື່ອພາກສ່ວນ ຂອງແຕ່ລະການຈັດຕັ້ງ.

- ເນື້ອໃນປະສານສົມທົບ ຄືດັ່ງໄດ້ຍົກຢູ່ຂ້າງເທິງແລ້ວ, ຢູ່ນີ້ພຽງແຕ່ເນັ້ນໜັກວ່າ : ຢາກເຮັດໃຫ້ວຽກປະສານສົມທົບມີປະສິດທິພົນ, ລະຫວ່າງແນວກັບອຳນາດປົກຄອງ ຕ້ອງການມີການປະຊຸມ ເພື່ອປຶກສາຫາລືກັນ, ຕັດສິນບັດດາໂຄງການເຄື່ອນໄຫວ, ເນື້ອໃນ, ຮູບການ ແລະ ມາດຕະການ ເພື່ອເອກະພາບກັນ ໃນການຈັດຕັ້ງປະຕິບັດ, ແບ່ງປັນມອບໝາຍໜ້າທີ່ຊຶ່ງກັນ ໃຫ້ສອດຄ່ອງກັບແຕ່ລະທ້ອງຖິ່ນ ໃນແຕ່ລະເວລະ.

ປະສານສົມທົບ ໃນການໂຄສະນາປຸກລະດົມຂະບວນການ, ໃນການເຜີຍແຜ່ ແຜນນະໂຍບາຍ, ເຜີຍແຜ່ກົດໝາຍ, ການຮ່ວມກັນດຳເນີນຊີວິດການເມືອງ, ຈັດຕັ້ງການພົບປະຊາຊົນ ເພື່ອລະດົມປະຊາຊົນ ແກ້ຂໍ້ຂັດແຍ່ງກັນໃຫ້ຄ່ອງໝັ້ນສັນຍາຕໍ່ກັນ.

ຂ. ການປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວແນວລາວສ້າງຊາດຮາກຖານ ຄື : ຄຸ້ມ, ກຸ່ມບ້ານ ແລະ ບ້ານ

① ທີ່ຕັ້ງ, ບົດບາດສຳຄັນຮາກຖານ ແລະ ບ້ານ

- ຄືດັ່ງໄດ້ຍົກຢູ່ຂ້າງເທິງ, ປະເທດເຮົາໄດ້ລົບລ້າງຂັ້ນຕາແສງ ສ້າງການປົກຄອງ, ການບໍລິຫານ ບ້ານເມືອງ 4 ຂັ້ນ ຄື : ຂັ້ນສູນກາງ ຂັ້ນແຂວງ ກຳແພງນະຄອນ, ຂັ້ນເມືອງ ແລະ ຂັ້ນບ້ານ. ໃນນີ້ ກໍວ່າຄຸ້ມ, ກຸ່ມບ້ານ ແລະ ບ້ານເປັນຮາກຖານ.

ຮາກຖານນັ້ນມີຄວາມໝາຍສຳຄັນທີ່ສຸດ, ກໍຍ້ອນວ່າ : ມັນເປັນບ່ອນເຕົ້າໂຮມ ປະຊາຊົນ ເຜົ່າຊົນຕ່າງໆ, ຊັ້ນຄົນຕ່າງໆ ເຕົ້າໂຮມຢູ່ນຳກັນ, ດຳລົງຊີວິດຕິດພັນກັນ, ອີງໃສ່ກັນໃນການດຳເນີນຊີວິດ. ພ້ອມກັນນັ້ນ ຮາກຖານ ເປັນບ່ອນເຄື່ອນໄຫວອອກແຮງງານທຳການຜະລິດ, ເປັນບ່ອນຈັດຕັ້ງຂະບວນການຜະລິດ, ເປັນບ່ອນຈັດຕັ້ງປະຕິບັດ ແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຂອງພັກ-ລັດ, ປະຕິບັດນະໂຍບາຍແນວໂຮມ, ເປັນບ່ອນຈັດຕັ້ງ ຂອງພັກ-ລັດ, ປະຕິບັດນະໂຍບາຍແນວໂຮມ, ເປັນບ່ອນຈັດຕັ້ງປະຕິບັດທຸກກົດໝາຍ ແລະ ລະບຽບການຕ່າງໆ.

- ຊຸມປີມານີ້, ເຖິງວ່າວຽກງານການເຄື່ອນໄຫວ ຂອງແນວລາວສ້າງຊາດ ຢູ່ຮາກຖານ ກໍໄດ້ມີຄວາມກ້າວໜ້າ ບາງປະການຢູ່ບາງບ່ອນໃນລະດັບຕ່າງໆກັນ, ແຕ່ເບິ່ງລວມແລ້ວວຽກງານແນວລາວສ້າງຊາດ ຢູ່

ຮາກຖານ ແລະ ບ້ານຍັງອ່ອນຫຼາຍ, ຄວາມຮັບຮູ້ຍັງບໍ່ທັນເປັນເອກະພາບ, ການຈັດຕັ້ງ, ການເຄື່ອນໄຫວຕ່າງໆຄົນເຂົ້າໃຈແນວໃດ ກໍເຮັດຕາມແນວນັ້ນ.

② ຕ້ອງເພີ້ມທະວີກໍ່ສ້າງ ແລະ ປັບປຸງ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນວຢູ່ຮາກຖານບ້ານໃຫ້ໜັກແໜ້ນ ແລະ ເຂັ້ມແຂງ.

- ແນວລາວສ້າງຊາດຢູ່ຄຸ້ມ, ກຸ່ມບ້ານ ແລະ ບ້ານຕ້ອງໄດ້ຮັບການຈັດຕັ້ງ, ການປັບປຸງ ແລະ ເປີດກວ້າງເພື່ອເຕົ້າໂຮມກຸ່ມກ້ອນ ມະຫາສາມັກຄີ ທົ່ວປວງຊົນ, ເຕົ້າໂຮມກຳລັງແຮງຂອງທຸກພາກສ່ວນ, ທຸກຊັ້ນຄົນປະຊາຊົນ, ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ແລະ ແຜນນະໂຍບາຍຂອງພັກ,ລັດ, ປະຕິບັດລະບຽບກົດໝາຍຂອງບ້ານເມືອງ ແນວລາວສ້າງຊາດ ຢູ່ຮາກຖານບ້ານ ພ້ອມກັບອຳນາດການປົກຄອງບ້ານຕ້ອງຈັດຕັ້ງປະຕິບັດ ບັນດາ ແຜນນະໂຍບາຍອັນລະອຽດ ເພື່ອ ສະໜອງຕອບເຈດຈຳນົງຄວາມມຸ່ງມາດປາດຖະໜາຂອງບັນດາເຜົ່າ, ບັນດາຊັ້ນຄົນ ນຳເອົາຜົນປະໂຫຍດ ອັນຊອບທຳ ມາໃຫ້ປະຊາຊົນຊັ້ນຄົນຕ່າງໆ; ພ້ອມກັບອຳນາດການປົກຄອງບ້ານ ແກ້ໄຂບັນດາຂໍ້ຂັດແຍ້ງຢູ່ພາຍໃນໝູ່ປະຊາຊົນ, ໃນການປະຕິບັດ ປະຊາທິປະໄຕ ແລະ ປ່ຽນໃໝ່ສັງຄົມ, ເອົາໃຈ ແລະ ປົກປ້ອງສິດຜົນປະໂຫຍດ ຂອງບັນດາຊັ້ນຄົນ ປະຊາຊົນ; ຕ້ອງຮ່ວມກໍ່ສ້າງ, ຕິດຕາມ, ປົກປ້ອງອຳນາດການປົກຄອງ; ເຂົ້າຮ່ວມຄຸ້ມຄອງສັງຄົມ, ປະຕິບັດບັນດາໜ້າທີ່ກໍ່ສ້າງເສດຖະກິດ, ວັດທະນະທຳ, ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບສຸກ; ປະກອບສ່ວນເພີ້ມທະວີການພົວພັນຢ່າງສະນິດແໜ້ນລະຫວ່າງປະຊາຊົນກັບພັກ ແລະ ລັດ.

③ ຄະນະກຳມະການແນວລາວສ້າງຊາດ ຄຸ້ມ ຫຼື ກຸ່ມບ້ານກໍຄື ບ້ານ ຕ້ອງໃຫ້ມີການຈັດຕັ້ງທີ່ສົມບູນ ຕາມທິດຄື : ທັງເປັນຕົວແທນໃຫ້ ກຸ່ມກ້ອນສາມັກຄີທົ່ວປວງຊົນ ຢູ່ທ້ອງຖິ່ນ, ທັງຮັບປະກັນໃຫ້ມີກຳລັງ ແຮງ ເຮັດລ້ອນໜ້າທີ່ທີ່ການມອບໝາຍໃຫ້.

3. ກ. ພາກສ່ວນຄະນະກຳມະການແນວຄຸ້ມ, ກຸ່ມບ້ານ ຫຼື ບ້ານປະ ກອບມີ :

- ຕົວແທນບັນດາການຈັດຕັ້ງພາຄີ ຄື : ສະຫະພັນແມ່ຍິງ, ຄະ ນະຊາວໜຸ່ມບ້ານ, ສາມະຄົມຕ່າງໆ ໃນນັ້ນຕ້ອງມີປະທານແນວຄຸ້ມ ຫຼື ກຸ່ມບ້ານ ເປັນໃຈກາງ. ຊຶ່ງເອີ້ນອາດເອີ້ນວ່າ ຄະນະກຳມະການແນວບ້ານ ຫຼື ໜ່ວຍປະຕິບັດງານແນວບ້ານ.

ນອກນີ້, ຍັງມີບັນດາບຸກຄົນ ທີ່ເປັນຕົວແທນ ອື່ນໆ ເຊັ່ນ: ບັນດາ ຜູ້ທີ່ມີອິດທິພົນກວມລວມທີ່ປະຊາຊົນເຊື່ອຖື, ມີຄວາມສາມາດເຄື່ອນ ໄຫວເຕົ້າໂຮມທຸກຊັ້ນຄົນ, ທຸກພາກສ່ວນໄດ້ ແລະ ມີລັກສະນະຊົງຄຸນວຸດ ທິ.

ບໍ່ຈຳເປັນປະກອບບັນດາຂະແໜງ ປົກຄອງບ້ານເຂົ້າ ຄະນະກຳ ມະການແນວ ຫຼື ໜ່ວຍປະຕິບັດງານ ຂອງແນວຄຸ້ມ, ກຸ່ມບ້ານ ຫຼື ບ້ານ ເຊັ່ນ : ບັນດາຂະແໜງປົກຄອງ ຄື ປ້ອງກັນຄວາມສະຫງົບສຸກ, ກອງ ຫຼອນ, ບາງບ້ານຫຼື ຮອງນາຍບ້ານ...

- ຈຳນວນຄະນະກຳມະການແນວຄຸ້ມ, ກຸ່ມບ້ານ ແລະ ບ້ານໂດຍ ແມ່ນ ກອງປະຊຸມ ໃຫຍ່ ແນວລາວສ້າງຊາດ ບ້ານເປັນອົງການແຕ່ງຕັ້ງ ຂຶ້ນໜ້ອຍທີ່ສຸດ ກໍບໍ່ຫລຸດ 3 ຄົນ, ຄວນເອົາໃຈໃສ່ ນະຫາຊົນ ທີ່ຢູ່ນອກ ພັກ.

3. ຂ. <u>ໜ້າທີ່ຂອງຄະນະກຳມະການແນວຄຸ້ມ, ກຸ່ມບ້ານ ແລະ ບ້ານ</u>

ພາລະບົດບາດຕົ້ນຕໍ ແນວລາວຮັກຊາດ ຢູ່ຮາກຖານຄຸ້ມ, ກຸ່ມ ບ້ານ ແລະ ບ້ານແມ່ນ : ເປັນເອກະພາບກັນທາງແນວຄິດ, ການເຄື່ອນໄຫວ ໃນບັນດາ ພາຄີ ຂອງແນວ, ປະສານສົມທົບກັບອຳນາດການປົກຄອງ ເພື່ອພ້ອມກັນປະຕິບັດ ບັນດາໜ້າທີ່ເສດຖະກິດ, ວັດທະນະທຳ, ສັງຄົມ ຢູ່ໃນບ້ານ.

ໜ້າທີ່ແນວຢູ່ຮາກຖານ ບ້ານດັ່ງນີ້ :

① <u>ເອົາໃຈໃສ່ສຶກສາອົບຮົມ ການເມືອງ, ແນວຄິດ ໃນພາຄີຂອງແນວໂຮມ, ປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ ໃຫ້ເຊື່ອມຊຶມແນວທາງປ່ຽນແປງໃໝ່ ຢ່າງຮອບດ້ານ ຂອງພັກ-ລັດ ແນໃສ່ຄື :</u>

- ເຊີດຊູນ້ຳໃຈຮັກຊາດ ຮັກລະບອບໃໝ່, ຕິດພັນກັບການປ່ຽນແປງໃໝ່ ວິທີນຶກຄິດຈິນຕະນາການໃນການ ດຳລົງຊີວິດ ເພື່ອລ້ຽງຊີບ.
- ຍົກສູງເພິ່ງຕົນເອງ, ກຸ້ມຕົນເອງ, ເປັນເຈົ້າຕົນເອງ ສ້າງຄວາມເຂັ້ມແຂງ ໂດຍຕົນເອງ ທົ່ວປວງຊົນ, ເອົາໃຈໃສ່ຂະຫຍາຍການຜະລິດສິນຄ້າ ຕາມກົນໄກຕະຫຼາດ ທີ່ມີການນຳພາ ຂອງພັກ ແລະ ການຄຸ້ມຄອງຂອງລັດ.
- ຍົກສູງສະຕິລະວັງຕົວ ຕ້ານຍຸດທະສາດ ຫັນປ່ຽນໂດຍສັນຕິຂອງບັນດາ ອິດທິພົນ ກຳລັງທີ່ເປັນປໍລະປັກ, ຕ້ານທຸກໄພອາດຍາສິດ ໃນອຳນາດການປົກຄອງ.

② <u>ເພີ່ມທະວີ ເຕົ້າໂຮມຄວາມສາມັກຄີ ສ້າງກ້ອນມະຫາສາມັກຄີທົ່ວປວງຊົນຢ່າງໜັ້ນແຟ້ນ, ເສີມຂະຫຍາຍມູນເຊື້ອ ແຫ່ງຄວາມສາມັກຄີໃຫ້ເປັນຮູບປະທຳນຳເອົາພົນປະໂຫຍດມາໃຫ້ທຸກຊັ້ນຄົນ.</u>

- ສາມັກຄີຊ່ວຍເຫຼືອກັນຂະຫຍາຍການຜະລິດ ສິນຄ້າ, ຮ່ວມກັນສ້າງກອງທຶນ ເພື່ອຂະຫຍາຍການຜະລິດ; ກໍ່ສ້າງ ໂຄງປະກອບເສດຖະກິດ, ເຮັດໃຫ້ ຈຳນວນຄອບຄົວຮັ່ງມີ ນັບມື້ເພີ້ມຂື້ນທາງດ້ານລາຍໄດ້.

- ເສີມຂະຫຍາຍ ມູນເຊື້ອຮັກແພງ ເບິ່ງແຍງຊ່ວຍເຫຼືອກັນ, ເຄົາລົບຮັກແພງ ຄອບຄົວ ຜູ້ມີພົນງານຕໍ່ຊາດ ຕໍ່ບ້ານເມືອງ, ຕໍ່ຜູ້ທຸກຍາກ ບໍ່ມີບ່ອນພັກພາອາໄສ ຕ້ອງມີການເບິ່ງແຍງ.

- ເສີມຂະຫຍາຍ ປະຊາທິປະໄຕ ປະຊາຊົນ ປະຕິບັດ ສິດເປັນເຈົ້າຂອງປະຊາຊົນ ໃນການເຄົາລົບລະບຽບ ກົດໝາຍ ບ້ານເມືອງ, ພົນລະເມືອງທຸກຄົນດຳລົງຊີວິດ ແລະ ເຄື່ອນໄຫວ ຕາມກົດໝາຍ.

- ສາມັກຄີກັນ ພ້ອມກັນສ້າງຊີວິດໃໝ່ ທີ່ສົດໃສ, ມີຄວາມເມດຕາການຸນນາກັນ, ດຳລົງຊີສິດ ຢູ່ຮ່ວມກັນໂດຍຄວາມຮັກແພງ.

- ສາມັກຄີກັນຊຸກຍູ້ ການສຶກສາ, ຍົກລະດັບຄວາມຮູ້ ຄວາມສາມາດຂື້ນ, ເບິ່ງແຍງ ສຸຂະພາບ.

③ <u>ເສີມຂະຫຍາຍປະຊາທິປະໄຕ ປະຕິບັດສິດເປັນເຈົ້າ ໃນການກໍ່ສ້າງ ບຳລຸງ, ຕິດຕາມກວດກາ ແລະ ປົກປັກຮັກສາ ອຳນາດການປົກຄອງ ຂອງປະຊາຊົນ.</u>

- ເລືອກເຟັ້ນເອົາຜູ້ທີ່ດີ, ມີເງື່ອນໄຂຄົບຖ້ວນ ເປັນຜູ້ແທນ ຂອງຊົນຄົນຕ່າງໆ ກຳອຳນາດການປົກຄອງ, ເພື່ອເປັນອຳນາດການປົກຄອງຈາກ ປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ທີ່ແທ້ຈິງ.

- ຕິດຕາມ, ກວດກາ, ປົກປັກຮັກສາ ອຳນາດການປົກຄອງ ໃຫ້ມີຄວາມສັດຊື່ ຈົງຮັກພັກດີ ຕໍ່ປະຊາຊົນ, ປົກປ້ອງສິດຜົນປະໂຫຍດ ອັນຊອບທຳ ຂອງຊົນຄົນຕ່າງໆ.

- ທຸກວຽກງານ ຕ້ອງນຳເອົາມາປຶກສາຫາລື ນຳປະຊາຊົນ, ໃຫ້ປະຊາຊົນ ໄດ້ປະກອບຄຳເຫັນ ແລະ ໃຫ້ປະຊາຊົນ ເປັນຜູ້ຈັດຕັ້ງປະຕິບັດ.

④ <u>ປຸກລະດົມ ປະຊາຊົນ ຈັດຕັ້ງ ປະຕິບັດ ບັນດາວຽກງານ ປ້ອງກັນຄວາມສະຫງົບສຸກ, ຄວາມເປັນລະບຽບ ແລະ ປອດໄພ ທາງສັງຄົມ ຂອງບ້ານ.</u>

- ທຸກຄອບຄົວລ້ວນແຕ່ອົບຮົມສັ່ງສອນລູກຫຼານຂອງຕົນໃຫ້ມີສະຕິເຄົາລົບລະບຽບກົດໝາຍ ຂອງບ້ານເມືອງ, ປະຕິບັດເຂັ້ມງວດ ບັນດາກຳນົດ ທີ່ຊາວບ້ານ ຕົກລົງນຳກັນ, ຢູ່ໃນບ້ານຊອງ ບໍ່ມີຄົນລັກຄົນປຸ້ນ ຫຼື ອື່ນໆ.

- ຍົກສູງສະຕິລະວັງຕົວ ຕໍ່ຕ້ານທຸກການໂຄສະນາ ແບ່ງແຍກ, ທຸກກ້ອຍທຳນອງ ຕົວະຍົວະຫຼອກລວງ, ຊື້ຈ້າງຈອບອອຍຕ່າງໆ ຂອງຄົນທີ່ບໍ່ດີ ແລະ ຄວາມຍຸຍົງສົ່ງເສີມ ຂອງພາຍນອກ.

- ທຸກບັນຫາຄວາມຂັດແຍ້ງກັນ ຢູ່ພາຍໃນບ້ານ, ລ້ວນແຕ່ຕ້ອງໄດ້ເອົາໃຈໃສ່ປຶກສານຳອຳນາດການປົກຄອງ ແລະ ບັນດາການຈັດຕັ້ງພາຄີ ຂອງແນວ ເພື່ອພ້ອມກັນປຶກສາຫາລືແກ້ໄຂປ່ຽນແປງໃນບ້ານໃຫ້ທະລຸລົ່ງ, ພ້ອມກັນດຳລົງຊີວິດ ແລະ ທຳມາຫາກິນ ຖືກຕ້ອງຕາມກົດໝາຍ.

- ປຸກລະດົມ ທົ່ວປວງຊົນ ປະຕິບັດ ໜ້າທີ່ປ້ອງກັນຊາດ- ປ້ອງກັນຄວາມສະຫງົບສຸກທົ່ວປວງຊົນ ຢ່າງຂະຫຍັນຂັນແຂງ, ມີການປະກອບອາວຸດ ທົ່ວປວງຊົນ ທາງການເມືອງ, ແນວຄິດ, ການຈັດຕັ້ງ, ປະຊາຊົນ ໝົດທຸກຄົນ ເອົາວຽກງານ ຕີສັດຕູ ປົກປັກຮັກສາ ບ້ານເມືອງ.

⑤ ປູກລະດົມຂະບວນມະຫາຊົນ ກໍ່ສ້າງຄອບຄົວວັດທະນະທຳໃໝ່ ແລະ ສ້າງບ້ານແບບຢ່າງ.

ຄອບຄົວວັດທະນະທຳ ຊຶ່ງກອງປະຊຸມ ຄົບຄະນະ ຂອງສູນກາງພັກ ຄັ້ງທີ່ .... (ສະໄໝທີ່ III) ໄດ້ກຳນົດອອກມີ ດັ່ງນີ້:

- ມີທີ່ຕັ້ງພູມລຳເນົາ ທີ່ການວອນ, ມີອາຊີບທຳມາຫາກິນ ທີ່ໝັ້ນທ່ຽງ, ພື້ນຖານເສດຖະກິດຄອບຄົວໜັກແໜ້ນ, ມີທ່າຂະຫຍາຍຕົວທາງດ້ານລາຍຮັບ.

- ການພົວພັນຄອບຄົວ ຄື ລະຫວ່າງ ພໍ່-ແມ່ ກັບລູກ ເຕົ້າຢູ່ນຳກັນ ໃນບັນຍາກາດສ້າງສັນສະເໝີພາບ, ຮັກແພງກັນ ແລະ ພ້ອມກັນມີຄວາມຮັບຜິດຊອບລຸກເຕົ້າ ເປັນຢ່າງດີ.

- ເຄື່ອນໄຫວທຳມາຫາກິນ ດຳລົງຊີວິດ ທີ່ຖືກຕ້ອງຕາມກົດໝາຍ, ລະບຽບການບ້ານເມືອງ, ຮູ້ຮັບເອົາອັນໃໝ່ເຂົ້າ ວິທີການຜະລິດ ແລະ ມີການປ່ຽນແປງໃໝ່ ຢ່າງບໍ່ຢຸດຢັ້ງ ຢູ່ໃນຄອບຄົວ.

- ໃນສະພາບະການ ທີ່ຕັ້ງພູມລຳເນົາ ມີຄວາມສະອາດ, ມີການປະດັບເອ້ສວຍງາມ, ການນຸ່ງຖື ຖືກຕ້ອງຕາມປະເພນີ, ຮັກສາສິ່ງແວດລ້ອມວັດທະນະທຳ ທີ່ເປັນເອກະລັກຂອງຊາດ.

- ມີການພົວພັນສ້າງສັນກັບຄອບຄົວອື່ນ ໃນບັນຍາກາດ ແຫ່ງຄວາມສາມັກຄີ ແລະ ມີປະຊາທິປະໄຕ.

⑥ ໃນພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານນີ້, ເປັນໜ້າທີ່ໜຶ່ງໃນໜ້າທີ່ຂອງແນວລາວສ້າງຊາດ ຢູ່ຮາກຖານ ແມ່ນອອກແຮງປູກລະດົມ, ແນະນຳກວດກາຊຸກຍູ້ ຂະບວນການ ປູກລະດົມ "ທົ່ວປວງຊົນສາມັກຄີຮ່ວມຈິດຮ່ວມໃຈ, ຮ່ວມແຮງ, ຮ່ວມສະຕິປັນຍາ ແລະ ທຶນຮອນກໍ່ສ້າງ

ຊີວິດໃໝ່" ເຮັດໃຫ້ບ້ານຊ່ອງຂອງຕົນ, ແຕ່ລະຄອບຄົວ ກໍມີຄວາມສີວິໄລງົດງາມ ແລະ ແຂ່ງຂັນກັນສ້າງຕົວແບບ.

ຕໍ່ໄປນີ້, ຈະມີການແນະນຳ ສະເພາະໜ້າທີ່ໃຈກາງ ດັ່ງກ່າວຂອງແນວລາວສ້າງຊາດ ຢູ່ຮາກຖານ ດັ່ງກ່າວ ຄື ດັ່ງຕໍ່ໄປນີ້:

III. <u>ໃນພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານນີ້, ວຽກງານປ່ຽນໃໝ່ ຂອງການປະຕິວັດ ມັນກໍແມ່ນພາລະກິດ ຂອງທ້ອງຖິ່ນ ແນວລາວສ້າງຊາດ ຮາກຖານ ຕ້ອງຕັ້ງໜ້າ "ປູກລະດົມທ້ອງຖິ່ນ ສາມັກຄີ ຮ່ວມແຮງ, ສະຕິປັນຍາ, ທຶນຮອນ ເພື່ອສ້າງຊີວິດໃໝ່ຢູ່ຂັ້ນບ້ານ".</u>

ໃນຂັ້ນປູກລະດົມ ສ້າງຊີວິດໃໝ່ ຢູ່ໃນບັນດາ ຮາກຖານ ບ່ອນເຕົ້າໂຮມ ປະຊາຊົນນີ້, ຕ້ອງໄດ້ດຳເນີນເປັນເວລາຫຼາຍປີ, ແນວລາວສ້າງຊາດ ເຮັດຢ່າງທັນການ, ໜຽວແໜ້ນ, ມີຈຸດປະສົງ ລະດັບຄາດໝາຍ ຈະແຈ້ງ ແຕ່ລະຂັ້ນ, ມີເນື້ອໃນຮອບດ້ານ, ຮັ່ງມີອຸດົມສົມບູນ, ຄະນະກຳມະການ ແນວລາວທຸກຂັ້ນ ຕ້ອງເຊື່ອມຊຶມ ແລະ ນຳເອົາ ໄປປະຕິບັດທຸກແຫ່ງຫົນ ຢູ່ໃນທຸກໝູ່ບ້ານ, ເຮັດໃຫ້ນະຕິພັດທະນາຊົນນະບົດຢ່າງຮອບດ້ານໄດ້ຮັບການປະຕິບັດໃຫ້ ບັງເກີດໝາກຜົນທຸກທ້ອງຖິ່ນໃນທົ່ວປະເທດ.

ກ. <u>ຈຸດປະສົງ, ຄວາມໝາຍ ເປັນບ່ອນອີງ ຂອງຂັ້ນປູກລະດົມ.</u>

1. ຂະບວນວິວັດແຫ່ງການປ່ຽນແປງໃໝ່ແມ່ນ "ພາລະກິດ ຂອງທ້ອງຖິ່ນ", ການປູກລະດົມ ທ້ອງຖິ່ນປ່ຽນໃໝ່ ການປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດ ມັນເລັ່ງທ່ວງໃຫ້ ມີຂະບວນການເຄື່ອນໄຫວ ຂອງປະຊາຊົນ ທຸກທ້ອງຖິ່ນ, ຮາກຖານ ເປັນເຈົ້າການພ້ອມກັບພັກ, ລັດປະຕິບັດ ໃຫ້ສຳເລັດ ບັນດາ ແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍ ຂອງພັກ, ຂອງລັດ ເປັນຕົ້ນແມ່ນ 8 ໂຄງການທີ່

ເປັນໜ້າທີ່ທາງເສດຖະກິດ-ສັງຄົມ, ບັນດາໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປະກອບສ່ວນ ຢ່າງຕັ້ງໜ້າກໍ່ສ້າງຮາກຖານ ໃຫ້ໜັກແໜ້ນ, ພັດທະນາຊົນນະບົດ ຢ່າງຮອບດ້ານໃຫ້ກາຍເປັນພື້ນຖານ ອັນໜັກແໜ້ນ ໃຫ້ລະບອບໃໝ່.

2. ພາລະກິດນະຫາສານັກຄີ ໃນວົງຄະນາຍາດແຫ່ງຊາດລາວ ເອກະພາບ ແລະ ເພີ້ມທະວີ ແນວໂຮມເອກະພາບ ແຫ່ງຊາດ, ນັບຮຽກຮ້ອງໃຫ້ຫັນທິດລົງສູ່ຮາກຖານ ຢ່າງແຂງແຮງ, ລົງໄປເຮັດຢູ່ບ່ອນປະຊາຊົນເຕົ້າໂຮມ ກັບການດຳລົງຊີວິດ ຢູ່ແຕ່ລະບ້ານ, ໄປຮອດໄປເຖິງແຕ່ລະຄອບຄົວ ແລະ ແຕ່ລະຄົນປະຊາຊົນ, ເລັ່ງທວງໃຫ້ ແນວລາວສ້າງຊາດ ທຸກຂັ້ນຕ້ອງປ່ຽນຕົນເອງ ທາງດ້ານເນື້ອໃນ, ປ່ຽນທາງດ້ານການຈັດຕັ້ງ ແລະ ປ່ຽນຮູບການ ວິທີການເຄື່ອນໄຫວ ຂອງຕົນເອງ ໃຫ້ຄອງຕົວ ມີຊີວິດຊີວາ.

ຂະບວນການ ປຸກລະດົມ ນີ້ນັບໄດ້ກໍ່ຂຸບຂຶ້ນບົນພື້ນຖານ ການສືບທອດ, ຂະຫຍາຍ, ປັບປຸງ ແລະ ເປີດກວ້າງ ໃນການຍົກສູງປະສິດທິພາບ ບັນດາຂະບວນການຮັກຊາດ, ບັນດາຂະບວນການ ທີ່ເຄີຍມີມາ ໃນຍາມການຕໍ່ສູ້ກູ້ຊາດ ຂອງແນວລາວ ອິດສະລະ ແລະ ແນວລາວຮັກຊາດ ທີ່ເຄີຍເຮັດມາ ບັນດາ ການຈັດຕັ້ງພາຄີ ຂອງແນວ, ບັນດາການຈັດຕັ້ງຂະແໜງການຂອງອຳນາດການປົກຄອງ ແລະ ບັນດາການຈັດຕັ້ງ ສັງຄົມ... ຂອງທຸກການຈັດຕັ້ງໃຫ້ກາຍເປັນກຳລັງແຮງສັງລວມ ໃຫ້ຄະນະພັກ, ອຳນາດການປົກຄອງ ໃນຂະບວນການຮັກຊາດ ແລະ ປະຕິວັດ ຢູ່ໃນທຸກໝູ່ບ້ານ ໃຫ້ມີຂະບວນການຕົວຈິງຍືນຕົວກ້າວຂຶ້ນເປັນເຈົ້າຕົນເອງ ໃນທຸກຄອບຄົວ ແລະ ພົນລະເມືອງລາວທຸກຄົນ, ເຮັດໃຫ້ຮອບດ້ານກວ່າເກົ່າ, ມີປະສິດທິພົນສູງກວ່າແຕ່ນັ້ນກໍ່ຍັງແມ່ນເສີນຂະ

ຫຼາຍມູນເຊື້ອທີ່ເປັນເອກະລັກ ແຕ່ລະການຈັດຕັ້ງ ແລະ ແຕ່ລະຂະບວນການ.

ອັນນີ້ນັບແມ່ນຂະບວນການ ປຸກລະດົມ ທີ່ມີລັກສະນະທ້ອງຖິ່ນ, ທົ່ວທຸກການຈັດຕັ້ງ, ຮອບດ້ານ ແລະ ເຮັດເປັນຂະບວນທົ່ວປະເທດ ໃນພາລະກິດ ປ່ຽນແປງໃໝ່ ແນໃສ່ພ້ອມກັບພັກ, ອຳນາດການປົກຄອງ, ເສີມຂະຫຍາຍເຈດຈຳນົງເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຂຸດຄົ້ນທຸກຄວາມສາມາດ, ທຸກກຳລັງແຮງຂອງທຸກຄົນ, ທຸກຄອບຄົວ, ທຸກການຈັດຕັ້ງ, ໃນທຸກໝູ່ບ້ານ ແລະ ທັງໝົດ ວົງຄະນາຍາດ ແຫ່ງຊາດ, ສ້າງເປັນກຳລັງແຮງ ທີ່ບໍ່ມີສັດຕູຕົວໃດຈະທຳລາຍໄດ້, ໝົດທັງຊາດເປັນຈິດໜຶ່ງໃຈດຽວ, ໝູນໃຊ້ກາລະໂອກາດອັນອຳນວຍທີ່ສຸດນີ້, ປະຕິບັດມະຕິທີ່ VI ຂອງພັກ ແລະ 8 ໂຄງການຂອງລັດຖະບານໃນການພັດທະນາສ້າງສາບ້ານເມືອງ ເພື່ອສ້າງບັນດາປະກົນປັດໃຈ ທີ່ຈຳເປັນ ກ້າວຂຶ້ນສັງຄົມນິຍົມ ເທື່ອລະກ້າວ ເຮັດໃຫ້ບັນດາຈຸດໝາຍທີ່ກອງປະຊຸມທີ່ VI ຂອງພັກໄດ້ກຳນົດອອກ ໃຫ້ບັນລຸຜົນ.

ບັ້ນປຸກລະດົມທ້ອງຖິ່ນ ກໍ່ສ້າງຊີວິດໃໝ່ນີ້, ໄດ້ດຳເນີນຕາມກົນໄກ ພັກນຳພາ, ລັດຄຸ້ມຄອງ ແລະ ອຳນວຍຄວາມສະດວກ ໃຫ້ແນວລາວສ້າງຊາດ, ເສີມຂະຫຍາຍ ຢ່າງສຸດຂີດ ກຳລັງແຮງ ແຫ່ງສິດເປັນເຈົ້າຂອງປະຊາຊົນ.

3. <u>ເລີ່ມຈາກຄວາມຮຽກຮ້ອງຕ້ອງການໃນການເອົາໃຈໃສ່ ເງື່ອນຊີວິດ ປະຈຳວັນ ໃນການດຳລົງຊີວິດ ຂອງປະຊາຊົນ, ກ່ຽວກັບທິດນຳ ທີ່ວ່າ</u> : "ເອົາກຳລັງແຮງຂອງປະຊາຊົນ ກໍ່ສ້າງຊີວິດໃໝ່ໃຫ້ປະຊາຊົນ"

ປະຕິບັດທິດນຳດັ່ງກ່າວນີ້, ຢູ່ບົນພື້ນການເສີມຂະຫຍາຍ ທ່າແຮງ ຂອງແຕ່ລະບ່ອນ : ດິນ, ປ່າໄມ້, ນ້ຳ ແລະ ບວກໃສ່ການເສີມຂະ

ຫຍາຍ ບົດບາດແຫ່ງສິດເປັນເຈົ້າແທ້ຈິງ ຂອງປະຊາຊົນ, ປະຕິບັດ: "ທຸກບັນດາທິດນຳທີ່ພັກວາງອອກ; ປຶກສາຫາລື ນຳປະຊາຊົນໃຫ້ປະຊາຊົນຮູ້, ປະຊາຊົນປະກອບຄຳເຫັນ, ປະຊາຊົນເປັນຜູ້ເຮັດ, ປະຊາຊົນເປັນຜູ້ກວດກາ, ທາງນີ້ກໍເພື່ອເສີມຂະຫຍາຍ ຢ່າງຄົບກ້ວນ ກຳລັງແຮງແຫ່ງຄວາມສາມັກຄີ ຂອງວົງຄະນາຍາດ ແຫ່ງຊາດ, ພ້ອມກັບຍົກສູງຄຸນນະພາບ ແຫ່ງຊີວິດໃໝ່ ດ້ານວັດຖຸ, ຈິດໃຈ ໃຫ້ປະຊາຊົນ ແຕ່ລະຄົນ, ແຕ່ລະຄອບຄົວ ແລະ ຂອງທຸກຊົນຄົນ ໃນໝົດທັງບ້ານ.

<u>ສະຫລຸບຄວາມ</u>: "ທົ່ວປວງຊົນສາມັກຄີກໍ່ສ້າງຊີວິດໃໝ່ຢູ່ທຸກໝູ່ບ້ານ" ນັ້ນແມ່ນການປຸກລະດົມບັນດາຊັ້ນຄົນ ປະຊາຊົນ ໃນຍຸກແຫ່ງການປ່ຽນແປງໃໝ່, ຕິດພັນກັບການປ່ຽນແປງວຽກງານຂອງແນວໂຮມ, ກືເອົາຄວາມສາມັກຄີ ທົ່ວປວງຊົນ ເປັນກຳລັງຊຸກດັນ; ກືເອົາຜົນປະໂຫຍດລວມຂອງວົງຄະນາຍາດ ເຂດເຕົ້າໂຮມ ມວນຊົນ ເປັນຈຸດອັດແທກ ແລະ ເປັນຈຸດໝາຍລວມ; ກືເອົາໜ້າທີ່ການເມືອງ, ເສດຖະກິດ-ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບສຸກ ຢູ່ທ້ອງຖິ່ນ ເປັນເນື້ອໃນ; ກືເອົາຄວາມກ້າວໜ້າ ແຕ່ລະບາດກ້າວຍົກສູງຄຸນນະພາບແຫ່ງຊີວິດ ຂອງແຕ່ລະເຂດ ມວນຊົນ ເຕົ້າໂຮມ, ຂອງແຕ່ລະຄອບຄົວ ແລະ ຄວາມສະຫງົບປົກກະຕິ ຂອງຮາກຖານ ເປັນຈຸດປະສົງ.

ຂ. <u>ເນື້ອໃນຂະບວນການປຸກລະດົມ</u>:

1. <u>ສາມັກຄີຊ່ວຍເຫຼືອກັນກໍ່ສ້າງເສດຖະກິດ</u>:

- ປຸກລະດົມເຕົ້າໂຮມຫຼາຍແຫຼ່ງທຶນສ້າງເປັນກອງທຶນພັດທະນາເສດຖະກິດ, ເພື່ອຂະຫຍາຍກຳລັງການຜະລິດ, ສ້າງໃຫ້ມີວິຊາຊີບຫຼາຍຂະແໜງການ ສ້າງໃຫ້ມີວຽກເຮັດງານທຳ ໃຫ້ໝົດທຸກຄົນ;

- ຫັນຈາກການຜະລິດ ຫຼື ເສດຖະກິດ ເພິ່ງຕົນເອງ ກຸ້ມຕົນເອງ ໄປສູ່ການຜະລິດສິນຄ້າ ຫຼາຍພາກສ່ວນ, ຫັນຈາກເສດຖະກິດ ທຳມະຊາດ ໄປສູ່ເສດຖະກິດ ສິນຄ້າ.

- ຫັນຈາກໂຄງປະກອບເສດຖະກິດ ທຳມະຊາດ ໄປສ້າງໂຄງປະກອບເສດຖະກິດຫຼາຍພາກສ່ວນ, ມີໂຄງປະກອບ ກະສິກຳຄົບຊຸດ, ໂຄງປະກອບປ່າໄມ້ ຄົບຊຸດ, ໂຄງປະກອບປູກພືດຄົບຊຸດ...

- ຢູ່ແຕ່ລະບ້ານ ແຜນການສູ້ຊົນລົບລ້າງຄອບຄົວທຸກຍາກອຶດຢາກ, ເຮັດໃຫ້ຄອບຄົວຮັ່ງມີ ນັບມື້ນັບຫຼາຍຂຶ້ນ, ບໍ່ໃຫ້ມີເຮືອນໃດອຶດຫິວ ຂໍທານ.

2. <u>ສາມັກຄີກັນປະຕິບັດ ແລະ ເສີມຂະຫຍາຍປະຊາທິປະໄຕ ໃນການເປັນເຈົ້າຕົນເອງ, ເປັນເຈົ້າຂອງ ປະເທດຊາດ ແລະ ເປັນເຈົ້າສັງຄົມ</u>:

- ປຸກລະດົມປະຊາຊົນທຸກຊົນເຜົ່າ, ຊັ້ນຄົນ, ທຸກຄົນທີ່ດຳລົງຊີວິດ ແລະ ເຄື່ອນໄຫວທຳມາຫາກິນໃຫ້ຖືກຕ້ອງຕາມລະບຽບການ, ຂໍ້ຕົກລົງ ຂອງວົງຄະນາຍາດ ໃນບ້ານ, ປະຕິບັດຕາມກົດໝາຍບ້ານເມືອງ.

- ປະຊາຊົນ ທຸກຄົນຕ້ອງເຂົ້າຮ່ວມ ການປ້ອງດອງກັນຄວາມສະຫງົບ, ຄວາມເປັນລະບຽບ, ຄວາມປອດໄພ ທາງສັງຄົມ, ຮັບຜິດຊອບຄຸ້ມຄອງສັ່ງສອນເອົາລູກຫຼານຂອງໃຜຂອງມັນ; ຢູ່ໃນບ້ານບໍ່ໃຫ້ມີຄົນຂີ້ລັກ, ບໍ່ໃຫ້ມີຄົນຂີ້ຕົວະ, ຫຼິ້ນການພະນັນ ອື່ນໆ.

- ບັນດາຄວາມຂັດແຍ້ງຊຶ່ງກັນ, ຄວາມຜິດຄ່ອງຕ້ອງກຽງກັນ ໃນການພົວພັນເຖິງການດຳລົງຊີວິດ, ການທຳມາຫາກິນ, ການເຂົ້າໃຈຜິດຕໍ່ກັນ ຕ້ອງໄດ້ຮັບການແກ້ໄຂ ຢູ່ກັບທີ່; ຕໍ່ຜູ້ທີ່ມີໂທດມີຄວາມຜິດຕ້ອງມີການແກ້ໄຂໃຊ້ແທນຄ່າເສຍຫາຍ, ໃຫ້ອະໄພຕໍ່ກັນ.

- ປະຊາຊົນທຸກຄົນ, ທຸກຄອບຄົວ ລ້ວນແຕ່ ເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບສຸກທົ່ວປວງຊົນ ຢ່າງຕັ້ງໜ້າ.

3. <u>ສາມັກຄີປະຕິບັດ ແລະ ເສີມຂະຫຍາຍມູນເຊື້ອຮັກແພງກັນ ຊ່ວຍເຫຼືອກັນ ແລະ ເບິ່ງແຍງກັນ.</u>

- ກ່ອນອື່ນໝົດ, ຕ້ອງມີຮູບການຈັດຕັ້ງ ທີ່ຮັກແພງກັນເບິ່ງຜູ້ອື່ນມີຄວາມທຸກຍາກ ຄືເຮົາມີຄວາມທຸກ, ມີຄວາມເມດຕາກະລຸນາກັນ ຊ່ວຍເຫຼືອກັນ.

- ຕ້ອງມີການຈັດຕັ້ງ, ການເຄື່ອນໄຫວ ດ້ານມະນຸດສະທຳ ຢູ່ໃນແຕ່ລະບ້ານ, ຕໍ່ຜູ້ມີກິນມີຢູ່ ຕ້ອງມີວິທີການເບິ່ງແຍງ, ຕໍ່ຜູ້ບໍ່ມີທີ່ນອນສ້າງສາຕ້ອງໄດ້ຮັບການແກ້ໄຂ, ຕໍ່ການເຈັບໄຂ້ ຕ້ອງມີການປິ່ນປົວ, ຕໍ່ຄອບຄົວ ແລະ ບຸກຄົນ ມີພົນງານ ຕ້ອງໄດ້ຮັບກການເບິ່ງແຍງ, ຍ້ອງຍໍ ... ນະໂຍບາຍທຸກຢ່າງຕ້ອງຖືກປະຕິບັດ.

- ຕ້ອງເອົາໃຈໃສ່ ເບິ່ງແຍງດູແລລູກກຳພ້າ, ກຳພອຍ, ຜູ້ທີ່ພິການ ... ຕ້ອງປະຕິບັດນະໂຍບາຍມະນຸດສະທຳ ຢູ່ໃນບ້ານ.

4. <u>ສາມັກຄີຮ່ວມກັນກໍ່ສ້າງຊີວິດໃໝ່, ຮັກສາ ແລະ ເສີມຂະຫຍາຍເອກະລັກ, ສິ່ງແວດລ້ອມ.</u>

- ມີແຜນການສ້າງຊີວິດໃໝ່ ຢູ່ໃນແຕ່ລະບ້ານ ບ້ານເຮືອນໃຫ້ສະອາດ, ງົດງາມ, ຈັດວາງລ້ອມເຮືອນຢູ່ຢ່າງຖືກຕ້ອງ, ມີສວນປູກຕົ້ນໄມ້, ປູກດອກໄມ້ທີ່ງົດງາມ.

- ມີແຜນການເສີມສ້າງຄອບຄົວ ວັດທະນະທຳໃໝ່ ຊຶ່ງມີການຕັ້ງພູນລຳເນົາຄົງທີ່, ອາຊີບໝັ້ນທ່ຽງ, ການຜະລິດ ມີທ່າຂະຫຍາຍຕົວ, ການພົວພັນ ຜົວ-ເມຍ, ລູກເຕົ້າ ມີບັນຍາກາດ ສ້າງສັນ, ມີປະຊາທິປະໄຕ.

- ມີລະດັບສະຕິ, ລະບຽບກົດໝາຍ, ມີລະດັບວັດທະນະທຳ, ມີວິຊາຊີບ ຫຼາຍປະການ ທີ່ໝັ້ນທ່ຽງ.

- ການບຸ່ງກີ ກີກຕາມຮີດຄອງປະເພນີ, ກີກກັບ ເອກະລັກເຄົາລົບທຳບຽນ, ມີຄວາມເຄົາລົບຊຶ່ງກັນ ແລະ ກັນ.

- ການພົວພັນ ພີ່ນ້ອງຊາວບ້ານດີ, ບໍ່ມີເຮືອນໃດ ມີຜູ້ກໍ່ຄວາມນ້າງເພ, ໃນ ບ້ານມີບ່ອນຊຸມ, ບ່ອນພັກຜ່ອນຢ້ອນອາລົມຈົບງານ.

5. <u>ສາມັກຄີເບິ່ງແຍງພາລະກິດ ແຫ່ງການສຶກສາ, ວັດທະນະທຳ ແລະ ສາທາລະນະສຸກ</u>.

- ຈັດຕັ້ງຂະບວນຮ່ຳຮຽນ ປະຊາສຶກສາລົບລ້າງຄວາມບໍ່ຮູ້ໜັງສືທົ່ວປວງຊົນ, ມີລະບົບຮ່ຳຮຽນ ຍົກລະດັບຂື້ນຢ່າງບໍ່ຢຸດຢັ້ງ. ພ້ອມນັ້ນມີຂະບວນຮ່ຳຮຽນວິຊາຊີບ.

- ສ້າງໂຮງຮຽນປະກົນບໍລິບູນ, ມັດທະຍົມຄົບຊຸດ, ມີຂະບວນເດັກນ້ອຍ ເຍົາວະຊົນ ເຂົ້າຮ່ຳຮຽນ ຈຳນວນຫຼາຍ, ມີການຊ່ວຍເຫຼືອ ຊຸກຍູ້ຜູ້ຮ່ຳຮຽນ, ຮ່ຳຮຽນເກັ່ງ.

- ການຈັດຕັ້ງ ສະໂມສອນ ເຄື່ອນໄຫວ ວັດທະນະທຳ, ກິລາກາຍຍະກຳ, ຮ້ອງລຳທຳເພງ, ສະແດງຟ້ອນລຳ ຕາມປະເພນີ.

- ມີໂຮງໝໍ, ມີຢຸກຢາປິ່ນປົວ ເບິ່ງແຍງດູແລ ສຸຂະພາບ ຂອງປະຊາຊົນ ຢູ່ເຂດປະຊາຊົນບັດາ ເຜົ່າທ້ອນໂຮມກັນຢູ່ຫຼາຍ.

ເຫັນປີ້, ເປັນເນື້ອໃນລວມ, ຈຸດໝາຍ ທີ່ຊີ້ທິດລວມເພື່ອໃຫ້ແຕ່ລະຄອບຄົວ, ແຕ່ລະເຮືອນມີຈຸດໝາຍບ່ອນອີງ ເພື່ອຊຸກຍູ້ຊຶ່ງກັນ, ຮ່ຳຮຽນນຳກັນ ໃນການເຮັດ, ຄະນະແນວບ້ານອີງໃສ່ທິດລວມ ດັ່ງກ່າວ ຫັນເປັນອັນລະອຽດ ແຕ່ລະບ້ານໃຫ້ເໝາະສົມ. ແນວໂຮມບ້ານຕ້ອງກຳແໜ້ນຈຸດໝາຍໜ້າທີ່ເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນ

ຄວາມສະຫງົບສຸກ ຂອງທ້ອງຖິ່ນ ແລະ ສະພາບການຕົວຈິງ ຢູ່ແຕ່ລະບ້ານນຳໃຊ້ ໃຫ້ເໝາະສົມໃສ່ໃນແຕ່ບ່ອນ, ໃນແຕ່ລະປັ້ນ ຕ້ອງສຸມໃສ່ແກ້ໄຂ ອັນໃດ ກ່ອນທີ່ເຄັ່ງຮ້ອນກວ່າ, ການກໍ່ສ້າງ ຕ້ອງເຮັດ ແຕ່ຕ່ຳຫາສູງ, ແຕ່ຕ້ອງເອົາໃຈໃສ່ ທັງ 5 ໜ້າທີ່ ໃນແຕ່ລະບ່ອນ ລະດັບຕ່າງໆກັນ.

IV. <u>ບາງບັນຫາ ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ຂອງແນວລາວສ້າງຊາດ ຂັ້ນຮາກຖານບ້ານ.</u>

1. ການເຄື່ອນໄຫວ ຂອງແນວໂຮມເອກະພາບ ແຫ່ງຊາດລາວ ແມ່ນການເຄື່ອນໄຫວການເມືອງ-ສັງຄົມ ຂອງທັງໝົດ ບັນດາການຈັດຕັ້ງພາຄີ, ໄດ້ຮັບການປະສານສົມທົບ ແລະ ເປັນເອກະພາບຄືນຕາມໂຄງການລວມແນໃສ່ ເຂົ້າຮ່ວມພ້ອມກັບພັກ ແລະ ອຳນາດການປົກຄອງແກ້ໄຂ ບັນດາ ບັນຫາສຳຄັນ ຢູ່ທ້ອງຖິ່ນ ຮາກຖານຕ່າງໆ ກໍຄື ຢູ່ໝູ່ບ້ານ.

2. ແນວລາວສ້າງຊາດ ຢູ່ຮາກຖານ ອີງໃສ່ທິດທາງ, ໜ້າທີ່ ແລະ ແຜນນະໂຍບາຍ ນະຫາສານັກຄີ ທົ່ວປວງຊົນ, ກໍ່ສ້າງ ແລະ ປົກປັກຮັກສາ ປະເທດຊາດ ທີ່ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ທີ III ຂອງແນວລາວສ້າງຊາດ ວາງອອກນັ້ນ. ພ້ອມກັນນັ້ນກໍອີງໃສ່ ສະພາບ ການໜ້າທີ່ຂອງແຕ່ລະທ້ອງຖິ່ນ, ການນຳພາ ຂອງຄະນະພັກ ແລະ ການແນະນຳຂອງຄະນະກຳມະການ ແນວລາວສ້າງຊາດ ຂອງຂັ້ນເທິງ ເພື່ອກຳນົດແຜນນະໂຍບາຍ ວຽກງານລະອຽດຂອງຕົນແຕ່ລະໄລຍະ, ຢ່າງລະອຽດ, ສອດຄ່ອງກັບຄວາມສາມາດຕົວຈິງ ຂອງແຕ່ລະແຫ່ງ ແລະ ແຕ່ລະບ້ານ.

ພ້ອມກັບບັນດາພາຄີປຶກສາ, ພ້ອມກັບປະກອບຄຳຄິດຄຳເຫັນສ້າງເປັນແຜນນະໂຍບາຍ, ເປັນໂຄງການລະອຽດ ຂອງແຕ່ລະກຸ່ມບ້ານ, ບັນດາໝູ່ບ້ານດ ນຳສະເໜີຕໍ່ຄະນະພັກຮາກຖານ ແລະ ໜ່ວຍພັກ, ພ້ອມ

ກັບວາງຈຸດໝາຍລະອຽດອອກ, ວາງໂຄງການເຄື່ອນໄຫວລວມ, ກຳນົດໜ້າທີ່ໃຫ້ແຕ່ລະການຈັດຕັ້ງທີ່ເປັນພາຄີ ຈັດຕັ້ງປະຕິບັດ.

3. ເມື່ອແຜນນະໂຍບາຍ ດັ່ງກ່າວ, ໄດ້ຮັບຄຳເຫັນດີຈາກຄະນະພັກ, ອຳນາດການປົກຄອງແລ້ວ, ຈັດຕັ້ງປະສານສົມທົບໃນບັນດາການຈັດຕັ້ງພາຄີ ຄື : ຜູ້ເຖົ້າຜູ້ແກ່ ແນວໂຮມຊີເອັດຫຍັງ, ການຈັດຕັ້ງຄະນະສະຫະພັນແມ່ຍິງຊີເອັດຫຍັງ ຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນໃນບັ້ນປຸກລະດົມ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຊີເອັດຫຍັງແຕ່ຕາມພາລະບົດບາດ ແລະ ໜ້າທີ່ກົງກັນມອບໝາຍ, ນອກນີ້ແລ້ວ ການຈັດຕັ້ງສານະຄົນຕ່າງໆຊີເອັດຫຍັງ ຯລຯ.

ຫຼັງຈາກນັ້ນຈຶ່ງວາງວິທີການ, ຮູບການ, ເນື້ອໃນຕ່າງໆ ອອກເພື່ອເປັນເອກະພາບກັນໃນການເຄື່ອນໄຫວ ປຸກລະດົມ ທຸກພາກສ່ວນປະຕິບັດ ເນື້ອໃນບັນປຸກລະດົມກໍ່ສ້າງ ບ້ານເມືອງ.

1. ໃນຂະບວນວິວັດຈັດຕັ້ງປະຕິບັດ ບັ້ນປຸກລະດົມຂໍ້ຄວນເອົາໃຈແມ່ນ :

- ໂຄສະນາປຸກລະດົມບັນດາຊົນຄົນ, ບັນດາການຈັດຕັ້ງ ທຸກພາກສ່ວນ, ທຸກຄົນ ໃຫ້ເຂົ້າໃຈແຈ້ງ ແບບແຜນນະໂຍບາຍ, ຂະບວນການເຄື່ອນໄຫວ ໂດຍຄວາມຕື່ນຕົວ, ສະໝັກໃຈ ປະຕິບັດແຜນນະໂຍບາຍຂອງພັກ, ນະໂຍບາຍຂອງລັດ ແລະ ກົດໝາຍບ້ານເມືອງ. ແຕ່ພົນປະໂຫຍດ ທີ່ໄດ້ມາແມ່ນເປັນຂອງປະຊາຊົນ ໝົດທຸກຄົນ.

- ການຈັດຕັ້ງ ແລະ ການປຸກລະດົມ ບັນດາຊົນຄົນ ທຸກຄົນ ພ້ອມກັນ ປະຕິບັດບັນດາ ໜ້າທີ່ການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທຳ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບສຸກ, ເອົາໃຈໃສ່ ຂະຫຍາຍ

ການພະລິດ... ເມື່ອສຳເລັດບັນດາໜ້າທີ່ດັ່ງກ່າວ, ໝົດບ້ານເຮົາຈະຮັ່ງມີ, ຮຸ່ງເຮືອງດາງານ ແມ່ນເປັນພົນໃຫ້ໝົດບ້ານເຮົາ.

- ຜ່ານຕົວຈິງພິຈາລະນາ ແຜນນະໂຍບາຍ, ໂຄງການນະໂຍບາຍ ຫຼື ວ່າການຈັດຕັ້ງປະຕິບັດ ນີ້ໃດ ບັນຫາໃດ ທີ່ເຫັນວ່າ ຍັງບໍ່ທັນສອດຄ່ອງກັບພຶດຕິກຳ ບ້ານເຮົາ, ບໍ່ສອດຄ່ອງກັບຈິດໃຈ ຂອງປະຊາຊົນ, ບໍ່ທັນກົກກັບກົດໝາຍ, ຕ້ອງສ່ອງແສງ ແລະ ສະເໜີນຳຄະນະພັກ, ນຳອຳນາດການປົກຄອງ ປັ່ງນແປງ.

- ຄະນະປະຈຳແນວແຂວງ, ເມືອງ ຕ້ອງເປັນເຈົ້າການ ແລະ ປົນຂຶ້ນເປັນເຈົ້າການ, ກຳແໜ້ນພາລະບົດບາດ, ໜ້າທີ່ ຂອງແນວລາວສ້າງຊາດປັ່ງນໃໝ່ ວຽກງານ ແນວໂຮມ ທາງດ້ານເນື້ອໃນ, ການຈັດຕັ້ງ, ການເຄື່ອນໄຫວ ຈາກຮາກຖານ ບ້ານຫຼື ບ່ອນເຕົ້າໂຮມມວນຊົນຂຶ້ນມາ ຢ່າງບໍ່ຢຸດຢັ້ງ, ຕັ້ງໜ້າເສີມຂະຫຍາຍບົດບາດ ແລະ ມູນເຊື້ອ ຂອງແນວໂຮມເອກະພາບ ໃນພາລະກິດປັ່ງນໃໝ່ ການປະຕິວັດ ປະເທດເຮົານຳເອົາການະ ທີ່ຕັ້ງຂອງແນວໂຮມໃນພາຄີລະບົບການເມືອງ ໃຫ້ສົມກັບມູນເຊື້ອອັນສະຫງ່າງາມ ທີ່ໄດ້ປະກອບສ່ວນ ສ້າງຂຶ້ນມາ./.

*** ***

***

# ສາລະບານ

ໜ້າທີ່


ພາກທີ່ໜຶ່ງ: ບັນດາທັດສະນະພື້ນຖານ ຂອງພັກ-
ປະຊາຊົນປະຕິວັດລາວກ່ຽວກັບມະຫາສາມັກຄີ ............ 1

I. ການເຕົ້າໂຮມຄວາມສາມັກຄີ ແມ່ນມູນເຊື້ອອັນປະເສີດທີ່ສຸດ-
ຂອງຊາດລາວເຮົາ ແມ່ນບົດຮຽນໃຫຍ່ທີ່ສຸດ ຂອງການປະຕິວັດປະເທດເຮົາ ...... 1

II. ແນວໂຮມແຫ່ງຊາດ ເປັນເອກະພາບແມ່ນປັດໃຈໃນບັນດາ -
ປັດໃຈຕັດສິນໄຊຊະນະ ຂອງການປະຕິວັດປະເທດເຮົາ ............ 3

III. ບັນດາແຜນນະໂຍບາຍໃຫຍ່ຂອງພັກ ກ່ຽວກັບມະຫາສາມັກຄີ-
ໃນວົງຄະນາຍາດແຫ່ງຊາດ ແລະ ເພີ່ມທະວີແນວໂຮມເອກະພາບແຫ່ງຊາດ-
ໃນຍຸກສະໄໝພັດທະນາປະເທດຊາດກ້າວຂື້ນສູ່ຄວາມຮັ່ງມີ ແລະ ເຂັ້ມແຂງ.......... 6

ພາກທີ່ສອງ : ບາງບັນຫາລວມກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ-
ຂອງແນວໂຮມ ............ 12

I. ແນວລາວສ້າງຊາດ ກໍຄືແນວໂຮມແຫ່ງຊາດລາວແມ່ນ ການຈັດຕັ້ງສຳພັນທະພາບທາງການເມືອງ ແມ່ນການຈັດຕັ້ງຮ່ວມສຳພັນ ທີ່ສະມັກໃຈ ຂອງອົງຄະນະນະຕາຊົນ ບັນດາ ການຈັດຕັ້ງສັງຄົມ ແລະ ບັນດາ ບຸກຄົນ ທີ່ເປັນຕົວແທນ ຂອງບັນດາຊົນຊັ້ນ ແລະ ຊັ້ນຄົນ ໃນສັງຄົມ ບັນດາເຜົ່າຊົນ ບັນດາສາສະໜາ ແມ່ນພື້ນຖານ ການເມືອງຂອງ ອຳນາດລັດ ປະຊາຊົນ, ຂອງພັກ ປະຊາຊົນປະຕິວັດລາວ ພ້ອມທັງແມ່ນພາຄີ ທັງແມ່ນຜູ້ນຳພາແນວໂຮມແຫ່ງຊາດລາວ ............ 12

II. ທີ່ຕັ້ງບົດບາດແນວໂຮມແຫ່ງຊາດລາວ ຫຼື ແນວລາວສ້າງຊາດ ໃນລະບົບການເມືອງ ແລະ ຊີວິດສັງຄົມ ............ 14

III. ຫຼັກການເຮັດວຽກງານຂອງແນວໂຮມ ............ 17

IV. ແຕ່ລະການພົວພັນລະຫວ່າງແນວໂຮມ ກັບບັນດາພາຄີ -
ໃນລະບົບການເມືອງ ............ 18

V. ໜ້າທີ່ຂອງແນວລາວສ້າງຊາດ ໃນໄລຍະໃໝ່ ............ 23

พາກທີສາມ : ປັບປຸງການຈັດຕັ້ງ, ປ່ຽນໃໝ່ ເນື້ອໃນ ແລະ -
ວິທີການເຄື່ອນໄຫວ ຂອງແນວໂຮມຂັ້ນເມືອງ ແລະ ຮາກຖານບ້ານ ................ 31
I. ທີ່ຕັ້ງ, ບົດບາດ ຄວາມສຳຄັນຂັ້ນເມືອງ ແລະ ຮາກຖານບ້ານ ........... 31
II. ປັບປຸງ ແລະ ເປີດກວ້າງແນວໂຮມຢູ່ຂັ້ນເມືອງ ແລະ ຮາກຖານ ....... 33
III. ໃນພາລະກິດປ່ຽນແປງໃໝ່ ຢ່າງຮອບດ້ານນີ້, ວຽກງານປ່ຽນໃໝ່ ຂອງ ລາບປະຕິວັດ ນັບກໍ່ແມ່ນພາລະກິດ ຂອງທົ່ວປວງຊົນ, ແນວລາວສ້າງຊາດຮາກຖານ ຕ້ອງຕັ້ງໜ້າ "ປຸກລະດົມທົ່ວປວງຊົນ ສາມັກຄີຮ່ວມແຮງ, ສະຕິປັນຍາ, ທຶນຮອນ ເພື່ອສ້າງຊີວິດໃໝ່ຢູ່ຂັ້ນບ້ານ" ........................................................ 46
IV. ບາງບັນຫາກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ ຂອງແນວລາວສ້າງ ຊາດ ຂັ້ນຮາກຖານບ້ານ ........................................................ 53

# ວັດຈະນານຸກົມ

(ເອກະສານໃຊ້ເພື່ອຄົ້ນຄວ້າ)

1. ປື້ມບາງບົດຮຽນຕົ້ນຕໍ ແລະ ບາງບັນຫາກ່ຽວກັບທິດທາງໃໝ່ ຂອງການປະຕິວັດລາວໂດຍປະທານໄກສອນ ພົມວິຫານ, ສຳນັກພິມແຫ່ງຊາດ ປີ 1979.

2. ມະຕິ ກອງປະຊຸມໃຫຍ່ຂອງພັກຄັ້ງ ທີ່ I, II, III, IV, V,VI, ມະຕິກົມການເມືອງ : ມະຕິ 7 (ສະໄໝ ທີ່ II), ມະຕິ 05 (ສະໄໝທີ່ V), ມະຕິ 08 (ສະໄໝທີ່ V), ມະຕິ IV, ມະຕິ IV (ສະໄໝທີ່ VI) ເປັນຕົ້ນ.

3. ລັດຖະທຳມະນູນ ແຫ່ງ ສ.ປ.ປ.ລາວ, ສະບັບ 1991.

4. ປື້ມ : ກອງປະຊຸມໃຫຍ່ແນວລາວສ້າງຊາດ ຄັ້ງທີ່ III ປີ 1996.

5. ແນວຄິດຂອງປະທານໂຮ່ຈິມິນ ກ່ຽວກັບ ມະຫາສາມັກຄີ ແຫ່ງຊາດ ແລະ ແນວໂຮມ ແຫ່ງຊາດ ເອກະພາບ, ໂດຍສຳນັກພິມຈຳໜ່າຍ: "ການເມືອງ ແຫ່ງຊາດ", ຮ່າໂນ້ຍ, ປີ 1996, ພາສາຫວຽດນາມ.

<u>ລາຍຊື່ຜູ້ກວດແກ້ປື້ມຫົວນີ້ :</u>

- ດຣ. ສິນສີ ໄຊຫວ່າງຈັ້ງ
- ທ່ານ ພັນນະລີ ສີງຄຳວົງສາ
- ທ່ານ ຄຳຮຸ່ງ ສຸລີພົນ
- ທ່ານ ບຸນສຸກ ວົງວັນນະໄຊ

# ແກ້ຄຳຜິດ

| ໜ້າ | ແຖວເທິງ ລົງລຸ່ມ | ຄຳຜິດ | ຄຳຖືກ |
|---|---|---|---|
| I | 3 | ກົດໝ່າຍຂອງລັດ | ກົດໝາຍຂອງລັດ |
| | 13 | 2 ພາກໃຫ່ຍຄືພາກທີ 1 | 2 ເຫຼັ້ມ ຄື ເຫຼັ້ມທີ 1 ແມ່ນ |
| | 10 | ໄດ້ໃຫ້ສິດຕິດແທດ | ໄດ້ໃກ້ສິດຕິດແທດ |
| IV | 3 | ຄູ່ມືແນວໂຮມ, ທຸກຂັ້ນ | ຄູ່ມືແນວໂຮມທຸກຂັ້ນ |
| | 9 | ໃນໃນໂອກາດ | ນະໃນໂອກາດ |
| | 12 | ປະທານແນວລາວສ້າງຊາດ | ປະທານສູນກາງແນວລາວສ້າງຊາດ |
| 1 | 14 | ປຶ້ມຈະນາ | ປຶ້ມຫົວນີ້ຈະນາ |
| | 5 | ການກຳເນດການຄືງ | ການກຳເນີດ, ການຄືງ |
| | 9 | ແມ່ນຕາຍ "ຈິດໃຈ | ແມ່ນຕາຍ "ຈິດໃຈ |
| | 11 | ໃໝ່ນີ້ | ສະໄໝນີ້ |
| 3 | 19 | ຊົນຊັ້ນ ໃນຊັ້ນຄືນ | ຊົນຊັ້ນ, ຊັ້ນຄືນ |
| | 16 | ປະລາໄຊ ບິດຣຽນ | ປະລາໄຊ. ບິດຣຽນ |
| | 24 | ສາມັກຄີມະຫາສາມັກຄີ ສຳເລັດຜົນ. | ສະມັກຄີ, ມະຫາສາມັກຄີ, ສຳເລັດຜົນ, |
| | 25 | ແມ່ນບັດໃຈໃນບັນດາ | ແມ່ນບັດໃຈໜຶ່ງໃນບັນ |
| 4 | 2 | ແລະ ເພື່ອປະຊາຊົນ , | ແລະ ເພື່ອປະຊາຊົນ " |
| 5 | 16 | ສະຫວັນນະເຂດ ຢູ່ເຂດ | ສະຫວັນນະເຂດ, ຢູ່ເຂດ |
| | 17 | ພາກສ່ວນໜຶ່ງ ເປັນອັນວ່າ | ພາກສ່ວນໜຶ່ງ. ເປັນຮັບ |
| | 19 | ທົ່ວປະເທດຊື່ສຽງ | ທົ່ວປະເທດ, ຊື່ສຽງ |
| | 1 | ນັບມື້ສູງເດັ່ນຂຶ້ນບັນດາ | ນັບມື້ສູງເດັ່ນຂຶ້ນ. ບັນ |
| 6 | 18 | ສິນສິນ | ສັບສິນ |
| 8 | 14 | ແມ່ນສັດຈະທຳພາລະກິດ | ແມ່ນສັດຈະທຳ, ພາວະ |
| 11 | 3 | ນານພົວພັນກັບຕ່າ | ການພົວພັນກັບຕ່າງ |

| ໜ້າ | ແຖວເທິງລົງລຸ່ມ | ຄຳຜິດ | ຄຳຖືກ |
|---|---|---|---|
| 11 | 16 | ປະດິດຄິດສາງຕື່ມຫຼາຍ | ປະດິດຄິດສ້າງຫຼາຍ |
| 12 | 19 | ປະຕິວັດລາວພັກທັງແມ່ນ | ປະຕິວັດລາວ, ພັກທັງ |
| 13 | 5 | ພືນຖານ | ພື້ນຖານ |
| | 13 | ໃຫ້ມັນແຕກສະຫຼາຍສັດ ຕູຂອງຕົນ | ໃຫ້ສັດຕູຂອງຕົນ ແຕກສະຫຼາຍ |
| | 18 | ປັນຍາ | ປັນຍາຊົນ |
| | 19 | ແກນສານ | ແກ່ນສານ |
| 15 | 15 | ພາຍໃນ ແລະ ໃນໂລກ | ພາຍໃນ ແລະ ຕໍ່ຊາວໂລກ |
| 17 | 5 | ທັງເຊື່ອ | ທັງເປັນການເຊີດ |
| 19 | 2 | ສະໜອງຕອບ | ຕອບສະໜອງ |
| | 7 | ຕະຫຼອ | ຕະຫຼອດ |
| | 8 | ດມາ | ມາ |
| | 22 | ບັນນາພະຄີ | ບັນດາພາຄີ |
| 30 | 11 | ແລ້ວລະຫວ່າງ | ລະຫວ່າງ |
| | 11 | ແນວແລະ | ແນວໂຮມແລະ |
| | 16 | ບັນດາອົງການຄວບຄຸມ | ບັນດາອົງການແລະຄວບຄຸມ |
| 22 | 6 | ແນວລາວສ້າງຊາດບັນດາ | ແນວລາວສ້າງຊາດກັບບັນດາ |
| | 12 | ຄະນະປະຈຳ .......... | ຄະນະປະຈຳ .......... |
| | 13 | ບັນດາການຈັດຕັ້ງ | ບັນດາ ການຈັດຕັ້ງ |
| 23 | 3 | ຄະນະກຳມະການ ແນວ | ຄະນະກຳມະການແນວໃນຂັ້ນດຽວ |
| 23 | | ສາດ | ສາ |

| ໜ້າ | ແຖວເທິງລົງລຸ່ມ | ຄຳຜິດ | ຄຳຖືກ |
|---|---|---|---|
| | 11 | ສາມັກຄີມະຫາສາມັກຄີ | ສາມັກຄີ, ມະຫາສາມັກຄີ |
| 23 | 12 | ກຸ່ມກ້ອນມະຫາສາມັກຄີ | ກຸ່ມກ້ອນດ ມະຫາສາມັກຄີ |
| | 15 | ຊົນເຜົ່າຕ່າງໆແກ້ໄຂ | ຊົນເຜົ່າຕ່າງໆ, ແກ້ໄຂການ |
| | 20 | ເຂົ້າໃນພາລະກິດ | ເຂົ້າໃນພະລະກິດ |
| 25 | 13 | ຕັ້ງແລະສະພາໄກ່ເກັ່ຍ | ຕັ້ງສານແລະສະພາໄກ່ເກັ່ຍ |
| | 15 | ກໍນຳເອົາໂຄສະນາ | ກໍໂຄສະນາເຜີຍແຜ່ |
| 26 | 5 | ເຂົາໃນພາລະກິດ | ເຂົ້າໃນພາລະກິດ |
| 27 | 14 | ປູ່ຊະນີອະສະຖານ | ປູ່ຊະນີຍະສະຖານ |
| 29 | 16 | ປາດສະຈາກ | ປາສະຈາກ |
| | 17 | ຫຼັງຕ່າງໆຮັກສາ | ຫຼັງຕ່າງໆ, ຮັກສາ |
| | 19 | ອາດສາມາດ,ທາງດ້ານ | ອາດສາມາດທາງດ້ານ |
| 30 | 2 | ສ່ວນນ້ອຍຄື:ການປະຕິບັດ | ຊົນເຜົ່າສ່ວນນ້ອຍ,ການປະຕິບັດ |
| | | ສິດເສລີພາບຕໍ່ຜູ້ | ສິດເສລີພາບຕໍ່ຜູ້ທຸກຍາກຕ້ອງ |
| | 10 | ບັບມີ້ລົ້ນບ້ານມີປິດບາດ | ບັບມີ້ລົ້ນບ້ານບ່ນມີປິດບາດ |
| 31 | 15 | ເມືອງໃຫຍ່ນັ້ນທັດຈາກ | ເມືອງໃຫຍ່ນັ້ນ,ທັດຈາກ |
| | 11-12 | ການກະທົບພື້ນຖານ | ການກະທົບຂອງພື້ນຖານ |
| | 16 | ໃຫ້ມີ | ໃຫ້ດີ |
| 33 | 4 | ການເຄື່ອນໄຫວ.ໃນຕົວຈິງ | ການເຄື່ອນໄຫວ.ໃນຕົວຈິງເມືອງ |
| | 7 | ການເຕົ້າກຸ່ມກ້ອນ | ການເຕົ້າໂຮມກຸ່ມກ້ອນ |
| 34 | 22 | ຄະນພັກ | ຄະນະພັກ |
| 35 | 4 | ແນວລາວຄົບຄະນະ | ແນວລາວສ້າງຊາດຄົບຄະນະ |
| | 6 | 6 ເດືອນ ເທື່ອ | 6 ເດືອນ ໜຶ່ງເທື່ອ ເພື່ອ |
| | 19 | ຕົວຈິ | ຕົວຈິງ |

| ໜ້າ | ແຖວເທິງລົງລຸ່ມ | ຄຳຜິດ | ຄຳຖືກ |
|---|---|---|---|
| 36 | 2 | ທຸດຂົງເຂດ | ທຸກຂົງເຂດ |
| | 11 | ແຮງສ້າງລວມ | ແຮງສັງລວມ |
| | 15 | ແຕ່ລະໄວເພື່ອ | ແຕ່ລະໄລຍະເພື່ອ |
| 37 | 23 | ເອກະພາບປຳກັນກ່ຽວກັບ | ເອກະພາບປຳກັນກັບຄະນະປະຈຳ, |
| | 7 | ປະຊາຊົນລາວ ໃນບັດາ | ປະຊາຊົນລາວ, ໃນບັນດາ |
| | 6 | ມະຕິຂອງພັກ ໃນລັດທຸ | ກົດໝາຍມະຕິຂອງພັກ, ໃນລັດ |
| 38 | 16 | ໃນຕົວຈິງ ຫຼືບໍ່ | ໃນຕົວຈິງຫຼືບໍ່ |
| | 5 | ຕັດ | ດັດ |
| | 6 | ຂອງສັງຄົທ | ຂອງສັງຄົມ |
| | 10 | ຕັດສົມຊ່ວຍກົດໝາຍ | ດັດສົມຊ່ວຍກົດໝາຍ |
| | 10 | ຕັດສົມຊ່ວຍກົດໝາຍ | ດັດສົມຊ່ວຍກົດໝາຍ |
| 39 | | ຫາລືລືກັນ | ຫາລືກັນ |
| | 3 | ເພື່ອລະດົມປະຊາຊົນ | ເພື່ອລະດົມປະຊາຊົນ, |
| | 9 | ຂັ້ນລູງກາງ | ຂັ້ນສູນກາງ, |
| | 10 | ຂັ້ນແຂວງ ກຳແພງ | ຂັ້ນແຂວງ, ກຳແພງ |
| 40 | 19 | ຈັດຕັງປະຕິບັດ | ຈັດຕັ້ງປະຕິບັດ |
| | 4 | ການຈັດຕັງ | ການຈັດຕັ້ງ |
| 41 | | ຂອງບ້ານເມືອງ,ແນວລາວ | ຂອງບ້ານເມືອງ,ແນວລາວສ້າງຊາດ |
| | 13 | ໃຫວເຕົາໂຮມ | ໃຫວເຕົ້າໂຮມ |
| | 14 | ທີບໍ່ຈຳເປັນ | ບໍ່ຈຳເປັນປະກອບບັນດາລະ |
| 4 | 18 | ບາງບ້ານ | ນາຍບ້ານ |
| | 19 | ອິດທິພົນກຳລັງ | ອິດທິ ກຳລັງ |

24/ขาย
ห้ามจำหน่าย

| ໜ້າ | ແຖວເທິງລົງລຸ່ມ | ຄຳຜິດ | ຄຳຖືກ |
|---|---|---|---|
| 42 | 21 | ສາມັກຄີສາກຸ່ມກ້ອນ | ສາມັກຄີກຸ່ມກ້ອນມະຫາສາມັກຄີ |
| 43 | 11 | ດຳລົງຊີຜິດ | ດຳລົງຊີວິດ |
| 44 | 9 | ດາກຳນົດ | ດາຂົ້ກຳນົດ |
| 45 | 4 | ພັກຄັ້ງທີ່....(ສະໄໝທີ່ III) | ພັກ (ສະໄໝທີ່ III) ໄດ້ກຳນົດ |
| 47 | 6 | ທົ່ວປວງຊົນ | ທົ່ວປວງຊົນ, |
| | 12 | ຕົວມີ ຊີວິດຊີວາ | ຕົວຈິງ ມີຊີວິດຊີວາ |
| | 21 | ໃນທຸກໝູ່ບ້ານໃຫ້ມີຂະບອນ | ໃນທຸກໝູ່ບ້ານ, ໃຫ້ມີຂະບວນ |
| 48 | 11 | ມະຕິທີ VI | ມະຕິກອງປະຊຸມໃຫຍ່ຄັ້ງທີ່ VI |
| | 16 | ລັດຄຸ້ມຄອງ ແລະ ອຳນວຍ | ລັດຄຸ້ມຄອງແລະປະຊາຊົນເປັນເຈົ້າ, ອຳນວຍຄວາມສະດວກໃຫ້ແນວ |
| 49 | 2 | "ບັນດາທິດນຳ"... | "ບັນດາທິດນຳ...ກວກາ" ກວດກາ |
| 50 | 7 | ລົບລ້າງຄອບຄົວທຸກຍາກ ອຶດຢາກ | ລົບລ້າງຄອບຄົວທຸກຍາກອຶດຢາກ, |
| | 16 | ການປ້ອງດອງກັນຄວາມ | ການປ້ອງກັນຄວາມ |
| 51 | 5 | ການຈັດຕັ້ງ ທີ່ຮັກແພງກັນ | ການຈັດຕັ້ງມະນຸດສະທຳ ທີ່ຮັກແພງ |
| | 11 | ຍ້ອງຍໍ | ຍ້ອງຍໍ, |
| | 12 | .... ນະໂຍບາຍ | ນະໂຍບາຍ |
| | 15 | ຊີວິດໃໝ໋ | ຊີວິດໃໝ່ |
| 52 | 3 | ຖືກກັບເອກະລັກເຄົາ | ຖືກກັບເອກະລັກ,ເຄົາ |
| | 14 | ຊຸກຍູ້ຜູ້ຮ່ຳຮຽນ, ຮ່ຳຮຽນເກົ່າ | ຊຸກຍູ້ຜູ້ທຸກຮ່ຳຮຽນ, ຮ່ຳຮຽນເກົ່າ |

| ໜ້າ | ແຖວເທິງລົງລຸ່ມ | ຄຳຜິດ | ຄຳຖືກ |
|---|---|---|---|
| | 15 | ການັຈດຕັ້ງສະໂມສອນ | ມີການຈັດຕັ້ງສະໂມສອນ |
| | 21 | ຮ່ຳຮຽນນຳກັນໃນການເຮັດ, | ໃນການເຮັດຕົວຈິງ,ຄະນະແນວ |
| 53 | 2 | ໃສ່ໃນແຕ່ບ່ອນ | ໃສ່ໃນແຕ່ລະບ່ອນ, |
| | 4 | ແຕ່ລະບ່ອນລະດັບຕ່າງໆກັນ | ແຕ່ລະບ່ອນຕາມລະດັບຕ່າງໆກັນ |
| | 5 | ຈັດຕັ່ງ | ຈັດຕັ້ງ |
| | 21 | ພ້ອມກັບບັນດາພາຄີ | ແນວໂຮມພ້ອມກັບບັນດາພາຄີ |
| | 21 | ພ້ອມກັບປະກອບຄຳຄິດ | ພ້ອມກັນປະກອບຄຳຄິດ |
| | 23 | ບັນດາໝູ່ບ້ານດ ປາສະເໜີ | ບັນດາໝູ່ບ້ານ, ປາສະເໜີ |
| 54 | 5 | ຈັດຕັ່ງພາຄີ | ຈັດຕັ້ງພາຄີ |
| | | ເນື້ອໃນບັນປຸກລະດົມ | ເນື້ອໃນບັ້ນປຸກລະດົມ |
| 55 | 1 | ໝົດບ້ານເຮົາຈະຮັ່ງ | ໝົດບ້ານຈະຮັ່ງ |
| | 10 | ສ້າງຊາດປຸ່ງນໃໝ່ວຽກງານ | ສ້າງຊາດ,ປຸ່ງນໃໝ່ວຽກງານ ແນວໂຮມ |

– ພິມທີ່ໂຮງພິມສີບຸນເຮືອງ

– ຂະໜາດ 15 x 21 ຊ ຕ ມ

– ຈຳນວນ 5.000 ເຫຼັ້ມ